# ການສົ່ງເສີມທັກສະນຳໃຊ້ກ້າມຊີ້ນນ້ອຍດ້ວຍການພັບເຈ້ຍເປັນຮູບ ຕ່າງໆໂດຍນຳໃຊ້ແບບເຝິກທັກສະສຳລັບເດັກອະນຸບານ3 ໂຮງຮຽນອະນຸບານສາທິດ ວິທະຍາໄລຄູສາລະວັນ ສົກຮຽນ 2021-2022

ນາງ ມະນີວັນ ທຳມະວົງສາ

ວິທະຍານິພົນເປັນສ່ວນຫນຶ່ງຂອງການສຶກສາ
ກິດຈະກຳສ້າງສັນ ( ສາຍອະນຸບານ )
ວິທະຍາໄລຄູສາລະວັນ
ສົກຮຽນ 2022

# ການສົ່ງເສີມທັກສະນຳໃຊ້ກ້າມຊີ້ນນ້ອຍດ້ວຍການພັບເຈ້ຍເປັນຮູບ
# ຕ່າງໆໂດຍນຳໃຊ້ແບບເຝິກທັກສະສຳລັບເດັກອະນຸບານ3
# ໂຮງຮຽນອະນຸບານສາທິດ ວິທະຍາໄລຄູສາລະວັນ
# ສົກຮຽນ 2021-2022

ນາງ ມະນີວັນ ທຳມະວົງສາ

ວິທະຍານິພົນເປັນສ່ວນຫນຶ່ງຂອງການສຶກສາ

ກິດຈະກຳສ້າງສັນ ( ສາຍອະນຸບານ )

ວິທະຍາໄລຄູສາລະວັນ

ສົກຮຽນ 2022

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ
ໝໝໝໝໝໝໝ

ວິທະຍາໄລຄູສາລະວັນ
ຫ້ອງການ ຄູອະນຸບານ-ປະຖົມ

ເລກທີ..026....ຫກ.ອບ-ປຖ

# ໃບຢັ້ງຢືນຮັບຮອງການກວດແກ້ການຄົ້ນຄວ້າວິໄຈ

## ຫົວຂໍ້: ການສົ່ງເສີມທັກສະນຳໃຊ້ກ້າມຊີ້ນນ້ອຍດ້ວຍການພັບເຈ້ຍເປັນຮູບຕ່າງໆ ໂດຍນຳໃຊ້ແບບເຝິກທັກສະສຳລັບເດັກອະນຸບານ3 ໂຮງຮຽນອະນຸບານສາທິດ ວິທະຍາໄລຄູສາລະວັນ

**ຫ້ອງການ:** ຄູອະນຸບານ-ປະຖົມ.

**ຜູ້ຄົ້ນຄວ້າຂຽນບົດວິໄຈ:**

ທ່ານ ນາງ ມະນີວັນ ທຳມະວົງສາ

| ຄະນະກຳມະການກວດແກ້ບົດ | ລາຍເຊັນ |
|---|---|
| ທ່ານ ປອ ສຸພັນ ເທບພະວົງສາ | ........................ |
| ທ່ານ ຊອ ນາງ ຈັນສີມາ ຄັດທະວົງ | ........................ |
| ທ່ານ ປທ ນາງ ຫວານໃຈ ບົວກາສີ | ........................ |

ທີ່ສາລະວັນ, ວັນທີ ....10 APR 2023....

ຈ ຫ້ອງການຄູອະນຸບານ-ປະຖົມ

ແສນຮັກ ບຸນມີ
Sanhack BOUNMY

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ວິທະຍາໄລຄູສາລະວັນ

ສະພາວິທະຍາສາດ

ເລກທີ.66.....ສພ.ວສ

# ໃບຮັບຮອງ

## ອະນຸມັດຜ່ານການຮັບຮອງການຄົ້ນຄວ້າວິໄຈ

## ຫົວຂໍ້:ການສົ່ງເສີມທັກສະນຳໃຊ້ກ້າມຊີ້ນນ້ອຍດ້ວຍການພັບເຈ້ຍເປັນຮູບຕ່າງໆ ໂດຍນຳໃຊ້ແບບເຝິກທັກສະສຳລັບເດັກອະນຸບານ3 ໂຮງຮຽນອະນຸບານສາທິດ ວິທະຍາໄລຄູສາລະວັນ

- **ອີງຕາມ:** ວິໄສທັດຮອດປີ 2030 ຍຸດທະສາດຮອດປີ 2025 ແລະແຜນພັດທະນາຂະແໜງການສຶກສາ ແລະ ກິລາ 5 ປີ.
- **ອີງຕາມ:** ແຜນປັບປຸງຄຸນນະພາບ QA ຂອງກະຊວງສຶກສາທິການ ແລະ ກິລາ, ໃນມາດຕະຖານທີ 10 ຕົວຊີ້ວັດທີ 48-50 ການຄົ້ນຄວ້າວິທະຍາສາດ ແລະ ການບໍລິການ.
- **ອີງຕາມ:** ຂໍ້ຕົກລົງວ່າດ້ວຍພາລະບົດບາດ, ສິດ ແລະ ໜ້າທີ່ ສະພາວິທະຍາສາດຂອງວິທະຍາໄລຄູສາລະວັນ ສະບັບເລກທີ 0640/ວຄວ, ລົງວັນທີ 17 ກຸມພາ 2022.

ຈາກຜົນການກວດສອບ, ກວດກາທາງດ້ານເນື້ອໃນ, ຫຼັກການຂອງບັນດາອະນຸກຳມະການເຫັນວ່າບົດຄົ້ນຄວ້າວິໄຈຫົວຂໍ້: ສຶກສາການວາງແຜນບົດສອນວິຊາຄະນິດສາດຂອງຄູຊັ້ນປະຖົມສຶກສາ ມີຄວາມຖືກຕ້ອງຕາມເນື້ອໃນຫຼັກສູດທີ່ໄດ້ກຳນົດ ແລະ ສະພາວິທະຍາສາດຈຶ່ງໄດ້ຮັບຮອງເອົາປຶ້ມເຫຼັ້ມນີ້ເປັນສ່ວນໜຶ່ງໃນການສິດສອນ ແລະ ຖືກນຳໃຊ້ເຂົ້າໃນກິດຈະກຳການຮຽນ - ການສອນໃນວິທະຍາໄລຄູສາລະວັນ.

| **ຄະນະກຳມະການກວດສອບ** | **ລາຍເຊັນ** |
| --- | --- |
| ທ່ານ ປອ ສຸພັນ ເທບພະວົງສາ | ........................................ |
| ທ່ານ ອຈ ປທ ແສນຮັກ ບຸນມີ | ........................................ |

**ທີ່ສາລະວັນ, ວັນທີ** ...1 1 APR 2023...

**ປະທານສະພາວິທະຍາສາດ**

**ອຈ. ນ ສົມປອງ ແສນທະວີສຸກ**

# ໃບກຽດຕິຄຸນ

ບົດວິໄຈສະບັບນີ້ສຳເລັດສົມບູນໄດ້ໂດຍໄດ້ຮັບຄວາມກະລຸນາຊ່ວຍເຫຼືອ ແລະ ຄຳແນະນຳເປັນຢ່າງດີຈາກຄະນະທີ່ປຶກສາ ປອ ສຸພັນ ເທບພະວົງສາ, ຊອ ນາງ ຈັນສົມາ ຄັດທະວົງ ແລະ ປທ ນາງ ຫວານໃຈ ບົວກາສີ ທີ່ໃຫ້ຄຳແນະນຳຢ່າງໃກ້ຊິດ ແລະ ຊ່ວຍເຫຼືອປັບປຸງເຮັດໃຫ້ບົດວິໄຈສະບັບນີ້ສົມບູນຍິ່ງຂຶ້ນ ເຊິ່ງຜູ້ວິໄຈຂໍສະແດງຄວາມຂອບໃຈມາຍັງບັນດາທ່ານເປັນຢ່າງສູງ.

ນອກຈາກນີ້ແລ້ວຍັງໄດ້ຮັບຄວາມກະລຸນາຈາກທ່ານ ຜູ້ອຳນວຍການ ແລະ ຄະນະອຳນວຍການທີ່ໄດ້ໃຫ້ຄວາມສະດວກໃນການເຮັດວິໄຈໃນຄັ້ງນີ້ໃຫ້ບັນລຸຜົນໄດ້ຢ່າງດີ.

ຂໍສະແດງຄວາມຮູ້ບຸນຄຸນອັນໃຫຍ່ຫຼວງມາຍັງຄະນະອຳນວນການວິທະຍາໄລຄູສາລະວັນທີ່ໄດ້ໃຫ້ການຊ່ວຍເຫຼືອ ແລະ ອຳນວຍຄວາມສະດວກເປັນຢ່າງສູງໃນການວິໄຈໃນຄັ້ງນີ້. ຂໍສະແດງຄວາມຂອບໃຈມາຍັງເພື່ອນຮ່ວມງານຄູ-ອາຈານ ພາຍໃນວິທະຍາໄລຄູສາລະວັນ ທີ່ໄດ້ໃຫ້ການຊ່ວຍເຫຼືອດ້ວຍດີສະເໝີມາ.

**ຫົວຂໍ້ວິໄຈ:** ການສົ່ງເສີມທັກສະນຳໃຊ້ກ້າມຊີ້ນນ້ອຍດ້ວຍການພັບເຈ້ຍເປັນຮູບຕ່າງໆໂດຍນຳໃຊ້ແບບເຝິກທັກສະສຳລັບເດັກອະນຸບານ3 ໂຮງຮຽນອະນຸບານສາທິດ ວິທະຍາໄລຄູສາລະວັນ ສົກຮຽນ 2021-2022

**ຜູ້ວິໄຈ:** ນາງ ມະນີວັນ ທຳມະວົງສາ

**ທີ່ປຶກສາ:** ປອ ສຸພັນ ເທບພະວົງສາ

ຊອ ນາງ ຈັນສີມາ ຄັດທະວົງ

ປທ ນາງ ທອນໃຈ ບົວກາສີ


# ບົດຄັດຫຍໍ້

ໃນການວິໄຈຄັ້ງນີ້ມີຈຸດປະສົງ 1) ເພື່ອສ້າງຊຸດແບບເຝິກທັກສະການພັບເຈ້ຍເປັນຮູບຕ່າງໆໂດຍນຳໃຊ້ແບບເຝິກທັກສະ ສຳລັບເດັກອະນຸບານ 3 ໂຮງຮຽນອະນຸບານສາທິດ ວິທະຍາໄລຄູສາລະວັນ ສົກ 2021 - 2022. 2) ເພື່ອປຽບທຽບຄວາມສາມາດກ່ອນ ແລະ ຫຼັງການໃຊ້ຊຸດແບບເຝິກການພັບເຈ້ຍເປັນຮູບຕ່າງໆໃນການໃຊ້ກ້າມຊີ້ນນ້ອຍໂດຍນຳໃຊ້ແບບເຝິກທັກສະສຳລັບເດັກຂັ້ນອະນຸບານ3 ໂຮງຮຽນອະນຸບານສາທິດ ວິທະຍາໄລຄູສາລະວັນ ສົກ 2021 - 2022.ກຸ່ມຕົວຢ່າງ: ການເຮັດວິໄຈຄັ້ງນີ້ແມ່ນເດັກນັກຮຽນອະນຸບານ3 ໂຮງຮຽນອະນຸບານສາທິດ ຈຳນວນ 15 ຄົນ,ຍິງ 3 ຄົນ ການເລືອກກຸ່ມຕົວຢ່າງແມ່ນເລືອກແບບເຈາະຈົງ (PurposiveSampling) ດ້ວຍການກຳນົດເອົາເດັກນັກຮຽນທີ່ທີຄວາມສາມາດໃນການໃຊ້ກ້າມຊີ້ນນ້ອຍບໍ່ຄ່ອງແຄ້ວ ແລະ ໄດ້ຄະແນນຈາກປະເມີນນ້ອຍເພື່ອມາເປັນກຸ່ມຕົວຢ່າງໃນການວິໄຈ,ເຄື່ອງມືທີ່ໃຊ້ໃນການວິໄຈປະກອບດ້ວຍ: 1) ບົດສອນ 4 ບົດ. ( ການພັບປາ, ການພັບເຮືອ, ການພັບເສື້ອ, ການພັບນົກ ).2) ແບບເຝິກທັກສະການພັບເຈ້ຍເປັນຮູບ ( ການພັບປາ,ການພັບເຮືອ, ການພັບເສື້ອ, ການພັບນົກ )ຈຳນວນ 4 ຊຸດ. ແບບສັງເກດປະເມີນພຶດຕິກຳຂອງເດັກຈຳນວນ 1 ຊຸດ ສະຖິຕິໃນການວິເຄາະຂໍ້ມູນແມ່ນຄ່າສະເລ່ຍ.

**ຜົນການວິໄຈພົບວ່າ:**

1) ການສ້າງຊຸດແບບເຝິກທັກສະການພັບເຈ້ຍເປັນຮູບຕ່າງໆໂດຍນຳໃຊ້ແບບເຝິກທັກສະ ສຳລັບເດັກອະນຸບານ 3ໂຮງຮຽນອະນຸບານສາທິດ ວິທະຍາໄລຄູສາລະວັນ ສົກ 2021 - 2022. ຜູ້ວິໄຈສາມາດສ້າງແຜນການສອນ,ບົດສອນກ່ຽວກັບກິດຈະກຳສ້າງສັນ ການພັບປາ,ການພັບເຮືອ,ການພັບເສື້ອ,ການພັບນົກ ຈຳນວນ 4 ບົດສອນ,ແບບເຝິກທັກສະການສອນການພັບຮູບພາບ ຈຳນວນ 4 ຊຸດ ( ການພັບປາ, ການພັບເຮືອ,ການພັບເສື້ອ,ການພັບນົກ ) ແລະ ແບບປະເມີນພຶດຕິກຳການຮຽນຮູ້ ກ່ອນ ແລະ ຫຼັງ ຈຳນວນ 1 ຊຸດ.

2) ຜົນປຽບທຽບຄວາມສາມາດກ່ອນ ແລະ ຫຼັງການໃຊ້ຊຸດແບບເຝິກທັກສະການພັບເຈ້ຍເປັນຮູບຕ່າງໆໃນການໃຊ້ກ້າມຊີ້ນນ້ອຍ ສຳລັບເດັກອະນຸບານ 3 ໂຮງຮຽນອະນຸບານສາທິດ ວິທະຍາໄລຄູສາລະວັນ ສົກຮຽນ 2021 - 2022 ພົບວ່າ ຄະແນນສະເລ່ຍຫຼັງການໃຊ້ຊຸດແບບເຝິກທັກສະສູງກວ່າຄະແນນສະເລ່ຍກ່ອນໃຊ້ຊຸດແບບເຝິກທັກສະເທົ່າກັບ 6.60 ໂດຍທຽບໃສ່ເກນແມ່ນຢູ່ໃນລະດັບປານກາງ ຄິດເປັນເປີເຊັນເທົ່າກັບ 66% ແລະ ຄະແນນສະເລ່ຍຫຼັງໃຊ້ຊຸດແບບເຝິກທັກສະເທົ່າກັບ 9.20 ໂດຍທຽບໃສ່ເກນແມ່ນຢູ່ໃນລະດັບດີ ຄິດເປັນເປີເຊັນເທົ່າກັບ 92 % .ເຊິ່ງສະແດງໃຫ້ເຫັນວ່າພາຍຫຼັງຈັດກິດກຳໂດຍນຳໃຊ້ຊຸດແບບເຝິກທັກສະການພັບເຈ້ຍເປັນຮູບເດັກມີພັດທະນາການດ້ານກ້າມຊີ້ນນ້ອຍດີຂຶ້ນ

ສາມາດພັດທະນ ແລະມີການເຄື່ອນໄຫວກ້າມຊີ້ນນ້ອຍໄດ້ຄ່ອງແຄ້ວເຊິ່ງເຫັນໄດ້ຈາກຄະແນນສະເລ່ຍທີ່ເພີ່ມຂື້ນຫຼັງໃຊ້ຊຸດແບບເຝິກທັກສະການພັບມີຄະແນນສະເລ່ຍເທົ່າກັບ 2.6 ຄິດເປັນເປີເຊັນເທົ່າກັບ 26 %

# ສາລະບານ

ໜ້າ

ໃບຂອບໃຈ……………………………………………………….…………………ກ
ບົດຄັດຫຍໍ້…………………………………………………………………………ຂ
ສາລະບານ…………………………………..………………………………………..ງ
ບົດທີ 1: ບົດນຳ ....................................................................................................1
1 ຄວາມເປັນມາ ແລະ ຄວາມສຳຄັນຂອງການວິໄຈ…………………………..…………1
2 ຈຸດປະສົງຂອງການວິໄຈ.....................................................................................2
3 ສົມມຸດຖານການວິໄຈ……………………………………………………………..2
4 ຂອບເຂດຂອງການວິໄຈ ……………………….………………...………….....3
5 ນິຍາມສັບສະເພາະ ………………………........……………………………….....3
6 ປະໂຫຍດຄາດວ່າຈະໄດ້ຮັບ …………........……………………….…..……………....4
ບົດທີ 2: ເອກະສານ ແລະ ງານວິໄຈທີ່ກ່ຽວຂ້ອງ..........................................................................5
1: ເອກະສານ ແລະ ງານວິໄຈທີ່ກ່ຽວຂ້ອງກັບທັກສະການໃຊ້ກ້າມຊີ້ນມື...............................................5
1.1 ຄວາມໝາຍຂອງທັກສະການໃຊ້ກ້າມຊີ້ນນ້ອຍ........................................................................5
1.2 ຄວາມສຳຄັນຂອງທັກສະການໃຊ້ກ້າມຊີ້ນນ້ອຍ...................................................................6
1.3 ທັກສະການໃຊ້ກ້າມຊີ້ນນ້ອຍ…………………………..……………………………7
1.4 ພັດທະນາການໃຊ້ກ້າມຊີ້ນນ້ອຍ……………………………………………………...7
1.5 ການສົ່ງເສີມທັກສະການໃຊ້ກ້າມຊີ້ນນ້ອຍ……………………………………………12
1.6 ທິດສະດີທີ່ກ່ຽວຂ້ອງກັບທັກສະການໃຊ້ກ້າມຊີ້ນນ້ອຍ..........................................................16
1.7 ທິດສະດີກຽ່ວກັບພັດທະນາການ ( Brunner) ……………………………………… 24
1.8 ແບບເຝິກ ………………………………………………………….………...26
2: ງານວິໄຈທີ່ກ່ຽວຂ້ອງ……………………………………………………………27
ບົດທີ 3: ວິທີດຳເນີນການວິໄຈ.............................................................................................30
3.1 ວິທີຄັດເລືອກປະຊາກອນ ແລະ ກຸ່ມຕົວຢ່າງ.....................................................................30
3.2 ເກມໃນການແປຄວາມໝາຍ................................................................................ 30
3.3 ເຄື່ອງມືແກ້ບັນຫາ/ວິທີການ ຫຼື ແນວທາງການແກ້ບັນຫາ......................................................31
3.4 ວິທີການເກັບກຳ ແລະ ລວບລວມຂໍ້ມູນ............................................................................ 31
3.5 ວິທີວິເຄາະຂໍ້ມູນ ແລະ ສະຖິຕິທີ່ໃຊ້................................................................................31
ບົດທີ 4: ການວິເຄາະຂໍ້ມູນ ແລະ ຜົນການວິເຄາະຂໍ້ມູນ.............................................................33
4.1. ການແປຜົນ…………………………………………………………………… 33
4.2. ສັນຍາລັກ ແລະ ອັກສອນຫຍໍ້ທີ່ໃຊ້ສື່ຄວາມໝາຍໃນການວິໄຈ……………………………33
4.3 ຜົນການວິເຄາະຂໍ້ມູນ……………………………………………………………….33
ບົດທີ5: ສະຫຼຸບ, ອະພິປາຍຜົນ ແລະ ຂໍ້ສະເໜີແນະ...............................................................35
5.1 ສະຫຼຸບຜົນການວິໄຈ…………………………………………………….....35
5.2 ອະພິປາຍຜົນ……………………………………………………………… 35

5.3 ຂໍ້ສະເໜີແນະ....................................................................................................................36
ເອກະສານອ້າງອີງ……..…………………...……………...……………………….....…………37
ພາກພະນວກ ..........................................................................................................................40
ປະຫວັດຜູ້ວິໄຈ…………………………………………………………………..….........80

# ບົດທີ 1

# ພາກສະເໜີ

## 1.1 ຄວາມເປັນມາ ແລະ ຄວາມສຳຄັນຂອງການວິໄຈ

ກ້າມເນື້ອຂະໜາດນ້ອຍໝາຍຄວາມວ່າ ກ້າມເນື້ອມືທີ່ນຳໃຊ້ໃນການເລືອກແລະການຈັບ, ຊຶ່ງເປັນພື້ນຖານສຳລັບການພັດທະນາຂອງການຂຽນ. ການນຳໃຊ້ປະຈຳວັນ ເຊັ່ນດຽວກັນກັບການສາມາດຊ່ວຍຕົນເອງໃນດ້ານຕ່າງໆຖ້າເດັກນ້ອຍບໍ່ໄດ້ຮັບການພັດທະນາກ້າມເນື້ອຂະໜາດນ້ອຍຢ່າງຖືກຕ້ອງ. ອາດສົ່ງຜົນໃຫ້ເດັກບໍ່ສາມາດເຮັດສິ່ງຕ່າງໆໄດ້. ມີປະສິດທິພາບ ແລະອາດຈະສົ່ງຜົນກະທົບທາງລົບຕໍ່ຄວາມໝັ້ນໃຈໃນຊີວິດຂອງເດັກ, ບຸກຄະລິກກະພາບແລະສັງຄົມ. ຊຶ່ງອາດຈະກາຍເປັນໂປມອັນສົ່ງຜົນກະທົບທາງລົບຕໍ່ການສຶກສາ, ອາຊີບ ແລະ ຊີວິດຂອງເຂົາເຈົ້າໃນອະນາຄົດ.

ການສົ່ງເສີມພັດທະນາກ້າມຊີ້ນນ້ອຍເປັນພັດທະນາການທາງດ້ານຮ່າງກາຍອີກສ່ວນໜຶ່ງທີ່ມີຄວາມສຳຄັນຫຼາຍ ເພາະໝາຍເຖິງການສ້າງເສີມຄວາມສາມາດໃນການຫຍິບ,ຈັບ,ຂີດ,ການປັ້ນແຕ່ງສິ່ງຕ່າງໆ ການສົ່ງເສີມການໃຊ້ກ້າມຊີ້ນມືບໍ່ພຽງແຕ່ພັດທະນາທາງກ້າມຊີ້ນມືໃຫ້ແຂງແຮງເທົ່ານັ້ນແຕ່ຍັງເປັນການສົ່ງເສີມຄວາມສາມາດຂອງການໃຊ້ສາຍຕາກັບກ້າມຊີ້ມືໃຫ້ສຳພັນກັນດ້ວຍ  ການສົ່ງເສີມພັດທະນາການກ້າມຊີ້ນໃຫຍ່ ແລະ ກ້າມຊີ້ນນ້ອຍຕ້ອງພັດທະນາຄວບຄູ່ກັນໄປ ແລະ ເດັກຕ້ອງໄດ້ຮັບການດູແລຢ່າງຕໍ່ເນື່ອງ. ດັ່ງນັ້ນໃນການຈັດກິດຈະກຳແຕ່ລະຄັ້ງຈຶ່ງຕ້ອງຄໍ່ນຶງເຖິງພັດທະນາການເດັກ ແລະ ໃນການຈັດກິດຈະກຳນັ້ນໆກໍ່ບໍ່ໄດ້ໝາຍຄວາມວ່າເດັກທຸກຄົນຈະມີພັດທະນາການເໝືອນກັນໝົດທຸກຄົນ ໂດຍສະເພາະການຈັດການສຶກສາໃນລະດັບເດັກກ່ອນໄວຮຽນທີ່ບໍ່ໄດ້ເນັ້ນໃຫ້ເດັກເກີດການຮຽນຮູ້ເນື້ອໃນເປັນສຳຄັນແຕ່ເປີດໂອກາດໃຫ້ເດັກໄດ້ພັດທະນາເຄື່ອງມື ຫຼື ທັກສະການຮຽນຮູ້ທີ່ເດັກຈະຕ້ອງໃຊ້ໃນອານາຄົດຕໍ່ໄປ.

ການພັດທະນາການຮຽນ-ການສອນໃຫ້ແກ່ເດັກກ່ອນໄວຮຽນແມ່ນມີຄວາມສຳຄັນທີ່ສຸດຕໍ່ກັບເດັກເພື່ອກຽມຄວາມພ້ອມທາງດ້ານພາສາ ແລະ ເພື່ອພັດທະນາການຂະຫຍາຍຕົວຂອງເດັກໃຫ້ມີຄວາມຈະເລີນເຕີບໂຕຕາມໄວເພາະເດັກໃນອາຍຸ 0-6 ປີ ເປັນໄວທີ່ບໍ່ຮູ້ດຽງສາ, ການເວົ້າສັບພາສາລາວຍັງບໍ່ທັນອຸດົມສົມບູນ, ຄວາມຮູ້ກ່ຽວກັບສະພາບແວດລ້ອມອ້ອມຂ້າງຍັງບໍ່ທັນກວ້າງຂວາງຈາກບັນຫາດັ່ງກ່າວຈຶ່ງຈຳເປັນຕ້ອງຈັດກິດຈະກຳການຮຽນ-ການສອນໃຫ້ແກ່ເດັກກ່ອນໄວຮຽນໂດຍການຈັດກິດຈະກຳການສອນແບບສັງເກດແອບເວົ້າ, ຂີດຂຽນຈາກຮູບພາບ, ຂອງຈິງ ແລະ ພາບເຄື່ອນໄຫວໃນສັງຄົມ, ທຳມະຊາດໂດຍປະສົມປະສານກັບການນຳໃຊ້ 4 ທັກສະຂອງການສອນພາສາລາວ: ການຟັງ, ເວົ້າ, ອ່ານ, ຂຽນ ແລະ ສົນທະນາຮ່ວມກັບເດັກດ້ວຍຫຼາຍຮູບແບບ.ເພື່ອເຝິກແອບໃຫ້ເດັກພັດທະນາທາງດ້ານພາສາ,ສິລະປະ,ຄວາມຄິດສ້າງສັນເພື່ອສ້າງເງື່ອນໄຂໃຫ້ເດັກໄດ້ຮຽນຮູ້ສັບພາສາທີ່ງ່າຍແລະເໝາະສົມກັບໄວອາຍຸຂອງເຂົາເຈົ້າໃຫ້ນັບມື້ນັບສົມບູນຂຶ້ນເລື້ອຍໆ.

ສິລະປະສ້າງສັນເປັນສິລະປະກ່ຽວກັບງານສິລະປະສຶກສາຕ່າງໆ ໄດ້ແກ່ການວາດພາບ,ການລະບາຍສີ, ການປັ້ນ, ການພິມສີ, ການພັບ, ການຈີກ, ການຕັດຕິດ ແລະ ການປະດິດເສດວັດສະດຸອື່ນໆ ທີ່ພັດທະນາຂະບວນການສ້າງສັນ ການຮັບຮູ້ກ່ຽວກັບຄວາມງາມ ແລະ ສົ່ງເສີມກະຕຸ້ນໃຫ້ເດັກແຕ່ລະຄົນໄດ້ສະແດງອອກຕາມຄວາມຮູ້ສຶກ ແລະ ຄວາມສາມາດຂອງຕົນເອງ ປູກຝັງລັກສະນະນິໄສມີຄວາມປານິດມີຄວາມລະອຽດອ່ອນ, ເປັນຄົນມີລະບຽບ ມີຄວາມຮັກໃນການປະຕິບັດກິດຈະກຳ.

ກຳ 'ສິລະປະສ້າງສັນ ' ແທນຄຳວ່າ ກິດຈະກຳສິລະປະສຶກສາສຳລັບເດັກອະນຸບານເຊິ່ງສິລະປະສ້າງສັນລວມມີການແຕ້ມຮູບ ແລະລະບາຍສີ, ການຫຼິ້ນສີ,ການປັ້ນ,ການຈີກ,ຕິດ,ຕັດ,ການພັບ,ການສານແລະ ການຮ້ອຍ,ການປະດິດຈາກເສດວັດສະດຸຕ່າງໆ.  ການພັບຄື ການນຳເອົາເຈ້ຍມາພັບເປັນຮູບຊົງຕ່າງໆທີ່ຈະຕ້ອງອາໄສ

ສະມາທິໃນການໃຊ້ປະສາດສຳພັດຫຼາຍໆດ້ານເຊິ່ງສິ່ງຜົນໃຫ້ສະຕິປັນຍາຂອງເດັກພັດທະນາໄດ້ເປັນຢ່າງດີເພາະໃນກິດຈະກຳການພັບເຈ້ຍຕ້ອງອາໄສຂະບວນການ, ການຈື່ຈຳກ່ຽວກັບວິທີການລຽງລຳດັບຂັ້ນຕອນຕໍ່ເນື່ອງຂອງການພັບ ນອກຈາກນີ້ຍັງເປັນກິດຈະກຳທີ່ສົ່ງເສີມຄວາມສາມາດໃນການຄວບຄຸມກ້າມຊີ້ນມື, ຂໍ້ມີສຳຄັນຄືການໃຊ້ສາຍຕາໃຫ້ສຳພັນກັບມືທີ່ສົ່ງຜົນໄປຍັງພັດທະນາການດ້ານການພັບຂອງເດັກໄດ້ຕໍ່ໄປເດັກຍັງໄດ້ຮຽນຮູ້ເລື່ອງຮູບຊົງເລຂາຄະນິດ ແລະ ການຄິດເສດສ່ວນຢ່າງງ່າຍດາຍລວມທັງການຄິດແກ້ບັນຫາໄປໃນຕົວຄວາມສາມາດຂອງເດັກອະນຸບານກັບການພັບເຈ້ຍມີຄວາມສາມາດຕ່າງກັນເຊິ່ງແບ່ງອອກຕາມເກນອາຍຸຄື:

- ອາຍຸ 3-4 ປີ:ຮູ້ຈັກການພັບເຈ້ຍສາມາດເຝິກການພັບຕາມຮອຍເຄິ່ງກາງ4 ສ່ວນໄດ້.
- ອາຍຸ 4-5 ປີ: ເລີ່ມມີຄວາມສາມາດໃຊ້ກ້າມຊີ້ນມືໄດ້ດີຂຶ້ນມີການປະສານງານໄດ້ດີລະຫວ່າງສາຍຕາກັບມື ແລະ ການຄວບຄຸມກ້າມຊີ້ນມື ແລະ ແຂນໄດ້ຄ່ອງແຄ້ວຂຶ້ນຈຶ່ງສາມາດພັບເຈ້ຍຊ້ອນກັນ3ທົບໄດ້ ແລະ ສາມາດໃຊ້ນິ້ວມືຣີດຮອຍພັບເຈ້ຍໃຫ້ລຽບໄດ້ພັບເຈ້ຍເປັນຮູບຮ່າງງ່າຍໆໄດ້ເຊັ່ນ: ພັບປາ, ເສື້ອ ແລະ ອື່ນໆ.
- ອາຍຸ 5-6 ປີ: ເດັກໃນໄວນີ້ເລີ່ມມີຂະບວນການຄິດ ແລະ ການຈື່ຈຳທີ່ດີຂຶ້ນ ແລະ ມີຄວາມອົດທົນຈົດຈໍ່ຢູ່ກັບສິ່ງນັ້ນໄດ້ດົນຂຶ້ນເຮັດໃຫ້ເດັກສາມາດພັບເຈ້ຍທີ່ມີຄວາມສັບຊ້ອນໄດ້.

ກິດຈະກຳສິລະປະສ້າງສັນຊ່ວຍໃຫ້ເດັກໄດ້ປະສົບກັບຄວາມສຳເລັດໃນການເຮັດວຽກ ແລະ ພຶດຕິກຳໄປທາງທີ່ດີຂຶ້ນໄດ້ ເພາະເດັກໄດ້ສະແດງຄວາມສາມາດທີ່ມີຢູ່ໃນຕົວເຂົາອອກມາຢ່າງເຕັມຄວາມສາມາດ ເຊິ່ງເດັກຄິດວ່າຜົນງານຂອງເຂົານັ້ນງາມ ແລະ ດີສຳລັບໂຕເຂົາ ພ້ອມທັງມີຄວາມຊົມຊື່ນ.

ກິດຈະກຳສິລະປະສ້າງສັນແມ່ນກິດຈະກຳໜຶ່ງທີ່ສົ່ງເສີມໃຫ້ເດັກໄດ້ສະແດງອອກເຖິງອິດສະລະພາບ,ຄວາມຄິດສ້າງສັນ ແລະ ຈິນຕະນາການ, ການຈັດກິດຈະກຳກ່ຽວກັບສິລະປະໃຫ້ກັບເດັກອະນຸບານກໍ່ເພື່ອສົ່ງເສີມຄວາມຄິດລິເລີ່ມສ້າງສັນຂອງເດັກ,ບໍ່ແມ່ນເນັ້ນທີ່ຜົນງານເນັ້ນໃນເລື່ອງຜົນງານທີ່ຈົບງາມຂອງເດັກ.ສະນັ້ນ,ຈຶ່ງໃຊ້ຄຳວ່າກິດຈະກຳ.

ສະພາບ ແລະ ບັນຫາການຮຽນທີ່ຜ່ານມາເຫັນວ່າເດັກແຕ່ລະຄົນມີຄວາມສາມາດທີ່ແຕກຕ່າງກັນ ເດັກບາງຄົນມີຄວາມສາມາດ, ບາງຄົນຮັບຮູ້ໄວສະນັ້ນຈຶ່ງເຮັດໃຫ້ກິດຈະກຳການຮຽນ-ການສອນຂອງຄູພົບຄວາມຫຍຸ້ງຍາກເຊັ່ນ: ມີເດັກຈຳນວນໜຶ່ງຍັງບໍ່ເຂົ້າໃຈໃນຂັ້ນຕອນຂອງການພັບ, ບໍ່ຕັ້ງໃຈປະຕິບັດກິດຈະກຳຢອກໃຍກັນເວລາຮຽນ, ບໍ່ຕັ້ງໃຈປະຕິບັດກິດຈະກຳຮ່ວມກັບຄູ ແລະ ບໍ່ມີຄວາມສາມັກຄີໃນການຊ່ວຍເຫຼືອໝູ່ເພື່ອນ.

ດັ່ງນັ້ນຂ້າພະເຈົ້າຈຶ່ງເລືອກເອົາເລື່ອງການພັດທະນາທັກສະການພັບເຈ້ຍເປັນຮູບຕ່າງໆໂດຍໃຊ້ແບບເຝິກປະຕິບັດສຳລັບເດັກຊັ້ນອະນຸບານ3 ໂຮງຮຽນອະນຸບານສາທິດ ວິທະຍາໄລຄູສາລະວັນ ມາເຮັດການວິໄຈໃນຄັ້ງນີ້. ຜູ້ວິໄຈເຫັນຄວາມສຳຄັນຂອງກິດຈະກຳສ້າງສັນ ການພັບເຈ້ຍ ທີ່ສາມາເຮັດໃຫ້ເກີດການຮຽນຮູ້ ແລະ ມີການພັດທະນາທາງສັງຄົມທາງດ້ານການແບ່ງປັນ, ຄວາມສາມັກຄີ ເຊິ່ງການວິໄຈໃນຄັ້ງນີ້ຈະເປັນແນວທາງສຳລັບຄູໃນການຈັດການຮຽນ-ການສອນໃນຊັ້ນອະນຸບານຕໍ່ໆໄປ.

## 2. ຈຸດປະສົງຂອງການວິໄຈ

1) ເພື່ອສ້າງຊຸດແບບເຝິກທັກສະການພັບເຈ້ຍເປັນຮູບຕ່າງໆ ສຳລັບເດັກອະນຸບານ 3 ໂຮງຮຽນອະນຸບານສາທິດ ວິທະຍາໄລຄູສາລະວັນ ສົກ 2021 - 2022.
2) ເພື່ອປຽບທຽບຄວາມສາມາດກ່ອນ ແລະ ຫຼັງການໃຊ້ຊຸດແບບເຝິກທັກສະການພັບເຈ້ຍເປັນຮູບຕ່າງໆໃນການໃຊ້ກ້າມຊີ້ນນ້ອຍ ສຳລັບເດັກອະນຸບານ 3 ໂຮງຮຽນອະນຸບານສາທິດ ວິທະຍາໄລຄູສາລະວັນ ສົກ 2021 - 2022.

## 3. ສົມມຸດຖານການວິໄຈ

- ຜົນສຳເລັດທາງການຮຽນຫຼັງຮຽນສູງກວ່າກ່ອນຮຽນໂດຍໃຊ້ຊຸດແບບເຝິກທັກສະການພັບເຈ້ຍເປັນຮູບ

ຕ່າງໆໃນການໃຊ້ກ້າມຊີ້ນນ້ອຍ ສຳລັບເດັກອະນຸບານ 3 ໂຮງຮຽນອະນຸບານສາທິດ ວິທະຍາໄລຄູສາລະວັນ ສົກ 2021-2022.

## 4. ຂອບເຂດຂອງການວິໄຈ

ຂອບເຂດໃນການສຶກສາວິໄຈໃນຄັ້ງນີ້ແມ່ນສຶກສາກ່ຽວກັບການສົ່ງເສີມທັກສະນຳໃຊ້ກ້າມຊີ້ນນ້ອຍໂດຍຜ່ານກິດຈະກຳສ້າງສັນດ້ວຍການພັບເຈ້ຍເປັນຮູບຕ່າງໆສຳລັບເດັກອະນຸບານ3

**1. ເວລາ**

ໄລຍະເວລາໃນການເຮັດບົດວິໄຈແມ່ນພາກຮຽນທີ2 ໂດຍເລີ່ມແຕ່ເດືອນ ກຸມພາ ຫາເດືອນ ມີນາ ປີ 2022.

**2. ສະຖານທີ່**

ໂຮງຮຽນອະນຸບານສາທິດ ວິທະຍາໄລຄູສາລະວັນ ຕັ້ງຢູ່ບ້ານນາໂດນ ເມືອງສາລະວັນ ແຂວງສາລະວັນ.

**3. ປະຊາກອນ ແລະ ກຸ່ມຕົວຢ່າງ**

**3.1 ປະຊາກອນ**

ປະຊາກອນໃນການສຶກສາໃນຄັ້ງນີ້ແມ່ນເດັກອະນຸບານ 3 ຈຳນວນ 30 ຄົນ, ຍິງ 17 ຄົນ.

**3.2 ກຸ່ມຕົວຢ່າງ**

ເດັກຂັ້ນອະນຸບານ3 ຈຳນວນ 5 ຄົນ, ຍິງ 3 ຄົນ.

**4. ຕົວແປ**

**4.1 ຕົວປ່ຽນຕົ້ນ**

ຊຸດແບບເຝິກທັກສະການພັບເຈ້ຍເປັນຮູບພາບຕ່າງ.

1. ການພັບປາ
2. ການພັບເຮືອ
3. ການພັບເສື້ອ
4. ການພັບນົກ

**4.2 ຕົວປ່ຽນຕາມ**

ຜົນສຳເລັດທາງການຮຽນຫຼັງຮຽນສູງກວ່າກ່ອນຮຽນ ສຳລັບເດັກອະນຸບານ 3

**5. ເນື້ອໃນ**

ການສົ່ງເສີມທັກສະນຳໃຊ້ກ້າມຊີ້ນນ້ອຍ ຜ່ານກິດຈະກຳສ້າງສັນໂດຍເນັ້ນແບບເຝິກທັກສະການພັບເຈ້ຍເປັນຮູບຕ່າງໆ ສຳລັບເດັກອະນຸບານ3

## 5. ນິຍາມສັບສະເພາະ

1) ກ້າມຊີ້ນນ້ອຍແມ່ນກ້າມຊີ້ນຈາກບໍລິເວນຂໍ້ມື, ບໍລິເວນຝາມື, ໄປຫາແຕ່ລະນີ້ວມື. ກ້າມເນື້ອນີ້ຖືກນຳໃຊ້ເພື່ອອອກແຮງໃນຂະນະທີ່ນວດ( kneading ) ຫຼື ປັ້ນ(sculpting), ບີບ, ຖື ການຈັບສໍ pencil, ການການກຳນົດທິດທາງຂອງສໍ pencil ໄດ້. ຫຼື ການຫຼິ້ນເຄື່ອງດົນຕີເຊັ່ນ: ເປຍໂນ, ກີຕ້າ, ທັກສະຈັກດີ ຈະຊ່ວຍໃຫ້ເດັກນ້ອຍຂຽນໄດ້ງາມ ແລະ ເປັນລະບຽບ,ຂຽນໄດ້ດົນ,ສາມາດມັດສາຍເກີບໄດ້.ສາມາດຈັບສິ່ງຂອງ ຊ່ວຍຕົນເອງ ແລະ ອື່ນໆ.
2) ການສົ່ງເສີມໝາຍເຖິງການຊຸກຍູ້ສົ່ງເສີມໃຫ້ຜູ້ຮຽນສົນໃຈໃນການປະຕິບັດກິດຈະກຳຢ່າງຫ້າວຫັນ
3) ທັກສະໝາຍເຖິງຄວາມສາມາດໃນການໃຊ້ກ້າມຊີ້ນນອ້ຍໃນການພັບຮູບພາບ

4) ການພັບໝາຍເຖິງການປ່ຽນແປງສະພາບຂອງວັດຖຸໃຫ້ມີຮູບຮ່າງມິຕິ ແລະ ຮູບຊົງເປັນໄປຕາມຈິນຕະນາການຂອງຜູ້ປະດິດ.
5) ແບບເຝິກໝາຍເຖິງສື່ປະກອບການສອນເພື່ອໃຫ້ຜູ້ຮຽນມີການພັດທະນາກ້າມຊີ້ນນ້ອຍໃຫ້ແຂງແຮງຂຶ້ນ ເຊັ່ນ: ການພັບປາ, ການພັບເຮືອ, ການພັບເສື້ອ, ການພັບນົກ ເປັນຕົ້ນ.

## 6. ປະໂຫຍດທີ່ຄາດວ່າຈະໄດ້ຮັບ

1) ສາມາດຮູ້ໄດ້ເຖິງຈຸດພິເສດຂອງເດັກ.
2) ເດັກສາມາດພັບເຈ້ຍເປັນຮູບຕ່າງໆຄ້າຍຄືວັດຖຸຕົວຈິງໄດ້.
3) ເດັກມີຄວາມຮູ້ຄວາມສາມາດ,ມີສະມາທິ ແລະ ເຝິກປະສາດສຳພັນລະຫວ່າງມືກັບສາຍຕາໃຫ້ປະສານກັນ.
4) ສາມາດນຳໃຊ້ເປັນບົດຮຽນໃຫ້ແກ່ຄົນອື່ນທີ່ມີຄວາມຕ້ອງການຢາກພັດທະນາການສອນຂອງຕົນ,ພັດທະນານັກຮຽນໃຫ້ດີຂຶ້ນກ່ວາເກົ່າ.

# ບົດທີ2

# ເອກະສານ ແລະ ງານວິໄຈທີ່ກ່ຽວຂ້ອງ

ການຄົ້ນຄ້ວາຄັ້ງນີ້ຜູ້ສຶກສານໍາໃຊ້ແບບເຝິກທັກສະເຂົ້າໃນການສອນເລື່ອງ ການສົ່ງເສີມທັກສະນໍາໃຊ້ກ້າມຊີ້ນນ້ອຍດ້ວຍການພັບເຈ້ຍເປັນຮູບຕ່າງໆໂດຍນໍາໃຊ້ແບບເຝິກທັກສະສໍາລັບເດັກອະນຸບານ3 ໂຮງຮຽນອະນຸບານສາທິດ ວິທະຍາໄລຄູສາລະວັນ ສົກຮຽນ 2021-2022 ເຊິ່ງຜູ້ສຶກສາໄດ້ສຶກສາເອກະສານ ແລະ ບົດຄົ້ນຄ້ວາວິໄຈທີ່ກ່ຽວຂ້ອງເຊິ່ງຈະໄດ້ສະເໜີລາຍລະອຽດລຸ່ມນີ້:

## 2.1 ເອກະສານ ແລະ ງານວິໄຈທີ່ກ່ຽວຂ້ອງກັບທັກສະການໃຊ້ກ້າມຊີ້ນມື

### 1.1 ຄວາມໝາຍຂອງທັກສະການໃຊ້ກ້າມຊີ້ນນ້ອຍ

ຄວາມໝາຍຂອງຄວາມສາມາດໃນການໃຊ້ກ້າມຊີ້ນນ້ອຍ ໝາຍເຖິງຄວາມສາມາດໃກການບັງຄັບໃຊ້ກ້າມຊີ້ນ, ມື , ນິ້ວມື ແລະ ປະສາດສໍາພັດລະຫວ່າງມືກັບຕາໃນການເຮັດກິດຈະກໍາຕ່າງໆໄດ້ຢ່າງຄ່ອງແຄ້ວໝັ້ນຄົງ ມີຜູ້ໃຫ້ຄວາມໝາຍຄວາມສາມາດໃນການໃຊ້ກ້າມຊີ້ນນ້ອຍໄວ້ດັ່ງນີ້:

ພັນນີ ຊ.ເຈນຈິດ ( 2558 ) ກ່າວວ່າ ຄວາມສາມາດໃນການບັງຄັບການເຄື່ອນໄຫວຂອງກ້າມຊີ້ນແຂນ, ມື ແລະ ນິ້ວມື ໃນການທໍາກິດຈະກໍາຕ່າງໆໂດຍສໍາພັດກັບການໃຊ້ສາຍຕາ ( Foman and Fleet, 1908 )ເນັ້ນວ່າເປັນຄວາມສາມາດໃນການປັບຕົວທີ່ເດັກມີທັກສະການໃຊ້ມືໃນການປະຕິບັດກິດຈະກໍາໃນຊີວິດປະຈໍາວັນໄດ້ເຊັ່ນການຊ່ວຍຕົວເອງ, ການແຕ່ງຕົວ, ການເຮັດກິດຈະກໍາຕ່າງໆຕະຫຼອດການຫຼິ້ນ.

ນິບເນດຣ ທໍາບອນ ( 2554:73 ) ກວ່າວ່າຄວາມສາມາດໃນການໃຊ້ກ້າມຊີ້ນເປັນຄວາມສາມາດໃນການບັງຄັບກ້າມຊີ້ນນ້ອຍສ່ວນຕ່າງໆໃຫ້ທໍາງານປະສານກັນເຊັ່ນ: ຕາກັບມື, ນິ້ວມື ໄດ້ແກ່ການແຕ້ມຮູບ, ການລາກເສັ້ນ, ການຕັດເຈ້ຍ, ການຮ້ອຍກະຕຸ້ມ ແລະ ການແຕ້ມເສັ້ນຕາມຮອຍເປັນຕົ້ນ.

ຟີນອສົດ ແລະ ຄິດຊິງເຈີ໌ (ເປົາວພາ ເດຊະຄຸບຕ໌.2552; 87 ອ້າງອີງຈາກ Fros &Kissinger.1974) ກລ່າວວ່າ ຄວາມສາມາດໃນການໃຊ້ກລ້າມຊີ້ນມັດນ້ອຍ ເພື່ອດໍາເນີນກິດຈະກໍາຕ່າງໆ ຊຶ່ງຄວາມສໍາພັນລະຫວ່າງກລ້າມຊີ້ນມື ແລະ ຕາກ່ຽວຂ້ອງກັບທັກສະຕ່າງໆໃນການຊ່ວຍເຫລືອຕົນເອງ ເຊັ່ນ ການຕິດກຣະດຸມ, ຮັບໝາກບານທີ່ກຣະເດາະພຽງເທື່ອດຽວ.

ອະທິຖານ ພູນສິນປ໌ສັກດິ໌ກຸນ (2556: 111) ກລ່າວວ່າ ກ້າມຊີ້ນມັດນ້ອຍເປັນກ້າມເນື້ອທີ່ໃຊ້ໃນການທໍາງານລະອຽດທີ່ບໍ່ຕ້ອງອາໄສການເຄື່ອນໄຫວຂອງຮ່າງກາຍ ສ່ວນໃຫຍ່ເປັນການໃຊ້ກ້າມຊີ້ນມັດນ້ອຍທີ່ນິ້ວມືໂດຍຕ້ອງທໍາງານສໍາພັນກັບສາຍຕາດ້ວຍ.

ກຸນຢາ ຕັນຕິຜລາຊີວະ (2551: 101) ກລ່າວວ່າ ຄວາມສາມາດໃນການໃຊ້ກລ້າມຊີ້ນມັດນ້ອຍ ໝາຍເຖິງການສ້າງເສີມຄວາມສາມາດໃນການຫຍິບ, ຈັບ, ຂີດຂຽນ ແລະ ທໍາກິດຈະກໍາທີ່ຕ້ອງໃຊ້ກ້າມຊີ້ນນິ້ວມື, ຝ່າມື ແລະຂໍ້ຕໍ່.

ຈາກການສຶກສາຄວາມຫມາຍຂອງຄວາມສາມາດໃນການໃຊ້ກລ້າມຊີ້ນມັດນ້ອຍ ສະຫລຸບໄດ້ວ່າ ຄວາມສາມາດໃນການໃຊ້ກ້າມຊີ້ນນ້ອຍ ໝາຍເຖິງ ຄວາມສາມາດໃນການບັງຄັບການເຄື່ອນໄຫວຂອງນິ້ວມື ກ້າມຊີ້ນມືໃຫ້ປະສານສໍາພັນກັບສາຍຕາ ແລະ ປະສາດສໍາຜັດໃຫ້ທໍາງານປະສານກັນຢ່າງເປັນຢ່າງດີໃນການເຄື່ອນໄຫວຕ່າງໆເຊັ່ນການເຮັດກິດຈະກໍາວາດພາບ, ລະບາຍສີ, ປັ້ນດິນນໍ້າມັນ, ຮ້ອຍລູກປັດ, ຕອກເຂັມ, ຕໍ່ໄມ້ບລັອກ, ການຮ້ອຍ

ເຊືອກ, ການຕິດກະດຸມ ເປັນຕົ້ນ ແລະ ທັງໝົດເຖິງການຊ່ວຍເຫລືອຕົນເອງໃນການເຮັດກິດຈະກຳປະຈຳວັນໄດ້ຢ່າງຄ່ອງແຄ້ວ ແລະ ມີປະສິດທິພາບ.

**1.2 ຄວາມສຳຄັນຂອງທັກສະການໃຊ້ກ້າມຊີ້ນນ້ອຍ**

ກ້າມຊີ້ນນ້ອຍເປັນອະໄວຍະວະທີ່ສຳຄັນໜຶ່ງໃນການປະກອບກິດຈະກຳປະຈຳວັນມື້ດ້ອຍຕົນເອງ ການໃສ່, ການຖອດກະດຸມ, ຣູດຊິບ,ການແປງແຂ້ວ,ຜູກເຊືອກຣອງຕີນ,ງານສິລະປະທັງໝົດທັງການຂີດຂຽນເດັກໃຊ້ກ້າມຊີ້ນນ້ອຍໄດ້ຄ່ອງແຄ້ວ ຈະຊ່ວຍສົ່ງເສີມພັດທະນາການດ້ານຕ່າງໆ ເສັ້ນດ້ານສະຕິປັນຍາໃຫ້ດີຂຶ້ນເພາະກ້າມຊີ້ນນ້ອຍມີສ່ວນເຮັດໃຫ້ເດັກໄດ້ໃຊ້ມືສຳລວດ ສັງເກດຈາກການສຳຜັດຈັບຕ້ອງໃນທຸກໆກິດຈະກຳ (ອະທິຖານ ພູນສິນ ສັກດີກຸນ. 2556: 111 )ໄດ້ກ່າວວ່າ ການໃຊ້ມືເພື່ອທີ່ຈະຈັບຂອງຫຼິ້ນ ແລະ ຮຽນຮູ້ທັກສະ ໃນການຊ່ວຍເຫຼືອຕົນເອງເຊັ່ນ: ການກິນອາຫານ ແລະ ແຕ່ງຕົວ (ສົມສຣີ ເມກ ໄພບູນຢ໌ວັດນາ.2551: 22; ອ້າງອີງຈາກ ອໍແອຣ໌ເມດ. 2003:Online ) ເປັນການຝຶກຄວາມພ້ອມດ້ານກ້າມຊີ້ນມື, ນິ້ວມືໃຫ້ແຂງແຮງໃຊ້ໄດ້ຢ່າງຄ່ອງແຄ້ວ ແລະ ການຝຶກຄວາມສຳພັນລະຫວ່າງຕາກັບມືຈະຊ່ວຍໃຫ້ເດັກອອກກຳລັງ ແລະ ພ້ອມທີ່ຈະໃຊ້ໃນການຂຽນ (ພູນສຸກບຸນສະຫວັດດີ.2554: 41) ເດັກຈະສາມາດຂຽນສິ່ງໃດກໍ່ຕໍ່ເມື່ອມີຄວາມສາມາດໃນການໃຊ້ກ້າມຊີ້ນມື ແລະ ສາຍຕາປະສານສຳພັນກັນໄດ້ດີ (ເຢົາວພາ ເດຊະຄຸບຕ໌.2558:123) ຊຶ່ງຈະທຳໃຫ້ການຄວບຄຸມ ແລະ ການປະສານງານກັນຂອງກ້າມຊີ້ນມັດນ້ອຍກັບສາຍຕາມີຄວາມສຳພັນກັບພັດທະນາການຂອງການຮັບຮູ້ ແລະ ສະຕິປັນຍາຂອງເດັກກ່ອນໄວຮຽນ (ກຸນຢາ ຕັນຕິຜລາຊີວະ.2552:64 )

ພັດທະນາ ຊັດພິງສ໌ (2551:122) ກ່າວເຖິງຄວາມສາມາດໃນການໃຊ້ກ້າມຊີ້ນນ້ອຍໄວ້ຄື ການພັດທະນາກ້າມຊີ້ນນິ້ວມືໃຫ້ແຂງແຮງ ເດັກກໍພ້ອມທີ່ຈະລາກລີລາມື ເຊິ່ງເປັນພື້ນຖານການຂອງການຂຽນ

ກຽດວັນນະ ອະມາດຢາກຸນ (2559:9) ກ່າວເຖິງຄວາມສຳຄັນຂອງຄວາມສາມາດໃນການໃຊ້ກ້າມຊີ້ນນ້ອຍໄວ້ດັ່ງນີ້ມືຂອງຄົນເຮົາຄືຖານຂອງສະໝອງຜູ້ທີ່ໄດ້ຮັບການບໍລິຫານມືມາຕັ້ງແຕ່ເດັກໆຈະເປັນຜູ້ທີ່ມີສະໝອງດີມີຄວາມຄິດສັບໄວການຝຶກຝົນຄວາມຄ່ອງແຄ້ວວ່ອງໄວຂອງການໃຊ້ກ້າມຊີ້ນນິ້ວມືມີຄວາມສຳພັນຢ່າງຫຼາຍກັບຄວາມຄິດອັນສັບໄວຂໍເດັກໃນທາງກົງກັນຂ້າມເດັກທີ່ບໍ່ມີຄວາມສາມາດເຄື່ອນໄຫວນິ້ວມືໄດ້ຄ່ອງແຄ້ວມັກຈະຄິດຫຍັງຊ້າໄປດ້ວຍ.

ຈະຣັນ ຄຳພາຣັດ (2551:14) ກ່າວເຖິງ ຄວາມສຳຄັນຂອງຄວາມສາມາດໃນການໃຊ້ກ້າມຊີ້ນນ້ອຍໄວ້ດັ່ງນີ້ຄືໃນຂະນະທີ່ເດັກກຳລັງລາກເສັ້ນໃນລັກສະຂີດເຂ່ຍໄປມາຂອງເດັກໄດ້ຈິນຕະນາການທີ່ຂາດຂອບເຂດ ແລະ ເຮັດໃຫ້ກ້າມຊີ້ນປະສາດຕາມີຄວາມສຳພັນກັນ.

ຊັຍຢົງ ພົມໝວງ (2551:101-102) ໄດ້ກ່າວເຖິງຄວາມສຳຄັນຂອງຄວາມສາມາດໃນການໃຊ້ກ້າມຊີ້ນນ້ອຍໄວ້ວ່າບໍ່ໄດ້ໝາຍເຖິງພຽງການຂຽນຕົວອັກສອນຕາມຄວາມໝາຍຂອງຜູ້ໃຫຍ່ແຕ່ການຂຽນຂອງເດັກອະນຸບານພຽງການຂີດຂຽນໄປມາກໍເປັນການຂຽນໃນຂັ້ນເລີ່ມຕົ້ນແລ້ວເຊິ່ງປະໂຫຍດຂອງການຂຽນກໍເພື່ອສື່ຄວາມໝາຍ ແລະ ສະແດງອອກເຖິງຄວາມຄິດເຫັນເປັນສື່ໃນການສະແດງອອກທີ່ຕາເບິ່ງເຫັນໂດຍຕ້ອງໃຊ້ຄວາມສຳພັນລະຫວ່າງຕາກັບມືໃນການບັງຄັບຄວບຄຸມການເຮັດວຽກ.

ຈາກການສຶກສາຄວາມສຳຕຄັນຂອງຄວາມສາມາດໃນການໃຊ້ກ້າມຊີ້ນນ້ອຍສະຫຼູບໄດ້ວ່າ ຄວາມສາມາດໃນການໃຊ້ກ້າມຊີ້ນມັດນ້ອຍມີຄວາມສຳຄັນຢ່າງຍິ່ງຕໍ່ເດັກເປັນຢ່າງຫລາຍ ແລະ ເປັນອະໄວຍະວະທີ່ສຳຄັນໃນການ

ເຄື່ອນໄຫວກ້າມຊີ້ນມື, ນິ້ວມື, ແຂນເຮັດວຽກຮ່ວມກັນກັບກ້າມຊີ້ນຕາໃຫ້ປະສານງານກັນຢ່າງລົງຕົວ ແລະ ເຮັດໃຫ້ເດັກສາມາດເຮັດກິດຈະກຳປະຈຳວັນຕ່າງໆໄດ້ຢ່າງຄ່ອງແຄ້ວການບໍລິຫານກ້າມຊີ້ນມືກັບຕາເລື້ອຍໆຈະສົ່ງຜົນໃຫ້ເກີດການພັດທະນາສະໝອງທີ່ດີຕາມໄປດ້ວຍຕະຫຼອດຈົນການຂີດຂຽນຂອງເດັກຕໍ່ໄປ.

**1.3 ທັກສະການໃຊ້ກ້າມຊີ້ນນ້ອຍ**

ເປັນການບໍລິຫານສ່ວນຂອງຮ່າງກາຍທີ່ນ້ອຍກວ່າເຊັ່ນ ການຈັບຄວ້າສິ່ງຂອງລະຫວ່າງນິ້ວຊີ້ ແລະ ນິ້ວໂປ້ງ ຫຼື ການກວາດນິ້ວຕີນເທິງໜ້າດິນຊາຍ ການຝຶກກ້າມຊີ້ນນ້ອຍເຫຼົ່ານີ້ ບໍ່ແມ່ນແຕ່ເໜັງຕີງນິ້ວມື ຫຼື ນິ້ວຕີນເທົ່ານັ້ນ ຍັງລວມໄປເຖິງການໃຊ້ປາກ ແລະ ລີ້ນໃນການຊີມລົດ ແລະ ຮັບຮູ້ລັກສະນະຮູບຊົງສິ່ງຂອງ ເຊິ່ງເອີ້ນໄດ້ວ່າເປັນການບໍລິຫານກ້າມຊີ້ນນ້ອຍເຊັ່ນກັນ ໂດຍປົກກະຕິແລ້ວທັກສະການເຄື່ອນໄຫວທັງສອງຊະນິດຈະພັດທະນາໄປພ້ອມໆ ກັນເພາະການຫລິ້ນຂອງເດັກໆ ສ່ວນໃຫຍ່ຈະໃຊ້ກ້າມຊີ້ນທັງສອງແບບເຮັດວຽກຮ່ວມກັນນັ້ນເອງໃນເດັກໄວແລກເກີດສະໝອງຍັງບໍ່ເຕີບໂຕພຽງພໍທີ່ຈະຄວບຄຸມການຍ່າງ, ການເຄື່ອນໄຫວຕ່າງໆໂດຍພັດທະນາການຂອງຮ່າງກາຍຈະເລີ່ມຈາກຫົວກ່ອນ ແລະ ໄລ່ລົງໄປທີ່ຕົວຊຶ່ງເຮົາຈະເຫັນວ່າເດັກແລກເກີດນັ້ນຈະສາມາດຄວບຄຸມປາກ, ໜ້າ ແລະ ລີ້ນໄດ້ດີ ຂະນະທີ່ສ່ວນອື່ນໆ ຂອງຮ່າງກາຍຈະຖືກພັດທະນາຂຶ້ນຕາມຫຼັງ ເດັກຈະຮຽນຮູ້ການຕັ້ງຄໍກ່ອນທີ່ຈະຕັ້ງບ່າ ແລະ ຫຼັງໃຫ້ກົງພວກທ່ານຈະສາມາດຄວບຄຸມການເຄື່ອນໄຫວຂອງແຂນກ່ອນຄວບຄຸມການໃຊ້ມື ແລະ ໄລ່ໄປເຖິງການໃຊ້ນິ້ວຢິບຈັບສິ່ງຂອງ ເຊິ່ງຮ່າງກາຍຂອງຄົນເຮົາຊ່ວງໄວເດັກຈະພັດທະນາທັກສະກ້າມຊີ້ນໃຫຍ່ກ່ອນກ້າມຊີ້ນນ້ອຍສະເໝີ ດັ່ງນັ້ນເຮົາຈະເຫັນໄດ້ວ່າເດັກໆຈະສາມາດນຳມືມາປະສານກັນໄດ້ກ່ອນທີ່ຈະຮຽນຮູ້ການສະລັບຂອງຫຼິ້ນຜ່ານມືຈາກຊ້າຍ - ໄປຂວາ ຫຼື ຈາກຂວາ - ໄປຊ້າຍ, ທັກສະທັງສອງຊະນິດຈະເຮັດໄດ້ດີຂຶ້ນເລື້ອຍໆໃນຊ່ວງຫັດຍ່າງ ແລະ ຊຳນານຂຶ້ນເມື່ອຮ່າງກາຍເຕີບໂຕໂດຍພໍ່-ແມ່ສາມາດຊ່ວຍສົ່ງເສີມທັກສະພັດທະນາກ້າມຊີ້ນໄດ້ດ້ວຍຂອງຫຼິ້ນເຊັ່ນ: ເວລາທີ່ເດັກສາມາດນັ່ງໄດ້ໂດຍຕົວເອງແລ້ວໃຫ້ລອງວາງຂອງຫຼິ້ນທີ່ທ່ານມັກພົ້ນຈາກມືເອື້ອມເຖິງ ເຊິ່ງເດັກຈະຕ້ອງຊິງຕົວ ແລະ ລຸກມາຈັບບຂອງຫລິ້ນຂອງທ່ານເອງ ພໍ່-ແມ່ພຽງແຕ່ຄອຍຊ່ວຍເບິ່ງ ແລະ ເປັນກຳລັງໃຈໃຫ້ເດັກໃຊ້ຂາ-ແຂນ ແລະ ນິ້ວມືຂອງທ່ານໃນການເຄື່ອນໄຫວ ແລະ ຫຼັງຈາກທີ່ເດັກໆສາມາດຫຼິ້ນຂອງຫຼິ້ນອັນເກົ່າໄດ້ຢ່າງຊຳນານແລ້ວໃຫ້ຫາຂອງຫຼິ້ນ ຫຼື ກິດຈະກຳທີ່ຊ່ວຍພັດທະນາທັກສະໃໝ່ໆ. ໃຫ້ທ່ານໄດ້ຝຶກຝົນກ້າມຊີ້ນຕ່າງໆແຕ່ຢ່າບັງຄັບໃຫ້ເຮັດກິດຈະກຳ ຫຼື ຫຼິ້ນຂອງຫຼິ້ນທີ່ຍາກເກີດກວ່າໄວ ຫຼື ຄວາມສາມາດຂອງເດັກ ຊຶ່ງພໍ່-ແມ່ສາມາດສຶກສາເລື່ອງຄວາມເໝາະສົມຂອງຫຼິ້ນກັບໄວຂອງເດັກໄດ້ຈາກຄຳແນະນຳຂ້າງກ່ອງ ຫຼື ຫາຄວາມຮູ້ຈາກໜັງສືກ່ຽວກັບເດັກຕ່າງໆ ການທີ່ພໍ່-ແມ່ຄວາມຮູ້ຄວາມເຂົ້າໃຈເລື່ອງການພັດທະນາທັກສະຕ່າງໆຕາມໄວຈະຊ່ວຍໃຫ້ເລືອກຂອງຫຼິ້ນທີ່ສົ່ງເສີມພັດທະນາການທີ່ຈຳເປັນຂອງເດັກໄດ້ຢ່າງຖືກຕ້ອງ.

**1.4 ພັດທະນາການໃຊ້ກ້າມຊີ້ນນ້ອຍ**

ສະມາຄົມເສດຕະສາດແຫ່ງປະເທດໄທ ( 2555:124 ) ກ່າວເຖິງພັດທະນາການຄວາມສາມາດໃນການໃຊ້ກ້າມຊີ້ນນ້ອຍດັ່ງນີ້: ເມື່ອອາຍຸ 3 - 4 ປີຈະເລີ່ມໃຊ້ຊ້ອນປ້ອນອາຫານເອງໄດ້ ເມື່ອອາຍຸ 5 - 6 ປີຈະແກ່ວງຮັບໝາການໄດ້ຄ່ອງແຄ້ວ.

ມະຫາວິທະຍາໄລສຸໂຂທັມທັມມາທິຣາດ (2543:249) ກ່າວເຖິງ ພັດທະນາຄວາມສາມາດໃນການໃຊ້ກ້າມຊີ້ນນ້ອຍຂອງເດັກກ່ອນໄວຮຽນດັ່ງນີ້:

- ເດັກອາຍຸ 3 ປີ ຕໍ່ແທ່ງໄມ້ສີ່ຫຼ່ຽມໄດ້ສູງເຖິງ 9-10 ອັນ ຂຽນວົງມົນໄດ້ແຕ່ຍັງແຕ້ມຮູບຄົນບໍ່ໄດ້
- ເດັກໄວປະມານ 4-6 ປີ ການໃຊ້ມືກໍມີຄວາມລະອຽດຂຶ້ນເດັກໄວນີ້ຈຶ່ງມີຄວາມສາມາດແຕ່ງຕົວເອງໄດ້, ຫວີ

ຜົມ, ແປງແຂ້ວ,ລ້າງໜ້າ, ໃສ່ຮອງຕີນ, ຜູກເຊືອກຮອງຕີນໄດ້ເມື່ອບລາວໄວຊ່ວຍເຮັດວຽກນ້ອຍໆໄດ້ຄວາມສາມາດໃນການຮຽນດີຂຶ້ນ.

- ເດັກອາຍຸ 5 ປີ ຂຽນຮູບສາມຫຼ່ຽມໄດ້
- ເດັກວັຍ 6 ປີ ຂຽນຮູບສີ່ຫຼ່ຽມຂະໜົມປຽກປູນໄດ້ການແຕ້ມຮູບຄົນກໍຕໍ່ເຕີມມີລາຍລະອຽດເພີ່ມຫຼາຍຂຶ້ນຈົນເປັນຮູບຮ່າງຄົນຄົບສົມບູນຂຶ້ນ.

ອະທິຖານ ພົນສິນປ໌ສັກດີກຸນ (2546:111) ກ່າວເຖິງ ພັດທະນາການຄວາມສາມາດໃນການໃຊ້ກ້າມຊີ້ນນ້ອຍຂຶ້ນຢູ່ກັບລະດັບສະຕິປັນຍາວຸຖິພາວະຂອງສະຫມອງທີ່ເປັນໄປຕາມໄວໂດຍພັດທະນາຈາກຕົ້ນແຂນໄປສູ່ບປາຍແຂນ ຫຼື ຈາກຕົ້ນໄປສູ່ປາຍດັ່ງນີ້:

ອາຍຸ 1 ປີ ສາມາດໃຊ້ນິ້ວໂປ້ ແລະ ນິ້ວຊີ້ໄດ້ແຕ່ຍັງບໍ່ຄ່ອງຈຶ່ງກຳສິ່ງຂອງທັງມື ແລະ ລາກເສັ້ນເປັນແນວຕັ້ງຈາກເທິງລົງລຸມຂຶ້ນໆລົງໆໄດ້.

ອາຍຸ 2 ປີ ຂຶ້ນໄປສາມາດຂຽນໂດຍລາກເສັ້ນຕາມແນວນອນສະລັບຊ້າຍ-ຂວາ.

ສຳນັກເລຂາທິການຄະນະກຳມະການແຫ່ງຊາດວ່າດ້ວຍການສຶກສາປະຊາຊາດ ( 2549:23-27 ) ກ່າວເຖິງພັດທະນາຄວາມສາມາດໃນການໃຊ້ກ້າມຊີ້ນນ້ອຍຂອງເດັກປະຖົມໄວໂດຍແບ່ງຕາມຄວາມສາມາດຕາມຊ່ວງໄວແຮກເກີດເຖິງ 6 ປີ ສຳລັບອາຍຸ 2-6 ປີ ດັ່ງນີ້

ອາຍຸ 2-3 ປີ ຮູ້ຈັກແຕ່ງຕົວ ແລະ ເລືອກເສື້ອຜ້າໄດ້ເອງຂຽນຮູບຫົວ ແລະ ຕົວ ຫຼື ອາດສ່ວນອື່ນໆຂອງຮ່າງກາຍສາມາດເຮັດວຽກງ່າຍໆໄດ້.

ອາຍຸ 4-5 ປີ ຂຽນຮູບມີຫົວ, ມີຕົວ, ມີສ່ວນຕ່າງໆຂອງຮູບຮ່າງທີ່ສຳຄັນໆໄດ້ຂຽນຮູບສີ່ຫຼ່ຽມ ຫຼື ສາມຫຼ່ຽມຕາມແບບໄດ້.

ອາຍຸ 6 ປີ ສາມາດຮັບໝາກບານທີ່ໂຍນມາໃຫ້ຈາກໄລຍະໄກ 1 ແມັດ, ຂຽນຮູບຫົວ, ມີຕົວ, ມີຂາ, ແຂນ ແລະ ມືໄດ້.

ຈັນເພັນ ສຣີມັນຕະ ( 2551:70-81 ) ກ່າວເຖິງພັດທະນາການຄວາມສາມາດໃນການໃຊ້ກ້າມຊີ້ນນ້ອຍໄວ້ດັ່ງນີ້:

ອາຍຸ 3 ປີ ສາມາດຫຍິບເສດຜົງໂດຍປິດຕາຂ້າງໜຶ່ງໄດ້ຕັດເຈ້ຍດ້ວຍມີດຕັດໄດ້ວາງບ໊ອກ 3 ອັນເປັນຂົວໄດ້ຄວບຄຸມສໍຂຽນໃຫ້ຢູ່ລະຫວ່າງຫົວໂປ້ມື ແລະ ນິ້ວມືອີກສອງນິ້ວໄດ້, ຂຽນວົງມົນທັບຕາມແບບ ແລະ ອັກສອນໄດ້, ແຕ້ມຮູບໂດຍມີຫົວ ແລະ ອາດມີສ່ວນອື່ນຂອງຮ່າງກາຍອີກສັກສອງຢ່າງ.

ອາຍຸ 4 ປີ ສາມາດປິດຕາຂ້າງດຽວຫຍິບ ແລະ ວາງເສດຜົງ ຫລື ວັດຖຸນ້ອຍໆໄວ້ທີ່ເດີມໄດ້, ຮ້ອຍລູກປັດໄດ້ແຕ່ຍັງຮ້ອຍຮູເຂັມບໍ່ໄດ້,ຕໍ່ບລ໊ອກເປັນທໍຄອຍ 10 ຊັ້ນໄດ້, ຈັດບລ໊ອກ 6 ອັນຮຽງເປັນຂັ້ນໄດໄດ້ 3 ຊັ້ນໄດ້, ກົດຫົວໂປ້ມືລົງເທິງນິ້ວແຕ່ລະນິ້ວໄດ້ຕາມຕົວຢ່າງ, ຈັບສໍໄດ້ຢ່າງເດັກໃຫຍ່ ຂຽນທັບກາກບາດ ແລະ ຂຽນຕົວຫນັງສືທີ່ງ່າຍໆບາງຕົວເຊັ່ນ ງ ບ ປ ໄດ້, ແຕ້ມຮູບຄົນມີຫົວ ແລະ ຂາອາດຈະມີແຂນແລະ ລຳຕົວດ້ວຍ.

ອາຍຸ 5 ປີ ສາມາດຮ້ອຍຮູເຂັມໄດ້ ນຳບລ໊ອກມາລຽນເປັນຂັ້ນໄດ 3-4 ຂັ້ນ, ຂຽນທັບຮູບສີ່ຫຼ່ຽມຈະຕຸລັດ (ຕໍ່ມາຮູບສາມຫຼ່ຽມ) ແລະ ຕົວອັກສອນບາງຕົວໄດ້, ອັກສອນບາງຕົວຂຽນໄດ້ໂດຍບໍ່ຕ້ອງມີການບອກແຕ້ມຮູບຄົນໂດຍເລີ່ມຕົ້ນທີ່ນຳຕົວກ່ອນແລ້ວຈຶ່ງແຕ້ມຫົວ, ແຂນ, ຂາ, ໜ້າຕາ ແລະ ຍັງແຕ້ມເຮືອນພ້ອມຫຼັງຄາມີປະຕູປ່ອງຢ້ຽມ, ປະຕູ, ປ່ອງໄຟໄດ້ດ້ວຍ, ລະບາຍສີພາບ ແລະ ຄວາມລະມັດລະວັງ.

ອາຍຸ 6 ປີ ຂຽນທັບຮູບສີ່ຫຼ່ຽມຈັດຕຸຣັດໄດ້ຖືກຕ້ອງຂຽນທັບຮູບຂັ້ນໄດໄດ້ຮຽບຮ້ອຍພະຍາຍາມຈະແຕ້ມຮູບສີ່ຫຼ່ຽມ, ແຕ້ມຮູບສາມຫຼ່ຽມໄດ້ຖືກຕ້ອງກວ່າເມື່ອອາຍຸ 5 ປີ.

ສຸຊາ ຈັນເອມ (2543:41-42) ກ່າວເຖິງຄວາມສາມາດໃນການໃຊ້ກ້າມຊີ້ນນ້ອຍຕາມຊ່ວງໄວດັ່ງນີ້:

**ອາຍຸ 3 ປີ**

1.ຊ່ວຍຈັດໂຕະອາຫານໄດ້ ບໍ່ເຮັດຖ້ວຍຊາມຕົກ

2. ຕໍ່ທ່ອນໄມ້ສີ່ຫຼ່ຽມ 9 ທ່ອນໄດ້ໃນທາງສູງ

3. ສ້າງຂັ້ນໄດ້ໂດຍໃຊ້ທ່ອນໄມ້ສີ່ຫຼ່ຽມ 3 ທ່ອນໄດ້

4. ແຕ່ງຕົວເອງໄດ້ ຫລື ປົດກະດຸມໄດ້

5. ປົດກະດຸມດ້ານໜ້າເອງໄດ້

6. ຂຽນແບບກາກບາດໄດ້ຂຽນຮູບຄົນຕາມທີ່ສັ່ງໄດ້

**ອາຍຸ 4 ປີ**

1. ກລັດກະດຸມເສື້ອເອງໄດ້

2. ຂຽນກາກບາດໄດ້ເໝືອນ

**ອາຍຸ 5 ປີ**

1.ຜູກເຊືອກເກີບໄດ້

2.ແຕ້ມຮູບສາມຫຼ່ຽມໄດ້ເໝືອນ

3.ຂຽນຕົວອັກສອນ

**ອາຍຸ 6 ປີ**

1.ສາມາດໃຊ້ມື ແລະ ໃຊ້ຕາປະສານກັນດີຂື້ນ

2.ການຈັບສໍໃນການຂຽນເຮັດໄດ້ດີຂຶ້ນ

3.ມັກແຕ້ມຮູບ, ບາຍສີແຕ່ຈະເຮັດໄດ້ບໍ່ຈົບງານປານໃດ່ເພາະຄວາມບໍ່ຢູ່ນິ່ງຂອງເດັກ

4.ເດັກມັກຈະມອງເດັກອື່ນຫລີ້ນໂດຍທີ່ມືຂອງຕົນຍັງເຮັດກິດຈະກໍາຕໍ່ໄປໄດ້ໄກ

5.ຄວາມສາມາດໃຊ້ມື ແລະ ຕາພ້ອມໆກັນຂະນະຍ່າງ ຫລື ນັ່ງຂຽນຫນັງສືຕົວນ້ອຍໆໄດ້

6.ມັກໃຊ້ມືຫຍິບອາຫານໃສ່ປາກຫລາຍກວ່າໃຊ້ບ່ວງ ຫຼື ສ້ອມ.

ດວງເດືອນ ສາດຕົນພັດຣ (2555:117-129) ສະຫລຸບພັດທະນາການດ້ານຄວາມສາມາດໃນການໃຊ້ກ້າມຊີ້ນນ້ອຍຂອງເດັກໄວຕ່າງໆຈາກຂອງກີເຊລໄວ້ດັ່ງນີ້:

**ອາຍຸ 3 ປີ**

1.ຕໍ່ກ້ອນໄມ້ໄດ້ສູງ 9 ກ້ອນ

2.ຕໍ່ກ້ອນໄມ້ເປັນຮູບຂົວໄດ້

3.ຢິບລູກກວາດໃສ່ຂວດໄດ້ 10 ເມັດ ໃນເວລາ 30 ວິນາທີ

4.ຂຽນຮູບວົງມົນຕາມແບບໄດ້

5.ຂຽນຮູບກາກບາດໄດ້

6.ຈັດຮູບຫຼ່ຽມໃສ່ຊ່ອງເຮັດໄດ້ຖືກຕາມແບບ

7.ກິນອາຫານໄດ້ເອງໂດຍບໍ່ເຫ່ຍເປິະເປື້ອນ

8.ຖອກນໍ້າໃສ່ເຫຢືອກໄດ້

9.ໃສ່ຮອງຕີນໄດ້ເອງ

10.ໃສ່ເສື້ອທີ່ບໍ່ມີກະດຸມໄດ້

**ອາຍຸ 4 ປີ**

1.ລຽນແບບວາງກ້ອນໄມ້ເປັນຮູບປະຕູໄດ້

2.ແຕ້ມຮູບຄົນມີສ່ວນສຳຄັນ 2 ສ່ວນ

3.ແຕ້ມຮູບກາກບາດ

4.ພັບເຈ້ຍໄດ້ 3 ທົບ (ຕາມແບບ)

5.ລ້າງໜ້າ, ລ້າງມື ແລະ ແປງແຂ້ວໄດ້ເອງ

6.ໃສ່ເສື້ອຜ້າ ແລະ ຖອດໄດ້ເອງສະເພາະຊັ້ນນອກ

**ອາຍຸ 5 ປີ**

1.ຕໍ່ກ້ອນໄມ້ເຮັດຂັ້ນໄດໄດ້ 2 ຂັ້ນ

2.ແຕ້ມຮູບສາມຫຼ່ຽມເໝືອນແບບ

3.ແຕ່ງຕົວ ແລະ ຖອດເສື້ອຜ້າໄດ້ເອງໂດຍບໍ່ຕ້ອງຊ່ວຍເຫລືອ

**ອາຍຸ 6 ປີ**

1.ຫລິ້ນຕໍ່ກ້ອນໄມ້ເຮັດັ້ນໄດໄດ້ 3 ຂັ້ນ

2.ແຕ້ມຮູບຄົນມີສ່ວນຄໍ, ມື ແລະ ໃສ່ເສື້ອຜ້າ

3.ແຕ່ງຕົວ ແລະ ຜູກເຊືອກເກີບໄດ້

ສຳນັກງານຄະນະກຳມະການການປະຖົມສຶກສາແຫ່ງຊາດ (2546:38-40) ກ່າວເຖິງຄວາມສາມາດໃນການໃຊ້ກ້າມຊີ້ນມືນ້ອຍດັ່ງນີ້:

**ອາຍຸ 4-5 ປີ**

1.ສຽບຄລິບເຈ້ຍລົງເທິງເຈ້ຍ

2.ຈັບສໍດ້ວຍນິ້ວມືໃນທ່າທາງທີ່ຖືກຕ້ອງ

3.ພັບເຈ້ຍຊ້ອນກັນ 3 ທົບໄດ້ ແລະ ໃຊ້ນິ້ວຮີດຕາມຮອຍພັບ

4.ປະກອບພາບຕັດຕໍ່ 6-10 ລົງໃນກອບ

5.ມີຄວາມຄ່ອງແຄ້ວໃນການໃຊ້ມີດຕັດເຈ້ຍເປັນຮູບສີ່ຫຼ່ຽມ ແລະ ສາມຫຼ່ຽມ

6.ປັ້ນດິນນໍ້າມັນເປັນຮູບສັດໆທີ່ຜູ້ອື່ນອາດບໍ່ເຂົ້າໃຈຄວາມຫມາຍ

7.ແຕ້ມຮູບມີຫົວ, ມີຕົວ, ມີສ່ວນຕ່າງໆຂອງຮ່າງກາຍທີ່ສຳຄັນໄດ້

8.ແຕ້ມຮູບສີ່ຫຼ່ຽມ ຫລື ສາມຫຼ່ຽມຕາມແບບໄດ້

9.ສາມາດຂຽນເສັ້ນຕາມຮອຍປະ

10.ແຕ້ມຮູບເຮືອນແບບງ່າຍໆ

11.ລະບາຍສີຮູບຕາມແບບ ແລະ ແບບອິດສະຫຼະໃຫ້ງ່າຍທີ່ມີຂະໜາດໃຫຍ່ພາຍໃນຂອບຮູບ

12.ສາມາດພັບນິ້ວມືຂອງຕົນເອງເອົາຂຶ້ນ ຫຼື ຫົດລົງເທື່ອລະນິ້ວ

13.ສາມາດປັບຂະໜາດຮູບຮ່າງຂອງສິ່ງຂອງຮູ້ວ່ານ້ອຍ ຫຼື ໃຫຍ່

**ອາຍຸ 5-6 ປີ**

1.ສາມາດຮັບໝາກບານທີ່ໂຍນມາຈາກໄລະຍະໄກ 1 ແມັດ

2.ໃຊ້ອຸປະກອນຕ່າງໆປະກອບກັບຫລິ້ນດິນນ້ຳມັນເຊັ່ນແກ້ວ

3.ຫ່າຍນ້ຳ-ຊາຍໃສ່ແກ້ວ ແລະ ຖອກອອກໄດ້

4.ເປີດ ແລະ ໝຸນລູກບິດປະຕູດ້ວຍກະແຈ

5.ເປີດປິດເຂັມກລັດທີ່ມີຂະໜາດໃຫຍ່

6.ຮ້ອຍດ້າຍຂຶ້ນລົງຜ່ານຮູທີ່ເຈາະເຈ້ຍຝຶກການຫຍິບ

7.ຕໍ່ທ່ອນໄມ້ເປັນຮູບຕ່າງໆໄດ້

8.ປະກອບພາບຕັດຕໍ່ຈຳນວນບໍ່ເກີນ 12 ອັນເຂົ້ານຳກັນ (ບໍ່ມີກອບ)

9.ປະກອບຮູບພາບຕັດຕໍ່ 16 - 20 ອັນເຂົ້ານຳກັນລົງໃນກອບ

10.ໃຊ້ມີດຕັດໄດ້ຄ່ອງແຄ້ວຕັດເຈ້ຍຕາມຮອຍເປັນພາບຕ່າງໆໄດ້

11.ປັ້ນດິນນ້ຳມັນເປັນຮູບສິ່ງຂອງທີ່ມີລາຍລະອຽດສື່ຄວາມໝາຍໃຫ້ຜູ້ອື່ນໄດ້ເຂົ້າໃຈ

12.ແຕ້ມຮູບມີຫົວ, ມີຕົວ, ມີຂາ, ແຂນ ແລະ ມືໄດ້

13.ແຕ້ມຮູບສີ່ຫຼ່ຽມຕາມຄຳສັ່ງໂດຍບໍ່ມີແບບ

14.ລອກແບບຕົວພະຍັນຊະນະຂະໜາດສູງ 2-4 ຊັງຕີແມັດ

15.ຂຽນຕົວພະຍັນຊະນະຕາມຮອຍຈ້ຳໄດ້

16.ຂຽນຊື່ຕົວເອງໄດ້

17.ລະບາຍສີຮູບພາບທີ່ມີຄວາມລະອຽດໂດຍຢູ່ໃນຂອບເຂດ

ອຳພັນ ປັນຍາໂຣດນ໌ (2545:323) ກ່າວເຖິງຄວາມສາມາດໃນການໃຊ້ກ້າມຊີ້ນມືມັດນ້ອຍດັ່ງນີ້:

ອາຍຸ 1 ປີ ຈັບສິ່ງຂອງດ້ວຍນິ້ວໂປ້ມື ແລະ ນິ້ວຊີ້ ຈັບສໍກາງແທ່ງດ້ວຍມືອຸ້ງມືແລ້ວຂີດຂຽນໄປມາ.

ອາຍຸ 2 ປີເລືອກຫລິ້ນຂອງຫລິ້ນທີ່ອອກແຮງຫລາຍຂຶ້ນເຊັ່ນ:ຕີ ຫຼື ຕອກດ້ວຍຄ້ອນດຶງອອກ ຫຼື ສວມໃສຂອງສິ່ງທີ່ມີຮູບຮ່າງເໝາະມື ແລະ ມີສີສັນສວຍງາມຕາ.

ອາຍຸ 3 ປີ ກ້າມຊີ້ນແຂງແຮງໃຊ້ມືຫຍິບຈັບອາຫານຕະຫລອດຈົນໃຊ້ບ່ວງຕັກອາຫານເຂົ້າປາກໄດ້ຊ່ວຍຕົວເອງໃນການແຕ່ງກາຍເຊັ່ນ: ຖອດ ແລະ ໃສ່ກະດຸມເສື້ອໄດ້ເອງແຕ່ຍັງຕ້ອງການໃຫ້ຜູ້ໃຫຍ່ຊ່ວຍເຫລືອຢູ່ສາມາດຈັບສໍຂີດຂຽນໄດ້.

ອາຍຸ 4 ປີ ເດັກໄວນີ້ສາມາດຊ່ວຍຕົວເອງໃນການແຕ່ງຕົວ, ລ້າງມື, ແປງແຂ້ວໄດ້ຫລາຍຂຶ້ນ.

ອາຍຸ 5-6 ປີ ເດັກໄວນີ້ສາມາດໃຊ້ມີດຕັດເຈັ້ຍຕາມຮູບໄດ້ດີ, ປັ້ນດິນນ້ຳມັນ, ຍິບຜ້າດ້ວຍເຂັມດວງໃຫຍ່ແຕ້ມຂຽນດ້ວຍສໍ ແລະ ສີນ້ຳໄດ້.

ຈາກທີ່ກ່າວຂ້າງເທິງສະຫລຸບໄດ້ວ່າ ພັດທະນາການຄວາມສາມາດໃນການໃຊ້ກ້າມຊີ້ນມືມັດນ້ອຍຂອງເດັກກ່ອນໄວຮຽນນັ້ນຈະມີພັດທະນາການເປັນໄປຢ່າງມີລະບົບຕາມຊ່ວງອາຍຸຂອງເດັກແຕ່ລະໄວອາຍຸໂດຍຈະພັດທະນາ

ຈາກນິ້ວມືຕົ້ນແຂນໄປສູ່ປາຍແຂນ ຫຼື ຈາກຕົ້ນໄປສູ່ປາຍ ຊຶ່ງຄວາມສາມາດໃນການໃຊ້ກ້າມຊີ້ນນ້ອຍໄປກັບກ້າມຊີ້ນໃຫຍ່ ແລະ ລະດັບສະຕິປັນຍາຕາມວຸດພາວະຂອງສະໝອງທີ່ເປັນໄປຕາມໄວອາຍຸ.

**1.5 ການສົ່ງເສີມທັກສະການການໃຊ້ກ້າມຊີ້ນນ້ອຍ**

ເຍົາວະພາ ເດຊະຄຸບຕ໌ (2542:22) ກ່າວເຖິງ ອຸປະກອນທີ່ສົ່ງເສີມການໃຊ້ກ້າມຊີ້ນມືເດັກໄດ້ແກ່:

1. ອຸປະກອນປະເພດທີ່ສົ່ງເສີມການໃຊ້ກ້າມຊີ້ນມືກັບສາຍຕາ (Eye Hand Coordination) ເຊັ່ນການຮ້ອຍລູກປັດ, ຮ້ອຍເຊືອກ, ຮ້ອຍດອກໄມ້, ຫຍິບກະດຸມ, ຮູດຊິບ, ລຽນສີ, ລຽນໄມ້ໜີບ, ປັກໝຸດ, ຕອກຕະປູເປັນຕົ້ນ.

2.ອຸປະກອນປະເພດໜຶ່ງທີ່ຈະເຮັດຕໍ່ວັດຖຸ (Manipulative) ເຊັ່ນ ການຕໍ່ບລັອກຕ່າງໆໄດ້ແກ່ບລັອກໄມ້, ບລັອກຊຸດ, ຕົວຕໍ່ປາລາສະຕິກຕ່າງໆເປັນຕົ້ນ.

ກຸນຢາ ຕັນຕິລາຊີວະ (2547:103) ກ່າວເຖິງກິດຈະກຳທີ່ພັດທະນາກ້າມຊີ້ນນ້ອຍເພື່ອຝຶກການເຮັດກິດຈະກຳປະສາດສຳພັນລະຫວ່າງຕາກັບມືແລ້ວຍັງເປັນການພັດທະນາທັກສະການໃຊ້ມືເນື່ອງຈາກການກະຕຸ້ນຈາກປາຍກ້າມຊີ້ນນ້ອຍຈະສົ່ງຜົນຕໍ່ໄປຍັງໃຍປະສາດເຮັດໃຫ້ເພີ່ມຄວາມຈະເລີນງອກງາມຂອງເສັ້ນປະສາດເຊິ່ງມີຫຼາຍກິດຈະກຳດັ່ງນີ:

1. ກິດຈະກຳການປັ້ນເປັນງານສົ່ງເສີມການເຮັດກິດຈະກຳຂອງກ້າມເນື້ອຝ່າມື, ຂໍ້ມື ແລະ ນິ້ວມືໃນການບີບ, ບິດ, ດຶງ, ນວດ, ທຸບ ແລະ ປະດິດ ຊຶ່ງສົ່ງຜົນໃຫ້ເພີ່ມຄວາມແຂງແຮງຂອງກ້າມຊີ້ນມືມີທັກສະການໃຊ້ນິ້ວມືໃນການເຮັດກິດຈະກຳໃຫ້ເກີດຄວາມຄ່ອງໃນຕົວຫຼາຍຂຶ້ນ,ວັດຖຸທີ່ນຳມາໃຊ້ໄດ້ແກ່: ດິນໜຽວ, ດິນນ້ຳມັນ, ປະຈຸບັນນິຍົມໃຊ້ແປ້ງ ຫຼື ແປ້ງໂມ (Play Dough)

2. ກິດຈະກຳການຈີກເຈ້ຍ, ການຕັດ, ການປະເຈ້ຍເທິງຮູບພາບໂດຍເນັ້ນຄວາມສາມາດຂອງການຈັບ, ການໃຫ້ຖືກຕ້ອງໂດຍມີຄວາມແຕກຕ່າງກັນດັ່ງນີ້:

**ເດັກອາຍຸ 4-5 ປີ**

1. ແປະເຈ້ຍຕາມຮູບຮອຍໄດ້
2. ຕັດເຈ້ຍຕາມຮອຍໄດ້

**ເດັກອາຍຸ 5-6 ປີ**

1.ໃຊ້ມີດຕັດໄດ້ຄ່ອງແຄ້ວຕັດເຈ້ຍຕາມຮອຍພັບຕ່າງໆໄດ້ປະດິດຕົກແຕ່ງພາຍໃນກອບໄດ້
2.ການແຕ້ມຮູບພາບ ແລະ ລະບາຍສີ

**ເດັກອາຍຸ 4-5 ປີ**

1.ຈັບສໍດ້ວຍທ່າທາງທີ່ຖືກຕ້ອງໄດ້ດີ
2.ຂຽນຮູບຕາມແບບໄດ້
3.ແຕ້ມຮູບສິ່ງທີ່ຄຸ້ນເຄີຍໄດ້
4.ແຕ້ມຮູບຄົນຄົບສ່ວນປະກອບຂອງຮ່າງກາຍໄດ້
5.ແຕ້ມຮູບເຮືອນໄດ້
6.ລະບາຍສີຮູບຕາມແບບ ແລະ ແບບອິດສະຫຼະໄດ້ໃນກອບຮູບ

**ເດັກອາຍຸ 5-6 ປີ**

1.ແຕ້ມຮູບຄົນ ແລະ ເສື້ອຜ້າໃຫ້ລາຍລະອຽດ

2.ຂຽນຮູບຕາມຈິນຕະນາການ ຫຼື ຕາມຄຳສັ່ງໄດ້ໂດຍບໍ່ມີແບບ

3.ລະບາຍສີໄມ້ສວຍງາມໃນພາບທີ່ມີຄວາມລະອຽດຂະໜາດນີ້ໂດຍຢູ່ໃນກອບຮູບ

**1.6 ການພັບ**

ການພັບເຈ້ຍຈຶ່ງເປັນການເຝິກກ້າມຊີ້ນມືບັງຄັບການເຄື່ອນໄຫວຂອງມື ກ່ອນຈະນຳໄປສູ່ການຈັບບິກ, ຈັບສໍ ຂຽນໜັງສື ຫຼື ເຝິກສະມາທິ ເນື່ອງຈາກກິດຈະກຳການພັບເຈ້ຍເປັນກິດຈະກຳທີ່ໃຊ້ມືທັງສອງເບື້ອງຄວບຄູ່ກັບການປະຕິບັດງານຂອງສະໝອງທັງ 2 ເບື້ອງ ເຊິ່ງໃນການເຮັດວຽກຂອງໜ່ວຍຄວບຄຸມເບື້ອງຊ້າຍ ສະໝອງຈະໄດ້ຮັບການພັດທະນາ, ຄວາມຊຳນານຕົວເລກ, ການອ່ານ, ຂະບວນການຄົ້ນຫາເຫດຜົນ, ບັນຍາຍ ແລະ ຄວາມສາມາດທີ່ກ່ຽວກັບວິທະຍາສາດ ສ່ວນການເຮັດວຽກຂອງຫນ່ວຍຄວບຄຸມເບື້ອງຂວາ ສະໝອງຈະໄດ້ຮັບການພັດທະນາຄວາມເຂົ້າໃຈຢ່າງເລິກເຊິ່ງຮູບແບບການເຮັດຮູບ 3 ມິຕິ ຈິນຕະນາການ, ສີລະປະດົນຕີ ( Katrin; &Yuri Shumakov. 2000: Online).

ການພັບເປັນກິດຈະກຳເພີ່ມຄວາມສາມາດໃນການຄວບຄຸມກ້າມຊີ້ນ, ນິ້ວມື, ຂໍ້ມື ແລະ ການໃຊ້ສາຍຕາໃຫ້ສຳພັນກັບມືການພັບແຕ່ລະອາຍຸຕ່າງກັນຊຶ່ງຄວາມສາມາດແຕກຕ່າງຕາມໄວອາຍຸດັ່ງນີ້:

**ເດັກອາຍຸ 4-5 ປີ**

1.ພັບເຈ້ຍຊ້ອນກັນ 3 ທົບໄດ້

2.ໃຊ້ນີ້ວມືຮີດຮອຍພັບໄດ້

3.ພັບເປັນຮູບຮ່າງຢ່າງງ່າຍໄດ້ເຊັ່ນ: ຈະຫຼວດ, ເຮືອ

**ເດັກອາຍຸ 5-6 ປີ**

1.ຮຽນພັບເຈ້ຍເປັນຮູບຕ່າງໆໄດ້

2. ພັບເຈ້ຍເປັນຮູບຮ່າງ

**1.7 ການຝຶກຄວາມຄ່ອງແຄ້ວຂອງກ້າມຊີ້ນນ້ອຍ**

ເປັນກິດຈະກຳທີ່ຝຶກການເຄື່ອນໄຫວພື້ນຖານຂອງກ້າມຊີ້ນນ້ອຍໄດ້ແກ່ການຕໍ່ໄມ້ບລັອກ, ການຮ້ອຍລູກປັດ, ລວມເຖິງກິດຈະກຳທີ່ກ່ຽວຂ້ອງກັບການຢິບຈັບການໃຊ້ນິ້ວເຊັ່ນ:ການຫຼິ້ນເປຍໂນ, ການດີດພິນເປັນຕົ້ນຊຶ່ງກິດຈະກຳຝຶກຄວາມຄ່ອງແບ່ງຕາມອາຍຸດັ່ງນີ້:

**ເດັກນ້ອຍຫລາຍກວ່າອາຍຸ 1-3 ປີ**

1.ຮ້ອຍລູກປັດ

2.ຮູດຊິບ

3.ຕິດກະດຸມ

4.ຕໍ່ໄມ້ບລັອກ

5.ແກະຫໍ່ຂອງທີ່ຜູກເຊືອກຫຼວມ

**ເດັກອນຸບານ 3-6 ປີ**

1.ຕໍ່ໄມ້ບລັອກ

2.ຈັດແຍກສິ່ງຂອງ

3.ຮ້ອຍດ້າຍ

4.ຜູກເຊືອກ

ສຳນັກງານຄະນະກຳມະການການສຶກສາແຫ່ງຊາດ ( 2556:101-107 ) ໄດ້ສະເໜີກິດຈະກຳການຮ້ອຍທີ່ສົ່ງເສີມການໃຊ້ກ້າຊີ້ນນ້ອຍຂອງເດັກປະຖົມໄວ 5-6 ປີ ດັ່ງນີ້:

1.ຮ້ອຍລູກປັດເມັດນ້ອຍດ້ວຍດ້າຍຫຼືເອັນ

2.ຮ້ອຍຫຼອດກາເຟດ້ວຍເຊືອກ

3.ຮ້ອຍເຊືອກເກີບ

4. ຫັດຫຍິບຜ້າ ( ເປັນຮູບພາບເຈາະຮູທີ່ອ້ອມໃຊ້ເສັ້ນໃໝຮ້ອຍຂຶ້ນລົງຕາມຮູທີ່ເຈາະໄວ).

4.1 ຮ້ອຍດອກໄມ້, ໃບໄມ້ໂດຍໃຊ້ກ້ານມະພ້າວ

4.2 ຮ້ອຍໄໝແລ້ວທຳເປັນຜືນ

ອແວຣ໌ເນດ (Awareness. 2003: Online ) ກ່າວເຖິງ ການສົ່ງເສີມຄວາມສາມາດໃນການໃຊ້ກ້າມຊີ້ນນ້ອຍໂດຍຈັດກິດຈະກຳໃຫ້ມີທັງ 2 ມືປະສານສຳພັນກັນໄດ້ແກ່:

1. ການຕົບມືເພື່ອກະຕຸ້ນກ້າມຊີ້ນມື ແລະ ແຂນໂດຍສາມາດໃຊ້ປະກອບເພງ ແລະ ການຫຼິ້ນເກມ.

2. ການຈັດກິດຈະກຳການສຳຜັດໄດ້ແກ່ການໃຊ້ອຸປະກອນມີດແຖໝວດ, ນໍ້າ, ຊາຍ, ເມັດເຂົ້າ ຫຼື ມັກກະໂຣນີ ແລະ ແຕ້ມພາບດ້ວຍນິ້ວມືເຊັ່ນ: ການຕັກຊາຍຂຶ້ນ-ລົງ ການລະເລງສີດ້ວຍນິ້ວມື.

3. ການຈັດກິດຈະກຳທີ່ໃຊ້ມືໄດ້ກຳ ແລະ ຈັບ.

3.1 ຖືທີ່ໃສ່ໄວ້ມືໜຶ່ງໃຊ້ອີກມືໜຶ່ງຫຍິບຂອງໃສ່ ຫຼື ຫຍິບຂອງອອກຈາກທີ່ໃສ່

3.2 ຖືແທ່ງໄວ້ທີ່ມືໜຶ່ງໃຊ້ອີກມືສວມແຫວນ ຫຼື ຖອດແຫວນອອກຈາກແທ່ງ

3.3 ເອົາແຫວນອອກຈາກເສົາ

3.4 ຖືເຈ້ຍດ້ວຍມືໜຶ່ງອີກມືໃຊ້ຂີດຂຽນ

3.5 ຮ້ອຍຂອງຫລິ້ນໂດຍໃຊ້ໄມ້ແທນເຂັມ

3.6 ໝຸນກ່ອງຂອງຫລິ້ນທີ່ມີຕຸ໊ກຕາໂຜ່ອອກມາ

3.7 ຕັກນໍ້າອີກຖ້ວຍໜຶ່ງໄປອີກຖ້ວຍໜຶ່ງ

4. ການຈັດກິດຈະກຳທີ່ໃຊ້ມືໄດ້ເຄື່ອນໄຫວ

4.1 ຢິບສິ່ງຂອງລົງໃນກ່ອງ

4.2 ຫຼິ້ນຂອງຫຼິ້ນເຄື່ອງມືຊ່າງ

4.3 ວາງລູກປັດລວມກັນ

4.4 ຮ້ອຍລູກປັດເມັດໃຫຍ່

4.5 ໝຸນຖັງນໍ້າ

ຟິດເຊີຣ໌ ແລະ ເທີຣ໌ຣີ ( Fisher and Terry.1997:284) ກລ່າວມວ່າ ການຈັດປະສົບການໃຫ້ແກ່ເດັກເພື່ອສົ່ງເສີມກ້າມຊີ້ນນ້ອຍຂອງເດັກທີ່ຮຽນຂຽນໄວ້ດັ່ງນີ້:

1. ການແຕ້ມຮູບລະບາຍສີ: ຈັດທີ່ໃຫ້ແຕ້ມເທິງພື້ນຖານ ຫຼື ເຈ້ຍທີ່ໃຊ້ຂາຕັ້ງເສັ້ນຕ່າງໆທີ່ເດັກຕ້ອງໃຊ້ໃນການຂຽນຕົວອັກສອນເຊັ່ນ ເສັ້ນກົງ, ວົງມົນ ຫຼື ເສັ້ນພື້ນຖານຕ່າງໆນັ້ນຈະພົບໄດ້ຈາກການແຕ້ມຂອງເດັກ.

2. ການອອກແບບໃຫ້ເດັກໄດ້ອອກແບບເອງເຊັ່ນລວດລາຍທີ່ກອບຮູບພາບຂອງຈຸສານທີ່ຫໍ່ຫນັງສືຮູບຊົງຂອງຖົງເຈ້ຍໃສ່ຖົ່ວຄວາມຄິດໃນການອອກແບບຂອງເດັກຈະມາຈາກລີລາເສັ້ນ ແລະ ອື່ນໆ.

3. ຖາດຊາຍເຮັດໄດ້ງ່າຍ ແລະ ເດັກໆຈະຮູ້ສຶກສະໜຸກສະໜານຫຼາຍໃນການໃຊ້ນີ້ວມືແຕ້ມເສັ້ນ

**4. ລະບາຍສີດ້ວຍມື**

ແອນເດີຣ໌ສັນ ແລະ ແລບພ໌ (Anderson and Lapp. 1979:102) ກ່າວເຖິງວິທີສົ່ງເສີມໃຫ້ເດັກມີຄວາມສາມາດໃນການໃຊ້ກ້າມຊີ້ນນ້ອຍຄືຝຶກກລ້າມຊີ້ນມື ແລະ ຝຶກການບັງຄັບເຄື່ອງມືທີ່ໃຊ້ຂຽນໃຫ້ເດັກໄດ້ພັດທະນາກ້າມຊີ້ນນ້ອຍຂອງມືດ້ວຍການຫຼິ້ນຕ່າງໆເຊັ່ນ ຫຼິ້ນໂທລະສັບ, ຈັດໂຕະ, ປ່ຽນເສື້ອຕຸ໊ກກະຕາ, ຕັດເຈ້ຍດ້ວຍມີດຕັດຂຽນພາບດ້ວຍນີ້ວມື, ປັ້ນດິນໜຽວ, ຖັກສານ ແລະ ຝຶກໃຊ້ຂຽນເທິງກະດານດຳ ຫຼື ໃຊ້ສີທຽນໃນເຈ້ຍແຜ່ນໃຫຍ່ໆໃຫ້ການຝຶກຝົນກ່ຽວກັບພື້ນຖານໃນການຂຽນໂດຍກົງເຂົ້າໃຈຮູບຮ່າງ.

ຕົວອັກສອນທີ່ແທ້ຈິງ ແລະ ຮູ້ຈັກວິທີຂຽນເດັກຈະໄດ້ຮັບການຂຽນວົງມົນເປັນອັນດັບແຮງໆໂດຍມີການກຳນົດທິດທາງທີ່ເລີ່ມຕົ້ນໃຫ້ເຊັ່ນ ຂຽນຮູບໂມງ, ຂະໜົມກົມໆ, ໝາກບານ, ຟອງສະບູ່ເປັນຕົ້ນຕໍ່ຈາກນັ້ນກໍ່ເຊື່ອມໂຍງວົງມົນກັບເສັ້ນກົງເຊັ່ນໃຫ້ແຕ້ມຮູບພາບກວຽນມີລໍ້, ແຕ້ມຮູບພາບໄກ່ງວງມີກຂົນໄກ່ທາງຫາງ, ແຕ້ມຮູບພາບໄມ້ຄ້ອນມີຫົວມົນ.

ສຸມນາ ພານິດ (2549:24) ກ່າວເຖິງວິທີການສົ່ງເສີມຄວາມສາມາດໃນການໃຊ້ກ້າມຊີ້ນນ້ອຍໄວ້ຄືການຝຶກໃຫ້ເດັກໃຊ້ນີ້ວມືແຕ້ມຮູບພາບ, ລະບາຍສີ, ປັ້ນ, ຕັດເຈ້ຍ, ຂຽນຫນັງສື, ເຮັດກິດຈະກຳອື່ນໆໃນເລື່ອງການຊ່ວຍເຫລືອຕົວເອງ ເຊັ່ນ ຕິດກະດຸມ, ຮິດຊິບ ແລະ ອື່ນ ໆ.

ພູນສຸກ ບຸນຢືດວັດດີ (2544:41-42) ກ່າວວ່າວິທີການສົ່ງເສີມຄວາມສາມາດໃນການໃຊ້ກ້າມຊີ້ນນ້ອຍໄວ້ດັ່ງນີ້:

1.ໃຫ້ຫຼິ້ນໂຍນ-ຮັບໝາກບານ ໂຍນ-ຮັບບ້ວງຢາງ.

2.ໃຫ້ຫຼິ້ນເກມ ແລະ ການລະຫຼິ້ນທີ່ໃຊ້ມືນັ່ງຫຼິ້ນກັບທີ່ເຊັ່ນ ໝາກເກັບ, ດີດໃນຂາມ ແລະ ອື່ນ.

3.ໃຫ້ໃຊ້ໄມ້ຂີດຂຽນຫຼິ້ນເທິງດິນໃຊ້ນີ້ວມືຂີດຂຽນຫຼິ້ນຊາຍ ແລະ ຂູດອຸໂມງ, ເຈດີຊາຍໃຊ້ສໍຂີດຂຽນກະດານຫຼິ້ນ.

4.ໃຫ້ຫຼິ້ນກັບງານສິນປະເຊັ່ນໃຫ້ແຕ້ມຮູບພາບລະບາຍສີດ້ວຍສີທຽນ ຫຼື ສີໄມ້ໃຫ້ແຕ້ມຮູບພາບດ້ວຍພູ່ກັນຫຼື ແປງທາສີອັນນ້ອຍໆ ແລະໃຊ້ສີນ້ຳສີຝຸ່ນ ຫຼື ສີໂປຣເຕີຣ໌ ໃຫ້ແຕ້ມຮູບພາບດ້ວຍນີ້ວມືດ້ວຍແປ້ງມັນປະສົມສີຫຼືດິນໜຽວໃຫ້ແຕ້ມຮູບພາບດ້ວຍກາວນ້ຳໂຮຍຊາຍສີ ຫຼື ໂຮຍຂີ້ເລື່ອຍໄມ້ປົ່ນປະສົມສີ ຫຼື ກາກມະພ້າວປົ່ນປະສົມສີໃຫ້ແຕ້ມດ້ວຍເຊືອກ ຫຼື ຫຼອດດ້າຍໃຫ້ພິມຮູບພາບດ້ວຍເສດວັດຖຸ ຫຼື ຟອງນ້ຳ ຫຼື ເຈ້ຍໜຸ່ມ ຫຼື ໃບໄມ້ກ້ານກ້ວຍໃຫ້ຫຼິ້ນສີເທິງເຈ້ຍ, ຢອດສີ, ເທສີ, ເປົ່າສີ, ພັບສີ, ລູບສີ, ໃຫ້ເຮັດກາດຈະກຳດ້ວຍຫຼິ້ນປັ້ນແປ້ງທີ່ປະສົມສີໃສ່ອາຫານ, ດິນນ້ຳມັນ, ດິນໜຽວ, ປັ້ນຊາຍປະສົມນ້ຳໃຫ້ປະດິດສິ່ງຂອງຈາກເສດວັດສະດຸ.

5.ໃຫ້ຫຼິ້ນຂອງຫຼິ້ນທີ່ໃຊ້ມື, ນີ້ວມືເຊັ່ນ ຫຼິ້ນໂທລະສັບ, ຫຼິ້ນປ່ຽນເສື້ອຜ້າຕຸ໊ກກະຕາ, ຮູດຊິບ, ຕິດກະດຸມ, ຜູກເຊືອກເກີບ, ຫຼິ້ນໃສ່ຂອງລົງກອບ ຫຼື ໃນຊ່ອງທີ່ມີຮູບຄ້າຍຂອງນັ້ນເຊັ່ນ ໃສ່ໝຸດລົງໃນຊ່ອງເຈ້ຍໝຸດໃສ່ຮູບຊົງລົງໃນກ່ອງຢອດຮູບຊົງສວດບ້ວງຢາງໃສ່ທ່ອນໄມ້, ຫຼິ້ນຮ້ອຍລູກປັດ, ຫຼິ້ນຫຍິບຜ້າເທິງແຜ່ນໜັງຫຼິ້ນຖັກສານດ້ວຍເຈ້ຍເສັ້ນ ຫຼື ປາລາສະຕິກເສັ້ນ, ຫຼິ້ນຕໍ່ໄມ້ບ໊ອກ, ຕໍ່ເລໂກ້, ຫຼິ້ນຮູບພາບຕັດຕໍ່, ຫຼິ້ນຫາຍນ້ຳ, ຫຼິ້ນກໍ່ເຈດີ.

6.ໃຫ້ຫຼິ້ນເຄື່ອງຫຼິ້ນດິນຕີສຳລັບເດັກເຊັ່ນ ສົ້ນໝາກກະແຊກ, ຕີກອງ, ຕີສາບ, ຕີສິ່ງ, ຕີລະນາດ, ເປົ່າປີ່,ດີດເປຍໂນ, ດີດກີຕ້າ ແລະ ອື່ນ ໆ ເຄື່ອງດົນຕີເຫຼົ່ານີ້ເຮັດຈາກເສດວັດສະດຸເຫຼືອໃຊ້ກໍໄດ້.

ຈາກເອກະສານທີ່ກ່າວມາສະຫຼຸບໄດ້ວ່າການສົ່ງເສີມຄວາມສາມາດໃນການໃຊ້ກ້າມຊີ້ນນ້ອຍເປັນການໃຊ້ຝຶກໃຊ້ມື, ນິ້ວມືໃນການຢິບຈັບສຳຜັດສິ່ງຂອງຕ່າງໆອ້ອມຕົວວັດສະດຸອຸປະກອນທີ່ຫຼາກຫຼາຍ ແລະ ຝຶກທັກສະໃນການໃຊ້ກ້າມຊີ້ນນ້ອຍໃນການເຄື່ອນໄຫວຕ່າງໆຕະຫຼອດຈົນການເຮັດກິດຈະວັດປະຈຳວັນໃນແຕ່ລະມື້.

**1.8 ທິດສະດີທີ່ກ່ຽວຂ້ອງກັບທັກສະການໃຊ້ກ້າມຊີ້ນນ້ອຍ**

ກີເຊລ (ປຣະມວຍ ດິດຄົນສັນ. 2554: 178-179; ອ້າງອີງມາຈາກ Gesell.1947) ຊຶ່ງເປັນນັກຈິດວິທະຍາພັດທະນາການ ກ່າວວ່າ ຄວາມສາມາດໃນການໃຊ້ກ້າມຊີ້ນນ້ອຍຂອງເດັກສາມາດແບ່ງອອກເປັນໄລຍະແລະ ມີຂັ້ນຕອນການພັດທະນາການໂດຍເລີ່ມຈາກຂັ້ນແຮກຄືການໃຊ້ມືຕະປົບຂັ້ນຕໍ່ມາຈັບຂອງດ້ວຍນິ້ວ 4 ນິ້ວຕິດກັນກັບຝ່າມືໂດຍເລີ່ມໃຊ້ຝາມືຕອນໃກ້ໆສັນມືຕໍ່ມາເລື່ອນໄປໃຊ້ກາງໃຈມືຈາກນັ້ນຫົວໂປ້ມືຈຶ່ງຄ່ອຍເຄື່ອນມາຊ່ວຍຈັບຂັ້ນສຸດທ້າຍຄືການຢິບຂອງດ້ວຍຫົວໂປ້ມືກັບປາຍນິ້ວຊຶ່ງທັງໝົດເປັນກ້າມຊີ້ນນ້ອຍທີ່ມີຄວາມສຳຄັນແກ່ຊີວິດ ເພາະເປັນຮາກຖານຂອງບຸກຄົນເມື່ອຈະເລີນເຕີບໂຕເປັນຜູ້ໃຫຍ່ພຶດຕິກຳຂອງບຸກຄົນຈະມີອິດທິພົນມາຈາກສະພາບຄວາມພ້ອມທາງຮ່າງກາຍໄດ້ແກ່ກ້າມຊີ້ນຕໍ່ກະດູກ ແລະ ປະສາດຕ່າງໆ ສິ່ງແວດລ້ອມເປັນພຽງສ່ວນປະກອບຂອງການປ່ຽນແປງໂດຍທີ່ພິເຊັນໄດ້ແບ່ງພັດທະນາການເດັກອອກເປັນ 4 ດ້ານດັ່ງນີ້:

1. ພຶດຕິກຳດ້ານການເຄື່ອນໄຫວ (Motor Behavior) ເປັນຄວາມສາມາດຂອງຮ່າງກາຍທີ່ຄວບຄຸມເຖິງການບັງຄັບອະໄວຍະວະຕ່າງໆຂອງຮ່າງກາຍ ແລະ ຄວາມສຳພັນທາງດ້ານການເຄື່ອນໄຫວທັງໝົດ.

2. ພຶດຕິກຳດ້ານການປັບຕົວ(Adaptive Behavior)ເປັນຄວາມສາມາດໃນການປະສານງານລະຫວ່າງລະບົບການເຄື່ອນໄຫວກັບລະບົບຄວາມຮູ້ສຶກ(Motor Sensory Coordination)ເຊັ່ນປະສານງານລະຫວ່າງຕາກັບມື(Eye –Hand Coordination)ຊຶ່ງເບິ່ງໄດ້ຈາກຄວາມສາມາດໃນການໃຊ້ມືຂອງເດັກ(Manipulation) ເຊັ່ນໃນການຕອບສະໜອງຕໍ່ສິ່ງທີ່ເປັນບາດ, ການສັ້ນກະດິ່ງ, ການແກວ່ງບ້ວງ ແລະ ອື່ນໆສະນັ້ນພຶດຕິກຳດ້ານປັບຕົວຈຶ່ງສຳພັນກັບພຶດຕິກຳທາງການເຄື່ອນໄຫວ.

3.ພຶດຕິກຳທາງດ້ານພາສາ(Language Behavior)ປະກອບດ້ວຍວິທີສື່ສານທຸກຊະນິດເຊັ່ນທ່າທາງການເຄື່ອນໄຫວທ່າທາງກາຍຄວາມສາມາດໃນການເປັ່ງສຽງ.

4.ພຶດຕິກຳທາງດ້ານນິໃສສ່ວນຕົວ ແລະ ສັງຄົມ (Personal-Social Behavior)ເປັນຄວາມສາມາດໃນການປັບຕົວຂອງເດັກລະຫວ່າງບຸກຄົນກັບກຸ່ມພາຍໃຕ້ແວດລ້ອມ ແລະ ສະພາບຄວາມເປັນຈິງນັບເປັນການປັບຕົວທີ່ຕ້ອງອາໄສຄວາມຈະເລີນຂອງສະໝອງ ແລະ ລະບົບການເຄື່ອນໄຫວປະກອບໃນສ່ວນທີ່ກ່ຽວກັບຄວາມສາມາດໃນການໃຊ້ກ້າມຊີ້ນມັກນ້ອຍ.

ກີເຊລບບວ່າກ່ອນທີ່ຄົນເຮົາຈະເຮັດຫຍັງງ່າຍໆເຊັ່ນ ຢິບອາຫານໃສ່ປາກໄດ້ນັ້ນມີການຮຽນຮູ້ຫຼາຍຂັ້ນຂັ້ນແຮກເດັກນ້ອຍໃຊ້ມືຕະປົບຂັ້ນຕໍ່ມາຈັບຂອງດ້ວຍມື 4 ນິ້ວຕິດກັນຝາມື ໂດຍເລີ່ມໃຊ້ຝາມືຕອນໃກ້ໆສັນມືຕໍ່ມາຈະເລື່ອນໄປໃຊ້ໃຈກາງມື ຄັ້ນແລ້ວໃຊ້ຫົວແໂປ້ມືຄ່ອຍໆເລື່ອນມາຈັບຂັ້ນສຸດທ້າຍຄືການຢິບຂອງດ້ວຍນິ້ວຫົວໂປ້ມືກັບປາຍນິ້ວຢິ່ງໄປກວ່ານັ້ນພິເຊລໄດ້ຕັ້ງຂໍ້ສັງເກດວ່າການຄວບຄຸມປະຕິບັດການແຫ່ງກ້າມຊີ້ນຂອງຄົນເຮົາມີພັດທະນາການເລີ່ມຈາກສີລະສະຈວດ ຮຽກວ່າ Cephalo –Caudal Sequence ຄືຫັນຫົວໄດ້ກ່ອນຫັນຄໍແລ້ວຈຶ່ງຂ້ອມ, ນັ່ງ, ຄານ, ຢືນ, ຍ່າງ ແລະ ແລ່ນຕາມລຳດັບ ສ່ວນພັດທະນາການຄວບຄຸມປະຕິບັດການກ້າມຊີ້ນເລີ່ມຈາກ

ໃກ້ລຳຕົວກ່ອນຮຽກວ່າ Proximdistal Sequence ທີ່ແຂນຂາເດັກນ້ອຍບັງຄັບການເຄື່ອນໄຫວແຂນຂາ ໄດ້ກ່ອນມື ແລະ ຕີນເດັກໃຊ້ແຂນຄ່ອງກ່ອນມື ແລະ ໃຊ້ມືຄ່ອງກ່ອນນິ້ວດັ່ງນັ້ນເດັກນ້ອຍເມື່ອຕ້ອງການຈັບຫຍັງກໍຢ້ານໄປທັງຕົວຕໍ່ມາຈຶ່ງຢື່ນອອກໄປສະເພາະແຂນແລ້ວຈຶ່ງໃຊ້ມື ແລະ ນິ້ວດັ່ງກ່າວຖ້າຈະໃຫ້ເດັກນ້ອຍຂຽນຫນັງສືມັກຈະຕົວໃຫຍ່ເພາະກ້າມຊີ້ນມືຍັງໃຊ້ບໍ່ຄ່ອງໄດ້ແຕ່ວາແຂນໄປຕາມທິດຕ່າງໆຕໍ່ມາເມື່ອການບັງຄັບກ້າມຊີ້ນບັນລຸວຸດທິພາວະແລ້ວຈຶ່ງໃຫ້ຂຽນຕົວນ້ອຍໆໄດ້ເພາະສາມາດບັງຄັບກ້າມຊີ້ນມື ແລະ ນິ້ວໄດ້.

ອີຣິກສັນ (ສີຣິມາ ພິຍໂຍອນັນຕົບງສ໌.2545:47;ອ້າງອີງຈາກ Sprinthall.1998) ກ່າວເຖິງພັດທະນາການຂອງເດັກໄວອາຍຸ2-3ປີຂັ້ນການຄວບຄຸມດ້ວຍຕົນເອງຫຼືສົງໃສອາຍໂດຍເດັກເລີ່ມຮຽນຮູ້ທີ່ການຊ່ວຍຕົນເອງສາມາດຄວບຄຸມຕົນເອງ ແລະ ເຮັດກິດຈະກຳງ່າຍໆໄດ້ເໝາະສົມກັບໄວອາຍຸເຊັ່ນການຢິບອາຫານເຂົ້າປາກຊຶ່ງຖ້າມີການບັງຄັບຫຼືເຂັ້ມງວດຫຼາຍເກີນໄປອາດຈະຮູ້ສຶກວ່າຕົນເອງບໍ່ສາມາດເຮັດໄດ້ຈະສົ່ງຜົນໃຫ້ເດັກເກີດການພຶ່ງພາຜູ້ອື່ນ

ເຄບຮາຣົດ (ໂຫມັດ,ອາຣ໌.ເມີເຣ.2545:427-433; ອ້າງອີງຈາກ Kephart.1971) ໄດ້ກ່າວເຖິງພັດທະນາການເປັນລຳດັບຂັ້ນຂອງເດັກ ຄື ເລີ່ມຈາການຮັບຂ່າວສານຂໍ້ມູນຂອງເດັກ (information processingstage) ຮຽກວ່າ innate ຫລື stimulus-responde refex period (ໄລຍະທີ່ມີຢູ່ເດີມແຕ່ກຳນົດຫລືໄລຍະຂອງປະຕິກິລິຍາການກະຕຸ້ນ – ຕອບສະໜອງໂດຍອັດໂນມັດ) ໄລຍະນີ້ເດັກຈະແນມກະພິບຕາສະດຸ້ງ, ໝຸນຕົວ ແລະ ເຮັດຫຍັງຕາມແບບອັດໂນມັດ ລະບົບປະສາດ ແລະ ກ້າມຊີ້ນຈະຄ່ອຍໆຈະເລີນເຕີບໂຕຂຶ້ນມາທີ່ລະນ້ອຍປະຕິກິລິຍາອັດໂນມັດບາງຢ່າງຈະມີການປັບໃຫ້ເຂົ້າຕາມສະຖານນະການຈາກນັ້ນຂັ້ນການຮັບຮູ້ (perceptual stage) ຈະເຊື່ອມໂຍງຫຼືປັບໃຫ້ເດັກແຍກພາບ ແລະ ພື້ນໄດ້ໂດຍອາໄສປະສົບການຂອງເດັກເມື່ອເດັກມີກິດຈະກຳຈະຕ້ອງອາໄສກ້າມຊີ້ນນ້ອຍເຊັ່ນ ການຈັບວັດຖຸນ້ອຍໆເດັກຈະກະຕຸ້ນນິ້ວໂປ້ມື ແລະ ນິ້ວຊີ້ໃຫ້ບີບເຂົ້າມາໃນທິດທາງກົງກັນຂ້າມພຽງຢ່າງດຽວ ໂດຍບໍ່ຕ້ອງອອກແຮງກະຕຸ້ນສ່ວນອື່ນໆ ເມື່ອເດັກຮຽນຮູ້ບັນລຸຄວບຄຸມຈະເຮັດໃຫ້ເດັກສາມາດບັງຄັບມືໃຫ້ຂຽນຫນັງສືແຍກມຸມມອງທີ່ເໝາະສົມ ແລະ ເຄື່ອນໄຫວກ້າມຊີ້ນໄປສູ່ສິ່ງນັ້ນໄດ້ ແລະ ເລີ່ມພັດທະນາການໄປສູການຄົ້ນຫາໂດຍອາໄສຕາ ແລະ ປະສາດສຳຜັດຕ່າງໆເພື່ອໃຫ້ຮຽນຮູ້ ແລະ ສຳພັນກັບການໃຊ້ກ້າມຊີ້ນໃນການເຄື່ອນໄຫວຢ່າງຖືກຕ້ອງ ແລະ ຄ່ອງແຄ້ວ

ຈາກທີ່ກ່າວມາຂ້າງເທິງຈະເຫັນວ່າທິດສະດີກ່ຽວກັບຄວາມສາມາດໃນການການໃຊ້ກ້າມຊີ້ນນ້ອຍເດັກມີພັດທະນາການຂອງຄວາມສາມາດໃນການໃຊ້ກ້າມຊີ້ນນ້ອຍເລີ່ມຈາກການເຄື່ອນໄຫວອະໄວຍະວະໃນສ່ວນຂອງກ້າມຊີ້ນໃຫຍ່ກ່ອນແລ້ວຈຶ່ງຄ່ອຍໆ ພັດທະນາເປັນການໃຊ້ກ້າມຊີ້ນນ້ອຍຊຶ່ງຈະເປັນຄວາມຮູ້ໄປຕາມວຸດທິພາວະ ແລະ ການຮຽນຮູ້ຂອງເດັກໂຍທີ່ການຮັບຮູ້ດ້ານປະສາດສຳຜັດຂອງການເຮັດກິດຈະກຳປະສານກັນໄດ້ຢ່າງຄ່ອງແຄ້ວຂອງກ້າມຊີ້ນນ້ອຍນັ້ນຈະອາໄສຄວາມຮູ້ສຶກປະສົບການຂອງເດັກຊຶ່ງຈະຊ່ວຍໃຫ້ຄວບຄຸມກ້າມຊີ້ນເປັນໄປຢ່າງມີປະສິດທິພາບ.

### 1.9 ເອກະສານ ແລະ ທິດສະດີທີ່ກ່ຽວຂ້ອງກັບກິດຈະກຳສິນປະສ້າງສັນ

#### 1.9.1 ເອກະສານທີ່ກ່ຽວຂ້ອງກັບກິດຈະກຳສິນປະສ້າງສັນ

ສະຖາບັນຄົ້ນຄ້ວາວິທະຍາສາດການສຶກສາ(2012:1).ການສຶກສາຊັ້ນຊັ້ນອະນຸບານສຶກສາເປັນການພັດທະນາເດັກອາຍຸ 3 ຫາ 6 ປີ ຕາມ 5 ຫຼັກມູນການສຶກສາຄື: ຄຸນສົມບັດສຶດສາ, ປັນຍາສຶກສາ, ສິລະປະສຶກສາ, ພະລະສຶກສາ, ແຮງງານສຶກສາໂດຍຈັດການສຶກສາອົບຮົມ, ລ້ຽງດູ, ສົ່ງເສີມຂະບວນການຮຽນຮູ້ທີ່ຕອບມະໜອງຕໍ່ທຳມະຊາດ ແລ ພັດທະນາການຂອງເດັກແຕ່ລະຄົນ ການສຶກສາຊັ້ນອະນຸບານສຶກສາໝາຍເຖິງການລ້ຽງດູ, ການ

ຮຽນ ແລະ ການສອນເດັກຢູ່ໂຮງຮຽນອະນຸບານເຊິ່ງຮັບເດັກແຕ່ອາຍຸ 3-6ປີ. ການພັດທະນາເດັກຊັ້ນອະນຸບານສຶກສາແມ່ນບາດກ້າວເບື້ອງຕົ້ນທີ່ສຳຄັນໃນການພັດທະນາຊັບພະຍາກອນມະນຸດໃຫ້ມີການຂະຫຍາຍຕົວທາງດ້ານຮ່າງກາຍ,ອະນາໄມ, ຄວາມປອດໄພ, ດ້ານພາສາ, ດ້ານສະຕິປັນຍາ ແລະ ຄວາມຮູ້ທົ່ວໄປ, ດ້ານອາລົມຈິດໃຈ ແລະ ດ້ານສັງຄົມ ເຊິ່ງເປັນພື້ນຖານສຳລັບການຮຽນໃນຊັ້ນອະນຸບານປະຖົມ ແລະ ໃນຂັ້ນຕໍ່ໄປ.

ສຳນັກງານຄະນະກຳມະການປະຖົມສຶກສາແຫ່ງຊາດ (2536: 13) ຫຍໍ້ໃຫ້ຄວາມໝາຍກິດຈະກຳສິລະປະສ້າງສັນວ່າ ກິດຈະກຳກ່ຽວກັບງານສິລະປະສຶກສາຕ່າງໆ ໄດ້ແກ່: ການຕັດ, ການຂີດເສັ້ນ, ການແຕ້ມຮູບ, ລະບາຍສີ ການຮ້ອຍທີ່ມຸ້ງພັດທະນາຂະບວນການຄິດສ້າງສັນການຮັບຮູ້ກ່ຽວກັບຄວາມງາມ ແລະ ສົ່ງເສີມກະຕຸ້ນໃຫ້ເດັກແຕ່ລະຄົນໄດ້ສະແດງອອກຕາມຄວາມຮູ້ສຶກ ແລະ ຄວາມສາມາດຂອງຕົນເອງ.

ກົມວິຊາການ(25545; 2) ກ່າວວ່າ ລັກສະນະທຳມະຊາດຂອງສິລະປະເປັນການຮຽນຮູ້ເທັກນິກວິທີການເຮັດວຽກຕະຫຼອດຮອດການເປີດໂອກາດໃຫ້ສະແດງອອກຢ່າງອິດສະຫຼະເຮັດໃຫ້ຜູ້ຮຽນໄດ້ຮັບການສົ່ງເສີມສະໜັບສະໜູນໃຫ້ຄິລິເລີ່ມສ້າງສັນດັດແປງຈິນຕະນາການມີສຸນທະລິຍະພາບ ແລະ ເຫັນຄຸນຄ່າສິລະປະວັດທະນະທຳລາວ ແລະ ສາກົນ.

ສີແພດ ຈັນທາພິລົມ(2550: 28) ສະຫຼຸບວ່າສິລະປະສ້າງສັນ ເປັນກິດຈະກຳທີ່ເດັກໄດ້ໃຊ້ປະສາດສຳຜັດທັງ 5 ໃນການຮັບຮູ້ ໂດຍອາໄສປະສົບການ ສິ່ງແວດລ້ອມຈົນເກີດຄວາມເຂົ້າໃຈເຮັດໃຫ້ເກີດຄວາມຄິດຈິນຕະນາການ ແລະ ມີການສະແດງອອກໂດຍໃຊ້ການຖ່າຍທອດຜົນງານສະແດງຄວາມຮູ້ສຶກຕ່າງໆທີ່ຕົນເອງໄດ້ຮຽນຮູ້ເຊິ່ງສະແດງອອກທັງແນວຄິດ, ຄວາມຮູ້ສຶກ, ສະຕິປັນຍາ, ອາລົມ ແລະ ເຮັດໃຫ້ສັກກະຍະພາບທີ່ຢູ່ໃນບຸກຄົນໃຫ້ມີການພັດທະນາສ້າງສັນສິ່ງແປກໃໝ່ ພ້ອມທັງເປັນກິດຈະກຳທີ່ຊ່ວຍສົ່ງເສີມພັດທະນາການທຸກດ້ານໃຫ້ມີຄວາມພ້ອມໃນການຮຽນຮູ້ສິ່ງຕ່າງໆໃຫ້ມີປະສິດທິພາບຕໍ່ໄປ.

ສົມສີ ເມກໄພບຸນວັດທະນາ(2551; 8-9) ກ່າວວ່າ ກິດຈະກຳສິລະປະສ້າງສັນໝາຍເຖິງການຖ່າຍທອດຄວາມຄິດສ້າງສັນ, ຈິນຕະນາການ, ທຳມະຊາດ, ປະສົບການ, ອາລົມ, ຄວາມຮູ້ສຶກ ເພື່ອສື່ສານ ແລະ ສະແດງອອກຜ່ານສື່ວັດຖຸໃຫ້ຜູ້ອື່ນເຂົ້າໃຈ ແລະ ເກີດເປັນຜົນງານອອກມາ ເຊິ່ງການຈັດກິດຈະກຳບໍ່ມີການບັງຄັບໃຫ້ເດັກເຮັດແຕ່ເປັນກິດຈະກຳເສລີທີ່ເດັກທຸກຄົນສາມາດຈະເຮັດໄດ້ເມື່ອຕົນເອງເກີດຄວາມຕ້ອງການພໍໃຈ ແລະ ສົນໃຈ ໂດຍໃຊ້ສິລະປະ ຫຼື ວິທີການຕ່າງໆ ເປັນເຄື່ອງມືໃນການຈັດກິດຈະກຳເຊັ່ນ: ການແຕ້ມຮູບ ລະບາຍສີ, ການພິມສີ, ການປັ້ນ, ການພັບ, ສີກ, ຕັດ, ຕິດ ແລະ ອື່ນໆ ໂດຍເດັກຈະໃຊ້ປະສາດສຳຜັດໃນການຮັບຮູ້ ແລະ ການເຄື່ອນໄຫວຮ່າງກາຍໃນການຄວບຄຸມລຳຕົວ, ແຂນ, ນິ້ວມືໃຫ້ປະສານສຳພັນກັນກັບການໃຊ້ ເຄື່ອງມືຕ່າງໆ ແລະ ກິດຈະກຳສິລະປະສ້າງສັນຮ້ອຍດອກໄມ້ເປັນກິດຈະກຳທີ່ມີຄວາມສຳຄັນກິດຈະກຳໜຶ່ງໃນການສ້າງຜົນງານສິລະປະສ້າງສັນ.

ປີເຕີສັນ(ປະລິສາບຸນມາດ 2551: 20; ອ້າງອີງຈາກ Peterson.1958: 101) ກ່າວວ່າ ເດັກທຸກຄົນຕ້ອງການທີ່ຈະສະແດງອອກທາງດ້ານຄວາມຄິດ ແລະ ຄວາມຮູ້ສຶກຕ່າງໆສິລະປະແນວທາງທີ່ເປີດໂອກາດໃຫ້ເດັກໄດ້ສະແດງອອກ ອີກທັງຍັງສາມາດຖ່າຍທອດຄວາມຮູ້, ຄວາມຮູ້ສຶກ ແລະ ເຂົ້າໃຈລວມທັງບຸກຄະລິກກະພາບ ແລະ ຄວາມເປັນອິດສະຫຼະຂອງເດັກອອກມາເຊິ່ງເປັນສິ່ງທີ່ຖ່າຍທອດປະສົບການ ແລະ ຈິນຕະນາການຂອງເດັກແຕ່ລະຄົນອອກມາ.

ຈາກຄວາມໝາຍຂອງກິດຈະກຳສິລະປະສ້າງສັນ ສະຫຼຸບໄດ້ວ່າ: ເປັນກິດຈະກຳທີ່ໃຊ້ສິລະປະເຊິ່ງໄດ້ແກ່ ການແຕ້ມຮູບ, ການລະບາຍສີ, ການພິມສີ, ການພັບ, ການປັ້ນ, ການສີກ, ຕັດຕິດ, ການປະດິດ ໃນການຖ່າຍທອດ

ຄວາມຄິດສ້າງສັນຈິນຕະນາການ, ທຳມະຊາດ, ປະສົບການ, ອາລົມ, ຄວາມຮູ້ສຶກ ແລະ ສະທ້ອນຄວາມຄິດຂອງຕົນເອງອອກມາເປັນຜົນງານຜ່ານປະສາດສຳຜັດທັງ 5 ເຊິ່ງໃນລະຫ່ວາງການຈັດກິດຈະກຳ ຫຼື ສ້າງສັນງານສິລະປະນັ້ນ ເດັກຈະມີປະຕິສຳພັນກັບບຸກຄົນອ້ອມຂ້າງ ແລະ ສິ່ງແວດລ້ອມອ້ອມຕົວ.

ກິດຈະກຳສິລະປະສ້າງສັນ ເປັນກິດຈະກຳທີ່ຈັດໃຫ້ເດັກເຮັດຢ່າງເສລີ ເຊິ່ງຈະຊ່ວຍພັດທະນາເດັກ ທາງດ້ານຮ່າງກາຍ, ອາລົມ, ຈິດໃຈ, ສັງຄົມ ແລະ ສະຕິປັນຍາ ໂດຍຄູຄິດຢູ່ສະເໝີວ່າສິລະປະສຳລັບເດັກບໍ່ໄດ້ ເນັ້ນໃຫ້ເດັກເຮັດໄດ້ງາມ ຫຼື ຄ້າຍຄືຂອງຈິງ ແຕ່ເພື່ອໃຫ້ເດັກໄດ້ພັດທະນາຄົບທຸກດ້ານຈາກກິດຈະກຳນີ້ (ສຳນັກງານຄະນະກົມການປະຖົມສຶກສາແຫ່ງຊາດ. ມ. ປ. ປ: 1) ນອກຈາກນີ້ກິດຈະກຳສິລະປະສ້າງສັນຍັງ ເປັນກິດຈະກຳທີ່ເໝາະສົມກັບຄວາມສົນໃຈ ຄວາມສາມາດ ແລະ ສອດຄ່ອງກັບພັດທະນາການຂອງເດັກ ກິດຈະກຳສ້າງສັນຈຶ່ງບໍ່ໄດ້ເປັນພຽງແຕ່ສົ່ງເສີມການປະສານສຳພັນລະຫວ່າງມື -ສາຍຕາ ແລະ ການຜ່ອນຄາຍຄວາມເຄັ່ງຕຶງທາງອາລົມເທົ່ານັ້ນແຕ່ຍັງເປັນການສົ່ງເສີມຄວາມຄິດອິດສະຫຼະ, ຄວາມຄິດຈິນຕະນາການ, ເຝິກການຮູ້ຈັກເຮັດວຽກດ້ວຍຕົນເອງ ແລະ ເຝິກການສະແດງອອກຢ່າງສ້າງສັນທາງຄວາມຄິດ ແລະ ການກະທຳ ເຊິ່ງຖ່າຍທອດອອກມາເປັນຜົນງານທາງສິລະປະ ແລະ ຍັງນຳໄປສູ່ການຮຽນ, ຂຽນ, ອ່ານ ຢ່າງສ້າງສັນຕໍ່ໄປ.

(ພັນນີ ຄຸລຸລັດຕະນະ. 2535) Arnhein (1983 9-11) ກິດຈະກຳສິລະປະສ້າງສັນຍັງມີປະໂຫຍດໃນແງ່ຂອງການເຝິກການສະແດງອອກຕາມຄວາມຄິດຂອງເດັກເພາະກິດຈະກຳສິລະປະສ້າງສັນສາມາດສົ່ງເສີມຄວາມຄິດຢ່າງວ່ອງໄວ ແລະ ຕໍ່ເນື່ອງ ໃນອັນທີ່ຈະຄວບຄຸມການສະແດງອອກໃຫ້ເປັນໄປຕາມທີ່ເຂົາຄິດງານສິລະປະຂອງເດັກຈຶ່ງປ່ຽນໄປຕາມແງ່ມຸມຄວາມຄິດຕ່າງໆນັ້ນເຊິ່ງຄວາມຄິດທັງໝົດ ຍ່ອມມີຄວາມໝາຍສຳລັບເຂົາການຄິດ ແລະ ການມີຄວາມໝາຍສຳລັບເຂົາຈຶ່ງເປັນວິທີການຮຽນຮູ້ທາງໜຶ່ງ ແລະ ດ້ວຍປະສົບປານແບບນີ້ ຍ່ອມເປັນຜົນກະທົບໂດຍກົງຕໍ່ປະສິດທິພາບໃນການຄິດ(ວິລຸນ ຕັ້ງຈະເລີນ. 2532: 237).

ອິງການ ອິນທະລຳພອນ ແລະ ຄົນອື່ນໆ (2526 279-287) ໄດ້ເວົ້າເຖິງກິດຈະກາສິລະປະສ້າງສັນວ່າ ເປັນກິດຈະກຳທີ່ເປີດໂອກາດໃຫ້ເດັກໄດ້ສະແດງອອກຢ່າງອິດສະຫຼະຊ່ວຍໃຫ້ເດັກເກີດຄວາມມ່ວນຊື່ນເພີດເພີນໃນການປະຕິບັດມີຄວາມເຊື່ອໝັ້ນໃນຕົນເອງ, ມີຄວາມຄິດສ້າງສັນ, ມີເຫດຜົນຮູ້ຈັກສັງເກດມີຄວາມສາມາດໃນການປະຍຸກໃຊ້, ເປັນຜູ້ກ້າຕັດສິນໃຈ ແລະ ເຝິກໃຫ້ເປັນຜູ້ທີ່ມີຄວາມສາມາດໃນການແກ້ປັນຫາ.

ເຍົາວະພາ ເດຊະຄຸບ(2552: 107) ມີທັດສະນະທີ່ສອດຄ່ອງກັນວ່າສິລະປະເປັນແນວທາງໜຶ່ງທີ່ຈະຊ່ວຍໃຫ້ເດັກໄດ້ສະແດງຄວາມສາມາດ ແລະ ຄວາມຮູ້ສຶກນຶກຄິດຂອງຕົນອອກມາໃນຮູບພາບ ຫຼື ສິ່ງຂອງທີ່ເດັກຈະສາມາດເບິ່ງເຫັນໄດ້ເດັກຈະໃຊ້ສິລະປະເພື່ອເປັນສື່ອະທິບາຍສິ່ງທີ່ເຂົາເຮັດ, ເຫັນ, ຮູ້ສຶກ ແລະ ຄິດອອກມາເປັນຜົນງານການຈັດປະສົບການທາງສິລະປະໃຫ້ແກ່ເດັກຊ່ວຍໃຫ້ເດັກມີໂອກາດຄົ້ນຄ້ວາ, ທົດລອງ ແລະ ສື່ສານຄວາມຄິດຄວາມຮູ້ສຶກຂອງຕົນໃຫ້ຜູ້ອື່ນ ແລະ ໂລກທີ່ຢູ່ອ້ອມຕົວເຂົາໃຫ້ເຂົ້າໃຈໄດ້ ນອກຈາກນັ້ນຍັງໄດ້ມີໂອກາດພັດທະນາຄວາມສາມາດໃນການຄິດ ແລະ ການໃຊ້ຈິນຕະນາການ, ການສັງເກດ ແລະ ເພີ່ມພູນການຮັບຮູ້ທີ່ມີຕໍ່ຕົນເອງ ແລະຜູ້ອື່ນ ແລະ ພັດທະນາຄວາມເຊື່ອໝັ້ນກ່ຽວກັບຕົນເອງໃນການເລືອກໃຊ້ວັດສະດຸຕ່າງໆ ສົ່ງເສີມໃຫ້ເດັກໄດ້ພັດທະນາກ້າມຊີ້ນມືມີຄວາມສຳພັນລະຫວ່າງມືກັບຕາ ເກີດຄວາມຄິດລວມຍອດກ່ຽວກັບຮູບຮ່າງ, ສີ ແລະ ມີໂອກາດພັດທະນາທັກສະພື້ນຖານໃນການອ່ານ ພັດທະນາທັກສະທາງສັງຄົມຈາກການແບ່ງປັນອຸປະກອນທີ່ໃຊ້ແບ່ງໜ້າທີ່ຮັບຜິດຊອບໃນການເບິ່ງແຍງເກັບມ້ຽນອຸປະກອນເຫຼົ່ານັ້ນ.

ເບນຈາ ແສງມະລິ (2545: 262) ໄດ້ກ່າວວ່າ ສິລະປະເປັນສື່ການສະແດງອອກຂອງເດັກໃນສິ່ງທີ່ເດັກເຮັດ, ເຫັນ, ຮູ້ສຶກ ແລະ ຄິດ ກິດຈະກຳມີລະປະສ້າງສັນໃຫ້ໂອກາດເດັກໄດ້ສຳຫຼວດ, ທົດລອງສະແດງ ຄວາມຄິດ, ຄວາມຮູ້ສຶກກ່ຽວກັບຕົວເດັກສິ່ງແວດລ້ອມອ້ອມໆຕົວ ຄວາມສາມາດໃນການຈິນຕະນາການ, ສັງເກດ ແລະ ຄວາມຮູ້ສຶກທີ່ມີຕໍ່ຕົນເອງ ແລະ ຮູ້ຄຸນຄ່າຂອງຄວາມເປັນມະນຸດຂາດທັດສະນະເບື້ອງຕົ້ນຈະເຫັນໄດ້ວ່າສິລະປະເປັນກິດຈະກຳທີ່ມີຄວາມສຳຄັນຕໍ່ເດັກອະນຸບານໃນການສົ່ງເສີມພັດທະນາການທັງ 5 ດ້ານ ຄືດ້ານຮ່າງກາຍ, ດ້ານອາລົມ, ດ້ານສັງຄົມ, ດ້ານສະຕິປັນຍາ ແລະ ພາສາ ເພາະເປັນສື່ໃນການສະແດງອອກເຖິງຄວາມສົນໃຈ, ຄວາມຕ້ອງການ, ຄວາມຮູ້ສຶກ ແລະ ເປັນການຖ່າຍທອດປະສົບການເກົ່າຂອງເດັກ, ຜ່ານຜົນງານສິລະປະເຮັດໃຫ້ເດັກໄດ້ພັດທະນາຄວາມຄິດສ້າງສັນຢ່າງເສລີ ໃນຂະນະທີ່ເຮັດກິດຈະກຳຈະຕ້ອງໃຫ້ເດັກມີອິດສະຫຼະໃນການປະຕິບັດເພື່ອນຳໄປສູ່ການສົ່ງເສີມໃຫ້ເດັກມີຄວາມກ້າຄິດ, ກ້າເຮັດ, ສາມາດແກ້ປັນຫາໄດ້ຢ່າງເໝາະສົມ, ມີຄວາມຮັບຜິດຊອບຮູ້ຈັກການເຮັດວຽກຮ່ວມກັບຜູ້ອື່ນ, ມີລະບຽບວິໄນ, ຮູ້ຈັກການແບ່ງປັນລວມທັງການມີຈິດໃຈທີ່ອ່ອນໂຍນ ແລະ ສິລະປະຍັງເປັນພື້ນຖານໃນການຕຽມຄວາມພ້ອມທາງດ້ານການຮຽນ, ດ້ານການອ່ານ ແລະ ການຂຽນຕໍ່ໄປ.

ພິລະພົງ ກຸນພິສານ(2546: 1589) ເວົ້າວ່າ ພັດທະນາການທາງສິລະປະໝາຍເຖິງຂະບວນການສະແດງອອກທາງສິລະປະທີ່ມີລັກສະນະສະເພາະຕົວຂອງເດັກເຊິ່ງປາກົດຢູ່ໃນຜົນງານພັດທະນາການຈາກໄວໜຶ່ງໄປສູ່ໄວໜຶ່ງຢ່າງຕໍ່ເນື່ອງພັດທະນາການດັ່ງກ່າວຈະດຳເນີນໄປຊ້າ ຫຼື ໄວນັ້ນຂຶ້ນຢູ່ກັບພື້ນຖານຄວາມສົນໃຈ ແລະ ຄວາມສາມາດທາງສິລະປະ ປະກອບກັບສິ່ງແວດລ້ອມ ແລະ ແຮງຈູງໃຈຂອງແຕ່ລະບຸກຄົນ ພັດທະນາການທາງສິລະປະຈະມີລັກສະນະເປັນສາກົນເດັກທຸກຄົນອາດຈະມີລັກສະນະການສະແດງອອກຄ້າຍຄືກັນຍົກເວັ້ນກໍລະນີທີ່ພັດທະນາການນັ້ນຖືກສະກັດກັ້ນອັນເປັນຜົນໃຫ້ພັດທະນາການນັ້ນຂາດວັກຂາດຕອນ ຫຼື ຢຸດຫາຍໄປເດັກອາຍຸ 2-5 ປີເປັນຊ່ວງໄລຍະກ່ອນປະຖົມສຶກສາສ່ວນໃຫຍ່ຍັງຢູ່ບ້ານຢູ່ເຮືອນໂດຍມີ ເອື້ອຍລ້ຽງ ຫຼື ພໍ່ແມ່ເບິ່ງແຍງດູແລ ໂອກາດທີ່ຈະໄດ້ຮັບປະສົບການທາງສິລະປະຈະມີໜ້ອຍຫາກພໍ່ແມ່ບໍ່ມີຄວາມຮູ້ຄວາມເຂົ້າໃຈໃນສິລະປະຂາດຄວາມສົນໃຈໃນພຶດຕິກຳທາງດ້ານສິລະປະຂອງເດັກແລ້ວຈະສົ່ງຜົນໃຫ້ເດັກມີພັດທະນາການໄປຢ່າງຊັກຊ້າ.

ນະທີ ເຖກິ່ງສີ(2548: 34) ເວົ້າວ່າ ພັດທະນາການທາງສິລະປະຂອງເດັກອາຍຸ 5-6 ປີ ຢູ່ໃນຊ່ວງທີ່ແຕ້ມຮູບເປັນເລື່ອງລາວ ແຕ້ມຮູບເປັນການບອກເລົ່າຂອງເດັກໂດຍມີລັກສະນະຄື:

- ເດັກຈະແຕ້ມຮູບຄົນກ່ອນຈະດັດແປງເປັນສິ່ງຕ່າງໆ.
- ແຕ້ມເລື່ອງທີ່ເຫັນມາກັບຕົນເອງເລື່ອງທີ່ໄດ້ຟັງ.
- ໃຊ້ຮູບເລຂາຄະນິດມາປະກອບເປັນຮູບ.
- ມີການກຳນົດລັກສະນະເກົ່າໆ.
- ຮູ້ຈັກລະບາຍສີໃນຂອບເຂດຮູບພາບ ແລະ ຂອບເຂດເຈັບ.
- ມີການຈັດວາງຮູບພາບຢູ່ໃນເສັ້ນພື້ນຖານ ຫຼື ໃຊ້ຂອບເຂດເຈ້ຍເປັນເສັ້ນເພື້ນຖານ.

ຈະເຫັນໄດ້ວ່າການຈັດສະພາບແວດລ້ອມ ວິທີການອົບຮົມລ້ຽງດູ ລະດັບອາຍຸ ເປັນປັດໄຈທີ່ສົ່ງຜົນຕໍ່ພັດທະນາການທາງດ້ານສິລະປະ ສົ່ງຜົນເຮັດໃຫ້ເດັກແຕ່ລະຄົນມີພັດທະນາການທາງສິລະປະບໍ່ຄືກັນລວມເຖິງລະດັບຄວາມສາມາດໃນການຮຽນເຊັ່ນ: ການຂຽນ, ການອ່ານບໍ່ຄືກັນອີກດ້ວຍ.

ສິລະປະສ້າງສັນສຳລັບເດັກມີດັ່ງນີ້:

- ການທາສີຮູບ

- ການປັ້ນ
- ການຂີດຂຽນ
- ການແຕ້ມ
- ການຕັດ, ຕິດ
- ການຕິດເຈ້ຍ ຫຼື ແກ່ນພືດ
- ການພິມ
- ການພັບເຈ້ຍ, ຜ້າ ແລະ ພັບສີ
- ການຮ້ອຍ
- ການຈີກ, ຕິດ
- ການສານ
- ການພົ່ນສີ
- ການຢອດສີ
- ການເປຍເຊືອກ
- ການເປົ່າສີເປັນຮູບຕ່າງໆ
- ການໂຮຍດິນຊາຍ

ໃນການຈັດກິດຈະກຳສຳລັບເດັກຕາມຫຼັກການຈັດກິດຈະກຳຂອງກະຊວງສຶກສາທິການມີລັກສະນະສຳຄັນດັ່ງນີ້ (ກະຊວງສຶກສການ. 2540: 24).

1. ກິດຈະກຳທີ່ຄວນຄຳນຶງເຖິງຕົວເດັກເປັນສຳຄັນເດັກແຕ່ລະຄົນມີຄວາມສົນໃຈແຕກຕ່າງກັນຈຶ່ງຄວນຈັດໃຫ້ມີກິດຈະກຳຫລາຍປະເພດທີ່ເຫມາະສົມກັບໄວອາຍຸເຂົ້າກັບຄວາມສົນໃຈ ແລະ ຄວາມຕ້ອງການຂອງເດັກເພື່ອໃຫ້ເດັກມີໂອກາດເລືອກຕາມຄວາມສົນໃຈ ແລະ ຄວາມສາມາດ.

2. ກິດຈະກຳທີ່ຈັດຄວນມີທັງກິດຈະກຳທີ່ໃຫ້ເດັກເຮັດເປັນລາຍບຸກຄົນ, ກຸ່ມຍ່ອຍ ແລະ ກຸ່ມໃຫ່ຍຄວນເປີດໂອກາດໃຫ້ເດັກລິເລີ່ມກິດຈະກຳດ້ວຍຕົນເອງຕາມຄວາມເຫມາະສົມ.

3. ກິດຈະກຳທີ່ຈັດຄວນມີຄວາມສົມດູນຄື: ມີທັງກິດຈະກຳໃນຫ້ອງຮຽນ ແລະ ນອກຫ້ອງຮຽນກິດຈະກຳທີ່ຕ້ອງເຄື່ອນໄຫວ ແລະ ກິດຈະກຳທີ່ລິເລີ່ມ.

4. ໄລຍະເວລາໃນການຈັດກິດຈະກຳຄວນເຫມາະສົມກັບໄວມີການຢືດຢຸ່ນໄດ້ຕາມຄວາມຕ້ອງການ ແລະ ຄວາມສົນໃຈຂອງເດັກເຊັ່ນ:

- ອາຍຸ 3 ປີ ມີຄວາມສົນໃຈໄລຍະເວລາສັ້ນປະມານ ໑ ນາທີ
- ອາຍຸ 4 ປີ ມີຄວາມສົນໃຈຢູ່ໄດ້ປະມານ 12 ນາທີ
- ອາຍຸ 5 ປີ ມີຄວາມສົນໃຈໄດ້ປະມານ 15 ນາທີ

5. ກິດຈະກຳທີ່ຈະຄວນເນັ້ນໃຫ້ມີສີ່ຕົວຈິງໃຫ້ເດັກໄດ້ມີໂອກາດສັງເກດ, ສຳຫລວດ, ຄົ້ນຄວ້າ, ທົດລອງແກ້ປັນຫາດ້ວຍຕົນເອງມີໂອກາດປະຕິສຳພັນກັບເດັກຄົນອື່ນ ແລະ ຜູ້ໃຫຍ່ນອກຈາກນີ້ບົດບາດຂອງຄູມີສ່ວນສຳຄັນໃນການສົ່ງເສີມພັດທະນາການ ( ກຸນລະຍາ ຕັນທະລາຊີວະ. 2551: 21; ອ້າງອີງຈາກ Boulton lewis; & Catherwood. 1994: 103 – 104 ).

ເຊີມາເຊີ ( Schirmaher. 1993 1-2 ) ເວົ້າວ່ານັກການສຶກສາອະນຸບານໄດ້ແນມເຫັນຄຸນຄ່າຂອງຜົນງານສິລະປະທີ່ເດັກໄດ້ເຮັດເຖິງແມ່ນວ່າເດັກໃນໄວນີ້ຈະບໍ່ສົນໃຈ ແລະ ບໍ່ພ້ອມທີ່ຈະຮັບຮູ້ແບບວິຊາການແຕ່ວ່າເດັກກໍ່

ຍັງມີຄວາມສົນໃຈ ແລະ ພ້ອມທີ່ຈະເຮັດກິດຈະກຳທາງ ສິລະປະເຊິ່ງໄດ້ສະຫຼຸບກ່ຽວກັບສິລະປະສຳລັບເດັກອະນຸບານ ເປັນດັ່ງຕໍ່ໄປນີ້:

❖ ສົ່ງເສີມໃຫ້ເດັກໄດ້ສະແດງຄວາມຮູ້ສຶກຂອງຕົນເອງອອກມາຢ່າງອິດສະຫຼະເສລີເດັກຕ້ອງການສະແດງຄວາມຮູ້ສຶກຂອງຕົນເອງຜ່ານຜົນງານສິລະປະ ແລະ ເປັນເອກະລັກສະເພາະຕົວ.

❖ ສົ່ງເສີມໃຫ້ເກີດຄວາມສົມດູນລະຫວ່າງຂະບວນການຜົນຜະລິດທາງສິລະປະ, ໂປແກມສິລະປະທີ່ດີຈະຕ້ອງໄດ້ເຂົ້າໃຈ ແລະ ເກີດຄວາມຄິດຮ່ວມຍອດໃນຂໍ້ແທ້ຈິງທີ່ເດັກແຕ່ລະຄົນສາມາດເກີດໄດ້ທັງຂະບວນການ ແລະຜົນຜະລິດລວມທັງທັກສະທີ່ຕ້ອງການໃຫ້ເກີດແກ່ເດັກເຊັ່ນ: ການຍອດສີ, ການຕັດ, ການກໍ້ເຈ້ຍ, ການໂຮຍ, ການຕິດ ແລະ ການຖັກເປຍ. ຜົນຜະລິດຂອງການລົງມືເຮັດຄືຜົນງານ.

❖ ສົ່ງເສີມໃຫ້ເດັກມີຄວາມຄິດສ້າງສັນການກະຕຸ້ນໃຫ້ເດັກເກີດຄວາມຄິດສ້າງສັນຈຳເປັນທີ່ຈະຕ້ອງຄວນຄຳນຶງເຖິງສິ່ງຕໍ່ໄປນີ້:

- ເດັກຕ້ອງການເຮັດຫຍັງ ( ເນື້ອຫາ )
- ເດັກຕ້ອງເຮັດຫຍັງ ( ຂະບວນການ )
- ເດັກຕ້ອງການໄດ້ຫຍັງເປັນຜົນຜະລິດຂັ້ນສຸດທ້າຍ ( ຜົນຜະລິດ )

❖ ສົ່ງເສີມໃຫ້ເດັກໄດ້ລົງມືເຮັດ ແລະ ຄົ້ນຄ້ວາດ້ວຍຕົນເອງ ເດັກສາມາດສ້າງຜົນງານສິລະປະໂດຍຜ່ານການຄົ້ນຫາ ແລະ ທົດລອງການວາງແຜນໃນກິດຈະກຳສິລະປະສ້າງສັນແຕ່ລະຄັ້ງຈຶ່ງຕ້ອງມີການສອນວິທີການແຕ່ລະຂັ້ນເພື່ອໃຫ້ເດັກໄດ້ມີໂອກາດສະແດງຄວາມເປັນຕົວຂອງຕົວເອງບໍ່ວ່າຈະເປັນການຄົ້ນຄິດ, ການປະດິດ ແລະ ການທົດລອງທີ່ສ້າງສັນ.

❖ ສົ່ງເສີມກິດຈະກຳຢ່າງຕໍ່ເນື່ອງ ແລະ ການມີສ່ວນຮ່ວມຕະຫຼອດເວລາເດັກຈະມີການເຄື່ອນໄຫວ ແລະ ສະແດງອອກເຖິງສິລະປະການຍົກມື, ການຍືນ, ການລະບາຍສີ, ການໃຊ້ດິນນໍ້າມັນ, ການສີກ, ເຊິ່ງການເຄື່ອນໄຫວເລົ່ານີ້ເປັນການກະຕຸ້ນພັດທະນາການທາງດ້ານຮ່າງກາຍ ແລະ ການເຄື່ອນໄຫວການສົ່ງເສີມການສະແດງອອກຢ່າງເຕັມທີ່.

❖ ສ້າງແຮງຈູງໃຈໃຫ້ເກີດຂຶ້ນພາຍໃນຕົວເດັກສິລະປະເປັນກິດຈະກຳທີ່ເກີດຈາກແຮງຈູງໃຈພາຍໃນຕົນເອງເຊິ່ງນັກການສຶກສາເດັກອະນຸບານພົບວ່າ ການສ້າງສັນຜົນງານສິລະປະເກີດຈາກແຮງຈູງໃຈພາຍໃນທີ່ເດັກຕ້ອງການຮຽນຮູ້ ແລະ ຮັບຮູ້ສິ່ງຕ່າງໆອ້ອມຕົວ.

❖ ສ້າງຄວາມສຳເລັດ ແລະ ຄວາມພາກພູມໃຈໃນຜົນງານຂອງຕົນເອງ ການເລືອກກິດຈະກຳ ທາງສິລະປະທີ່ເໝາະສົມກັບພັດທະນາການຂອງສື່ອາຍຸ ແລະ ການສົ່ງເສີມຄວາມສຳເລັດຂອງເດັກຄວາມຮູ້ສຶກທີ່ເດັກໄດ້ເຮັດສຳເລັດຊ່ວຍໃຫ້ເກີດຄວາມຄິດທາງບວກຕໍ່ຕົນເອງ ກິດຈະກຳທີ່ຍາກເກີນໄປຈະເປັນຕົວສະກັດກັ້ນເດັກ ແລະນຳໄປສູ່ຄວາມລົ້ມເຫຼວໃນທີ່ສຸດຖືວ່າເປັນອັນຕະລາຍຢ່າງຍິ່ງໃນການ ການພັດທະນາ.

ກອນວິພາ ສອນລົບກິດຈຳນົງ (2532: 25-26) ໄດ້ສະຫຼຸບບົດບາດ ແລະ ໜ້າທີ່ຄູໃນການຈັດກິດຈະກຳສິລະປະສ້າງສັນໄວ້ດັ່ງນີ້:

➢ ຕຽມຈັດໂຕະຮຽນ ແລະ ອຸປະກອນຕ່າງໆໃຫ້ພ້ອມກ່ອນເດັກເຂົ້າເຮັດກິດຈະກຳ.

➢ ໃນການຈັດກິດຈະກຳແຕ່ລະຄັ້ງຄວນຈັດກິດຈະກຳໄວ້ຫຼາຍໆຢ່າງ.

- ຄູຕ້ອງພະຍາຍາມໃຫ້ເດັກໄດ້ເຮັດກິດຈະກຳໝູນວຽນກັນໄປໃຫ້ພໍເໝາະກັບເວລາທີ່ກຳນົດ ແລະ ໃຫ້ເຮັດຢ່າງນ້ອຍ 2 ກິດຈະກຳແລ້ວຈຶ່ງໄປຫຼິ້ນຕາມມູມຕ່າງໆໃນຫ້ອງຮຽນໄດ້.
- ເມື່ອປະຕິປັດແລ້ວທຸກຄົນຕ້ອງເກັບວັດສະດຸ ແລະ ເຄື່ອງມືທີ່ໃຊ້ໄວ້ບ່ອນເກົ່າ ຫຼື ສົ່ງຄືນສາວຄູ.
- ໃຫ້ປະຕິບັດກິດຈະກຳເປັນກຸ່ມຍ່ອຍຢ່າງເປັນລະບຽບ.
- ພະຍາຍາມຫາວິທີໃຫ້ເດັກໄດ້ເຮັດກິດຈະກຳຫຼາກຫຼາຍ ກິດຈະກຳບໍ່ແມ່ນວ່າຈະເລືອກເຮັດແຕ່ກິດຈະກຳດຽວ.
- ຊົມເຊີຍໃຫ້ກຳລັງໃຈ ແລະ ຊ່ວຍເຫຼືອເດັກທີ່ບໍ່ປະສົບຄວາມສຳເລັດໃນການເຮັດກິດຈະກຳໃຫ້ໄດ້ຮັບຜົນສຳເລັດໃນບາງຄັ້ງຕາມຄວາມສົມຄວນ.
- ນຳຜົນງານມາຕິດໃສ່ຜະໜັງໃຫ້ກຽດໂດຍການໝຸນວຽນຕ່າງໆຂອງເດັກໃຫຄົບທຸກຄົນ.

ພີລະພົງ ກຸນພິສານ (2533: 214-215) ໄດ້ກ່າວວ່າ ການຈັດກິດຈະກຳການສອນສິລະປະສ້າງສັນ ສຳລັບເດັກອະນຸບານຈຶ່ງຄວນຄຳນຶງເຖິງສິ່ງຕໍ່ໄປນີ້:

- ວາງແຜນການສອນໄລຍະຍາວວ່າແຕ່ລະອາທິດຈະໃຫ້ເດັກເຮັດຫຍັງແນ່ຕາມລຳດັບຄວາມຍາກງ່າຍຂອງກິວິທີປະຕິບັດກິດຈະກຳ ແລະ ຄວນໂດຍກຳນົດຈຸດປະສົງ ແລະ ວິທີປະເມີນຜົນໄວ້ຍິ່ງດີຈັດຕຽມວັດຖຸອຸປະກອນ, ສະພາບຫ້ອງຮຽນ ແລະ ວິທີສອນໃຫ້ສອດຄ່ອງກັບແຜນທີ່ວາງໄດ້.
- ລະຫວ່າງທີ່ເດັກປະຕິບັດກິດຈະກຳຄວນຄຳນຶງຢູ່ສະເໝີວ່າ:
- ກິດຈະກຳທີ່ຈັດນັ້ນເປີດໂອກາດໃຫ້ເດັກໄດ້ໃຊ້ປະສົບການເຂົ້າກັບສິ່ງແວດລ້ອມນອກຫ້ອງຮຽນພຽງພໍ ຫຼື ບໍ່.
- ຫຼີກລຽງກິດຈະກຳທີ່ໃຫ້ເດັກເຮັດແລ້ວມີຜົນງານຄືກັນໝົດຫ້ອງ.
- ພຶດຕິກຳການປະຕິບັດກິດຈະກຳສິລະປະຂອງເດັກແຕ່ລະຄົນບໍ່ຄືກັນບາງຄົນມັກນັ່ງຢູ່ໂຕະ, ບາງຄົນມັກນອນກັບພື້ນ ຄວນໃຫ້ອິດສະຫຼະຢ່າງເຕັມທີ່ ຖ້າໄດ້ກປະຕິບັດກິດຈະກຳດ້ວຍຄວາມສຸກຫ້ອງຮຽນຈະງຽບສະຫງົບເອງ.
- ໃຫ້ໂອກາດເດັກປະຕິບັດກິດຈະກຳເປັນກຸ່ມເພື່ອຝຶກປະສົບການທາງສັງຄົມໃຫ້ແກ່ເຂົາ.
- ໃຫ້ຜູ້ປົກຄອງມີສ່ວນຊ່ວຍໃນການເສີມສ້າງປະສົບການທາງສິລະປະຂະນະທີ່ເດັກຢູ່ເຮືອນ.
- ມີຄວາມເມດຕາ ແລະ ຫວັງດີແກ່ເດັກທຸກຄົນໂດຍສະແດງຄວາມຮັກ ແລະ ຫ່ວງໃຍເດັກຢູ່ສະເໝີພະຍາຍາມໃຊ້ຄຳເວົ້າທີ່ອ່ອນໂຍນ ຫຼື ກະຕຸ້ນຈິນຕະນາການຂອງເດັກການປະຕິບັດກິດຈະກຳຢູ່ສະເຫມີ ສະຫລຸບແລ້ວໃນການຈັດກິດຈະກຳສິລະປະສ້າງສັນສຳລັບເດັກອະນຸບານຈະຕ້ອງເປີດໂອກາດໃຫ້ເດັກມີອິດສະຫຼະໃນການເຮັດກິດຈະກຳໂດຍຕ້ອງຄຳນຶງເຖິງຄວາມສາມາດທີ່ແຕກຕ່າງຂອງແຕ່ລະຄົນໂດຍຕ້ອງເຂົ້າໃຈເຖິງໄວອາຍຸ ແລະ ຂັ້ນການຈະເລີນເຕີບໂຕຂອງເດັກໃນແຕ່ລະສົ່ງອາຍຸເພື່ອທີ່ຈະໄດ້ເລືອກກິດຈະກຳ ແລະ ລຳດັບວັດຖຸອຸປະກອນໃຫ້ເຫມາະສົມກັບເດັກແຕ່ລະຄົນ ນອກຈາກນີ້ຍັງຕ້ອງຄຳນຶງເຖິງຊ່ວງເວລາການປະຕິບັດກິດຈະກຳ ຈັດວັດຖຸອຸປະກອນໃຫ້ພຽງພໍເຫມາະສົມ ແລະ ຈັດສະພາບແວດລ້ອມທີ່ເອື້ອອຳນວຍຕໍ່ການປະຕິບັດກິດຈະກຳ ສິລະປະຊ່ວຍໃຫ້ມີສະມາທິເຊິ່ງສົ່ງຜົນເຖິງຈິດໃຈໃຫ້ມີຄວາມສຸກໃນການປະຕິບັດກິດຈະກຳ.

ສິປະລະການພັບເຈ້ຍ ຫຼື ພາສາຢີ່ປຸ່ນເອີ້ນວ່າ ອໍຣິກາມິ ( ORIGAMI ) ຄຳວ່າອໍຣິ ( ORI ) ແປວ່າການ ພັບ ສ່ວນກາມິ ( KAMI ) ແປວ່າເຈ້ຍ ຢ່າງໃດກໍ່ຕາມສິລະປະການພັບເຈ້ຍເລີ່ມພົບການພັບເຈ້ຍຄັ້ງແລກທີ່ປະເທດຈີນ

ຕັ້ງແຕ່ສະຕະວັດທີ 1 ຫລື 2 ແລະ ມີການນາເຂົ້າມາໃນປະເທດຍີ່ປຸ່ນໃນສະຕະວັດທີ 6 ( Callln; & Jeremy. 1999: online ). ປະຈຸບັນເຈ້ຍທີ່ໃຊ້ໃນການພັບນັ້ນມີຫລາຍຂະຫນາດ, ຫລາຍສີຫາຊື້ໄດ້ງ່າຍລາຄາບໍ່ແພງ ແລະ ບາງຊະນິດບໍ່ຕ້ອງຊື້ຫາ: ເຈ້ຍສີ, ເຈ້ຍຫໍ່ຂອງຂ້ວນ, ເຈ້ຍຫນັງສືພິມ ຫລື ເຈ້ຍເຫລືອໃຊ້ຕາມນິຕິຍາສານຕ່າງໆ ການເລືອກໃຊ້ເຈ້ຍສໍາລັບທີ່ຈະນໍາມາພັບນັ້ນຂຶ້ນຢູ່ກັບສິ່ງທີ່ຕ້ອງການຈະພັບສໍາລັບເດັກອະນຸບານໃນໄວນີ້ການໃຊ້ເຈ້ຍທີ່ມີຂະຫນາດໃຫຍ່ ຫລື ນ້ອຍເກີນໄປ ແລະ ບໍ່ຫນາເກີນໄປເພາະເດັກຈະສ້າງຜົນງານປະດິດຈາກເສດວັດສະດຸໄດ້ຢາກລໍາບາກໂດຍຂະຫນາດຂອງເຈ້ຍທີ່ເຫມາະສົມສໍາລັບເດັກອະນຸບານທີ່ນໍາມາໃຊ້ພັບນັ້ນຄວນມີລັກສະນະດັ່ງນີ້: (ກຸນລະຢາ ຕັນທະລາຊີວະ 2451: 58-59)

- ເຈ້ຍສີ່ລ່ຽມຈະຕຸລັດຄວນມີຂະຫນາດ 14*15 ຊມ.
- ເຈ້ຍສີ່ລ່ຽມຜືນຜ້າຂະຫນາດ 15*24 ຊມ.
- ເຈ້ຍທີ່ສາມາດໃຊ້ໄດ້ເລີຍຄື: A4.
- ເຈ້ຍຫນັງສືພິມ.
- ເຈ້ຍທີ່ໃຊ້ບໍ່ຄວນໃຫ້ແຂງເກີນໄປເຊິ່ງບໍ່ຄວນເກີນ 70 ແກຣມ.

ກິດຈະກໍາການພັບເຈ້ຍເປັນການປະດິດເຈ້ຍໃຫ້ມີລັກສະນະເປັນຮູບ 3 ມິຕິທີ່ຕ້ອງອາໃສການປະຕິບັດປະສານສໍາພັນລະຫວ່າງກ້າມຊີ້ນມື-ຕາ ແລະ ນິ້ວມື ພັບເຈ້ຍໃຫ້ເປັນຮູບສັນຍາລັກຕາມລໍາດັບ ແລະ ຂັ້ນຕອນ ( ເກສີນີ ນິໄສຈະເລີນ. 2527: 5-6 ) ສອດຄ່ອງກັບກຸນລະຍາ ຕັນຜະລາຊີວະ ( 2547: 103 ) ການພັບເຈ້ຍ ເປັນກິດຈະກໍາທີ່ເພີ່ມຄວາມສາມາດໃນການຄວບຄຸມກ້າມຊີ້ນມື, ຂໍ່ມື ແລະ ການໃຊ້ສາຍຕາໃຫ້ສໍາພັນກັບມືຄວາມສາມາດໃນການພັບແຕ່ລະລະດັບອາຍຸຈະຕ່າງກັນເຊິ່ງສາມາດແຕກຕ່າງຕາມໄວອາຍຸດັ່ງນີ້:

- ເດັກອາຍຸ 3-4 ປີ ຮູ້ຈັກພັບເຈ້ຍແລ້ວຫັດພັບຕາມຮອຍເຄິ່ງ 4 ສ່ວນໄດ້ ແລະ ສາມາດພັບເຈ້ຍແລ້ວຣີດໄດ້ຮຽບຮ້ອຍເພາະເດັກເລີ່ມໃຊ້ນິ້ວມື, ນິ້ວຊີ້ຄ່ອງແຄ້ວ.
- ເດັກອາຍຸ 4-5 ປີ ຈະພັບເຈ້ຍຊ້ອນກັນ 3 ທົບໄດ້ໃຊ້ນິ້ວຣີດຮອຍພັບໄດ້ພັບເຈ້ຍເປັນຮູບຮ່າງແບບງ່າຍໄດ້ເຊັ່ນ: ຈະຫຼວດ, ເຮືອ ແລະ ປາ.
- ເດັກອາຍຸ 5-6 ປີ ຈະພັບເຈ້ຍຮູບຕ່າງໆເຊິ່ງມີຮູບຮ່າງ ແລະ ລາຍລະອຽດໄດ້.

ການພັບເຈ້ຍຈຶ່ງເປັນການເຝິກກ້າມຊີ້ນມືບັງຄັບການເຄື່ອນໄຫວຂອງມື ກ່ອນຈະນໍາໄປສູ່ການຈັບບິກ, ຈັບສໍຂຽນໜັງສື ຫຼື ເຝິກສະມາທິ ເນື່ອງຈາກກິດຈະກໍາການພັບເຈ້ຍເປັນກິດຈະກໍາທີ່ໃຊ້ມືທັງສອງເບື້ອງຄວບຄູ່ກັບການປະຕິບັດງານຂອງສະໝອງທັງ 2 ເບື້ອງ ເຊິ່ງໃນການເຮັດວຽກຂອງໜ່ວຍຄວບຄຸມເບື້ອງຊ້າຍ ສະຫມອງຈະໄດ້ຮັບການພັດທະນາ, ຄວາມຊໍານານຕົວເລກ, ການອ່ານ, ຂະບວນການຄົ້ນຫາເຫດຜົນ, ບັນຍາຍ ແລະ ຄວາມສາມາດທີ່ກ່ຽວກັບວິທະຍາສາດ ສ່ວນການເຮັດວຽກຂອງຫນ່ວຍຄວບຄຸມເບື້ອງຂວາ ສະໝອງຈະໄດ້ຮັບການພັດທະນາຄວາມເຂົ້າໃຈຢ່າງເລິກເຊິ່ງຮູບແບບການເຮັດຮູບ 3 ມິຕິ ຈິນຕະນາການ, ສິລະປະດົນຕີ ( Katrin; &Yuri Shumakov. 2000: Online).

**1.9.2 ທິດສະດີກ່ຽວກັບພັດທະນາການ ( Brunner)**

Brunner ເປັນນັກຈິດຕະວິທະຍາທາງດ້ານສະຕິປັນຍາຊາວອາເມລິກາ. ຜູ້ຍອມຮັບເອົາຫຼັກການຂອງ Piaget, Brunner ໄດ້ໃຊ້ຫຼັກການຂອງການພັດທະນາດ້ານສະຕິປັນຍາຂອງມະນຸດເພື່ອສ້າງທິດສະດີການຮຽນຮູ້ໂດຍການຄົ້ນພົບ (Discovery Approach) Brunner ເຊື່ອວ່າການຮຽນຮູ້ຈະເກີດຂຶ້ນໄດ້ ເມື່ອຜູ້ຮຽນມີການ

ພົວພັນກັບສະພາບແວດລ້ອມທີ່ນໍາໄປສູ່ການຄົ້ນພົບການແກ້ໄຂບັນຫາ. ໂດຍຄູເປັນຜູ້ຈັດສິ່ງແວດລ້ອມດ້ານຂໍ້ມູນ, ວັດຖຸປະສົງ,ຄໍາຖາມ ແລະ ຄວາມມຸ້ງຫວັງວ່າຜູ້ຮຽນຄົ້ນຫາຄໍາຕອບດ້ວຍຕົນເອງ.

Brunner ເຊື່ອວ່າການຮັບຮູ້ຂອງມະນຸດເປັນສິ່ງທີ່ເລືອກຮັບຮູ້ຕາມຄວາມສົນໃຈທີ່ມະນຸດມີຕໍ່ສິ່ງທີ່ຮຽນຮູ້. ການຮຽນຮູ້ຈິງເກີດການຄົ້ນພົບ. ໂດຍມີຄວາມຢາກຮູ້ຢາກເຫັນທໍາອິດຊຸກຍູ້ເຮັດໃຫ້ເກີດພຶດຕິກໍາການສໍາຫຼວດສະພາບແວດລ້ອມ ແລະ ການຮຽນຮູ້ເກີດຂຶ້ນ ວິທີທີ່ຜູ້ຮຽນໃຊ້ເປັນເຄື່ອງມືເພື່ອຄົ້ນພົບຄວາມຮູ້ຂຶ້ນກັບການພັດທະນາຂອງຜູ້ຮຽນ ຂັ້ນພັດທະນາການທີ່ Brunner ສະເໜີມີ 3 ຂັ້ນຄື ເອັນແອັກທີບ (Enactive) ໄອຄອນນິກ (Iconic) ແລະ ຊິມໂບລິກ (Symbolic) ສະນັ້ນວິທີການທີ່ຜູ້ຮຽນໃຊ້ເຄື່ອງມືສໍາລັບການຄົ້ນພົບຄວາມຮູ້ໄດ້ຖືກແບ່ງອອກເປັນ 3 ວິທີການ.

1) ເອັນແອັກທີບ Enactive ແມ່ນວິທີທີ່ຜູ້ຮຽນມີການພົວພັນກັບສະພາບແວດລ້ອມໂດຍການສໍາຜັດດ້ວຍມື ຫຼື ອະໄວຍະວະຂອງຮ່າງກາຍ.

2) Iconic Mode ເປັນວິທີການໃຫ້ນັກຮຽນສ້າງຈິນຕະນາການ ຫຼື ສ້າງມະໂນພາບ (Imagery) ຢູ່ໃນໃຈໂດຍການໃຊ້ຮູບພາບແທນຂອງຈິງໂດຍບໍ່ຈໍາເປັນຕ້ອງສໍາຜັດກັບຂອງຈິງ.

3) ສັນຍາລັກ (Symbolic Mode) ເປັນວິທີການໃຫ້ຜູ້ຮຽນໃຊ້ສັນຍາລັກເພື່ອເກີດການຮຽນຮູ້. ສາມາດເຂົ້າໃຈສິ່ງທີ່ເປັນນາມມະທໍາ ຫຼື ແນວຄວາມຄິດລວມຍອດທີ່ສັບຊ້ອນ ຈິ່ງສາມາດທີ່ສ້າງສົມມຸດຕິຖານ ແລະ ພິສູດສົມມຸດຕິຖານໄດ້.

Brunner ກ່າວຜູ້ຮຽນມີວິທີການຮຽນຮູ້ດ້ວຍ 3 ວິທີທີ່ແຕກຕ່າງກັນຂອງການຮຽນຮູ້ການຄົ້ນພົບຂຶ້ນຢູ່ກັບອາຍຸຂອງການຮຽນຮູ້. ແຕ່ໃນຊີວິດຈິງ, ນັ້ນບໍ່ໄດ້ໝາຍຄວາມວ່າຜູ້ໃຫຍ່ບໍ່ສາມາດເຂົ້າເຖິງແນວຄວາມຄິດອັນຍິ່ງໃຫຍ່, ບໍ່ເຄື່ອນໄຫວ ຫຼື ເປັນສັນຍາລັກ. ມັນເປັນພຽງແຕ່ວ່າຜູ້ໃຫຍ່ໃຊ້ສັນຍາລັກເປັນເຄື່ອງມືເພື່ອຮຽນຮູ້ເພີ່ມເຕີມ. ເພື່ອຮຽນຮູ້ທັກສະບາງຢ່າງ, ເຊັ່ນການຂັບລົດ, ນັກຮຽນຍັງຕ້ອງໄດ້ປະຕິບັດ. ເຊິ່ງເປັນບາດກ້າວການຮຽນຮູ້ສໍາຄັນ ແລະ ຍິ່ງໃຫຍ່.

Brunner ເຫັນດີກັບ Piaget ວ່າ ມະນຸດມີໂຄງສ້າງທາງປັນຍາ (Cognitive Structure) ມາຕັ້ງແຕ່ເກີດ. ໃນໄວເດັກໂຄງສ້າງທາງສະຕິປັນຍາບໍ່ສັບຊ້ອນເພາະວ່າມັນຍັງບໍ່ທັນໄດ້ພັດທະນາຕໍ່ເມື່ອມີປະຕິສໍາພັນກັບສະພາບແວດລ້ອມຈະເຮັດໃຫ້ໂຄງສ້າງທາງສະຕິປັນຍາຂະຫຍາຍ ແລະ ສັບຊ້ອນຫຼາຍຂຶ້ນ. ໜ້າທີ່ຂອງໂຮງຮຽນແມ່ນ ອໍານວຍຄວາມສະດວກໃນການຂະຫຍາຍຕົວຂອງໂຄງສ້າງທາງສະຕິປັນຍາຂອງຜູ້ຮຽນ Brunner ໄດ້ໃຫ້ຫຼັກການກ່ຽວກັບການສອນຄື:

1) ຂະບວນການຄິດຂອງເດັກນ້ອຍແຕກຕ່າງຈາກຜູ້ໃຫຍ່ ຄູຄວນເຂົ້າໃຈຂະບວນການຄິດຂອງຜູ້ຮຽນໃນແຕ່ລະອາຍຸ.

2) ເນັ້ນຄວາມສໍາຄັນຂອງຜູ້ຮຽນຄາດວ່າຜູ້ຮຽນຈະສາມາດຄວບຄຸມກິດຈະກໍາການຮຽນຮູ້ຂອງຕົນເອງໄດ້. (SelfRegulation) ແລະ ເປັນຜູ້ທີ່ຈະລິເລີ່ມລົງມືປະຕິບັດ ຜູ້ສອນມີໜ້າທີ່ຈັດສະພາບແວດລ້ອມທີ່ເອື້ອອໍານວຍໃຫ້ແກ່ການຮຽນຮູ້ໂດຍການຄົ້ນພົບໃຫ້ຜູ້ຮຽນໄດ້ມີໂອກາດພົວພັນກັບສິ່ງແວດລ້ອມ.

3) ໃນການສອນຄວນເລີ່ມຈາກປະສົບການທີ່ນັກຮຽນຄຸ້ນເຄີຍ ຫຼື ປະສົບການໃກ້ຕົວໄປຫາປະສົບການທີ່ໄກຕົວ

## 2.1.10 ແບບເຝິກ

### 2.10.1 ຄວາມໝາຍຂອງແບບເຝິກ

ແບບເຝິກໝາຍເຖິງສື່ການຮຽນຮູ້ທີ່ຄູສ້າງຂຶ້ນເພື່ອໃຫ້ຜູ້ໄດ້ທົບທວນເນື້ອໃນບົດຮຽນທີ່ຮຽນຮູ້ ແລະ ສ້າງໃຫ້ຜູ້ຮຽນມີຄວາມຮູ້, ຄວາມເຂົ້າໃຈໃນຂະບວນການຮຽນ ການສອນ ເຮັດໃຫ້ຜູ້ຮຽນສາມາດເຫັນຄວາມກ້າວໜ້າຈາກຜົນການຮຽນຂອງຕົນເອງໄດ້ ( ໄພທູນມຸນດີ. 2546: 48 ).

ແບບເຝິກເປັນສ່ວນໃນການຮຽນ-ການສອນເພາະຖ້າຂາດແບບເຝິກເຮົາກໍບໍ່ສາມາດເຝິກຝົນທັກສະໃຫ້ມີຄວາມຮູ້ໄດ້, ແບບເຝິກທັກສະນີ້ເພື່ອໃຊ້ໃນການເຝິກຝົນທັກສະຄວາມຮູ້ຕ່າງໆຈາກໄດ້ຮຽນໄປແລ້ວນັກຮຽນກໍອາດລືມການຮຽນຜ່ານໄປໄດ້ ເຊິ່ງອາດຈະສົ່ງຜົນສະທ້ອນໃຫ້ການຈັດກິດຈະກຳການຮຽນ-ການສອນ ຫຼື ນັກຮຽນບໍ່ມີປະສິດທິພາບໃນການຮຽນຮູ້ເທົ່າທີ່ຄວນ ( ຄຳຂິມ ແສນກ້າ 2547: 32 ).

ຈາກຄວາມໝາຍທີ່ກ່າວມານັ້ນພໍສະຫຼຸບໄດ້ວ່າ ແບບເຝິກຄືເຄື່ອງມືຊະນິດໜຶ່ງທີ່ຊ່ວຍການຈັດກິດຈະກຳການຮຽນຮູ້ທີ່ຊ່ວຍພັດທະນາໃຫ້ຜູ້ຮຽນເກີດຄວາມເຂົ້າໃຈຕໍ່ຂັ້ນຕອນໃນການຮຽນ ແລະ ປະຕິບັດກິດຈະກຳຮ່ວມກັນກັບຄົນອື່ນໄດ້ດີ.

### 2.10.2 ປະໂຫຍດຂອງແບບເຝິກ

Petty (Petty, 1963, ໜ້າ 469 - 472 ອ້າງອີງໃນ Phanomwan Vordon, 1999, ໜ້າ 38 - 39) ໄດ້ປຶກສາຫາລືກ່ຽວກັບຜົນປະໂຫຍດຂອງການອອກກຳລັງກາຍດັ່ງນີ້:

1. ເປັນການເພີ່ມ ຫຼື ເສີມໃສ່ປຶ້ມແບບຮຽນໃນທັກສະການຮຽນຮູ້ ມັນເປັນເຄື່ອງມືການສອນທີ່ຊ່ວຍຫຼຸດຜ່ອນພາລະຂອງຄູໄດ້ຫຼາຍ ເພາະການອອກກຳລັງກາຍໄດ້ຖືກຈັດຂຶ້ນຢ່າງເປັນລະບົບ
2. ຊ່ວຍເສີມສ້າງທັກສະພາສາ ການອອກກຳລັງກາຍແມ່ນເຄື່ອງມືທີ່ຊ່ວຍໃຫ້ເດັກນ້ອຍຝຶກທັກສະຂອງເຂົາເຈົ້າໃນການນຳໃຊ້ພາສາແມ່ນດີ, ແຕ່ມັນຍັງຕ້ອງການການສະໜັບສະໜູນແລະຄວາມສົນໃຈຈາກຄູສອນ.
3. ຊ່ວຍໃນຄວາມແຕກຕ່າງຂອງບຸກຄົນ ເນື່ອງຈາກວ່າເດັກນ້ອຍມີທັກສະພາສາເຂົາເຈົ້າມີຄວາມແຕກຕ່າງກັນ, ການໃຫ້ເດັກນ້ອຍອອກກຳລັງກາຍທີ່ເຫມາະສົມກັບຄວາມສາມາດຂອງເຂົາເຈົ້າຈະຊ່ວຍໃຫ້ເຂົາເຈົ້າປະສົບຜົນສຳເລັດທາງດ້ານຈິດໃຈຫຼາຍຂຶ້ນ.
4. ແບບອອກກຳລັງກາຍຊ່ວຍເພີ່ມຄວາມເຂັ້ມແຂງດ້ານພາສາໂດຍການເຮັດດັ່ງຕໍ່ໄປນີ້:

   4.1 ປະຕິບັດທັນທີຫຼັງຈາກເດັກໄດ້ຮຽນຮູ້ວິຊາ.

   4.2 ຝຶກຊ້ອມເລື້ອຍໆ

   4.3 ເນັ້ນໃສ່ວິຊາສະເພາະທີ່ຈະປະຕິບັດ

5. ບົດຝຶກຫັດທີ່ໃຊ້ເປັນເຄື່ອງມືໃນການວັດແທກຜົນການຮຽນຫຼັງແຕ່ລະບົດຮຽນ.

6. ບົດຝຶກຫັດທີ່ກະກຽມໃນຮູບແບບຂອງປຶ້ມ ເດັກນ້ອຍສາມາດເກັບຮັກສາມັນໄວ້ສຳລັບການຊີ້ນຳແລະການທົບທວນຄືນ.ສາມາດສືບຕໍ່ດ້ວຍຕົນເອງ

7. ການໃຫ້ເດັກນ້ອຍເຮັດບົດຝຶກຫັດ ຊ່ວຍໃຫ້ຄູເຫັນຈຸດແຂງ ຫຼື ບັນຫາຂອງເດັກຢ່າງຈະແຈ້ງຈະຊ່ວຍໃຫ້ຄູປັບປຸງແລະແກ້ໄຂບັນຫານັ້ນໄດ້ທັນເວລາ.

8. ການອອກກຳລັງກາຍທີ່ກຽມພ້ອມ ນອກ ເໜືອ ໄປຈາກສິ່ງທີ່ມີຢູ່ໃນປຶ້ມແບບຮຽນ ຈະຊ່ວຍໃຫ້ເດັກນ້ອຍປະຕິບັດຢ່າງເຕັມສ່ວນ

9. ອອກກຳລັງກາຍພິມສຳເລັດຮູບ ມັນອະນຸຍາດໃຫ້ຄູອາຈານທີ່ຈະຊ່ວຍປະຢັດທັງແຮງງານແລະເວລາທີ່ຈະຕ້ອງກຽມພ້ອມສະເໜີເພື່ອສ້າງບົດຝຶກຫັດ. ໃນແງ່ຂອງນັກຮຽນ, ພວກເຂົາບໍ່ຈຳເປັນຕ້ອງເສຍເວລາທີ່ຈະສຳເນົາການປະຕິບັດຈາກປຶ້ມແບບຮຽນ. ນີ້ເຮັດໃຫ້ທ່ານມີໂອກາດທີ່ຈະຝຶກທັກສະຫຼາຍຂຶ້ນ.

10. ອອກກຳລັງກາຍປະຢັດເງິນ. ເນື່ອງຈາກວ່າການພິມໃນແບບຟອມຫນັງສືແນ່ນອນຈະລົງທຶນຫນ້ອຍກ່ວາການພິມໃນເຈ້ຍຂີ້ເຝື້ອທຸກຄັ້ງ. ນັກຮຽນສາມາດບັນທຶກ ແລະເບິ່ງຄວາມຄືບໜ້າຂອງເຂົາເຈົ້າຢ່າງເປັນລະບົບ.

## 2.2 ງານວິໄຈທີ່ກ່ຽວຂ້ອງ

ນາງ ພອນລັດດາ ທຸມມະນີ ນັກສຶກສາຄູອະນຸບານ (2021) ໄດ້ສຶກສາຄົ້ນຄວ້າເລື່ອງ ການພັດທະນາກ້າມຊີ້ນມື ແລະ ນິ້ວມື ຜ່ານກິດຈະກຳສ້າງສັນໂດຍເນັ້ນການຈີກຕາມຮອຍຈໍ້າ ສຳລັບເດັກອະນຸບານ1 ໂຮງຮຽນອະນຸບານສາທິດ ວິທະຍາໄລຄູສາລະວັນ ເຊິ່ງມີຈຸດປະສົງ 1) ເພື່ອສ້າງແບບເຝິກທັກສະການຈີກເຈ້ຍ ຜ່ານກິດຈະກຳສ້າງສັນສຳລັບເດັກອະນຸບານ1ໂຮງຮຽນອະນຸບານສາທິດ ວິທະຍາໄລຄູສາລະວັນ ສົກຮຽນ 2020-2021. 2) ເພື່ອປຽບທຽບກ້າມຊີ້ນມືກ່ອນ ແລະ ຫຼັງກິດຈະກຳສ້າງສັນໂດຍເນັ້ນການຈີກຕາມຮອຍຈໍ້າ ສຳລັບເດັກອະນຸບານ1 ໂຮງຮຽນອະນຸບານສາທິດ ວິທະຍາໄລຄູສາລະວັນ ສົກຮຽນ 2020-2021. ກຸ່ມຕົວຢ່າງ: ການເຮັດສຶກສາຄັ້ງນີ້ແມ່ນນັກຮຽນອະນຸບານ1 ມີຈຳນວນ 15 ຄົນ,ຍິງ 10 ຄົນ, ເຄື່ອງມືທີ່ໃຊ້ໄດ້ແກ່: ບົດສອນ ຈຳນວນ 5 ບົດ, ແບບເຝິກທັກສະການຈີກຕາມຮອຍຈໍ້າ ຈຳນວນ 5 ຊຸດ, ແບບຟອມປະເມີນຜົນການຮຽນກ່ອນ ແລະ ຫຼັງ ເຝິກ 1 ຊຸດ.
ຜົນການສຶກສາພົບວ່າ

1) ຜົນສ້າງແບບເຝິກທັກສະການຈີກເຈ້ຍ ຜ່ານກິດຈະກຳສ້າງສັນ ສຳລັບເດັກອະນຸບານ 1 ໂຮງຮຽນອະນຸບານສາທິດ ວິທະຍາໄລຄູສາລະວັນ ສົກຮຽນ 2020-2021. ຜູ້ສຶກສາຄົ້ນຄ້ວາວິໄຈສາມາດສ້າງແຜນການສອນ ບົດສອນຈຳນວນ 5 ບົດ, ແບບເຝິກທັກສະການຈີກຕາມຮອຍຈໍ້າ ຈຳນວນ 5 ຊຸດ, ແບບຟອມປະເມີນຜົນການຮຽນກ່ອນ ແລະ ຫຼັງ ເຝິກ 1 ຊຸດ. 2) ຜົນການປຽບທຽບ ກ່ອນ ແລະ ຫຼັງເຝິກກິດຈະກຳສ້າງສັນໂດຍເນັ້ນການຈີກຕາມຮອຍຈໍ້າ ສຳລັບເດັກອະນຸບານ1 ໂຮງຮຽນອະນຸບານສາທິດ ວິທະຍາໄລຄູສາລະວັນ ສົກຮຽນ 2020-2021 ພົບວ່າຄະແນນສະເລ່ຍຂອງນັກຮຽນຫຼັງຮຽນສູງກວ່າກ່ອນຮຽນເຊິ່ງມີຄະແນນສະເລ່ຍກ່ອນຮຽນເທົ່າກັບ 9.50 ແລະ ຄະແນນສະເລ່ຍຫຼັງຮຽນເທົ່າກັບ 6.50 ດັ່ງນັ້ນນັກຮຽນມີເພີ່ມຂຶ້ນເທົ່າກັບ 3.00 ເຊິ່ງສະແດງໃຫ້ເຫັນວ່າພາຍຫຼັງຈັດການຮຽນ-ການສອນຜ່ານກິດຈະກຳສ້າງສັນໂດຍເນັ້ນການຈີກຕາມຮອຍຈໍ້າເຫັນວ່ານັກຮຽນກຸ່ມເປົ້າໝາຍມີການພັດທະນາກ້າມຊີ້ນມືໂດຍສະເພາະກ້າມຊີ້ນນ້ອຍໄດ້ມີຄວາມແຂງແຮງ ຂຶ້ນເປັນກ້າວໆເຊິ່ງສະແດງໃຫ້ເຫັນຈາກຜົນການປະເມີນຫຼັງເຝິກນັກຮຽນກຸ່ມຕົວຢ່າງມີຄະແນນສະເລ່ຍເພີ້ມຂຶ້ນຫຼາຍກວ່າກ່ອນເຝິກ.

ນິດນິສາ ບຸນພິມມະວົງ. (2552). ການສົ່ງເສີມພັດທະນາທາງດ້ານກ້າມຊີ້ນນ້ອຍປັບປຸງໂດຍໃຊ້ກິດຈະກຳປະກອບອາຫານໄທ.ການສຶກສາມີຈຸດປະສົງສຳຄັນ1 ເພື່ອການສຶກສາຄວາມແຕກຕ່າງ ແລະ ແກ້ໄຂພັດທະນາທາງດ້ານກ້າມຊີ້ນນ້ອຍເດັກກ່ອນໄວຮຽນ ແລະ ແຍກລາຍບຸກຄົນກ່ອນການດຳເນີນກິດຈະກຳ ແລະ ລະຫວ່າງການດຳເນີນລາຍການອາຫານປະເພດຂະໜົມໄທ ກຸ່ມຕົວຢ່າງທີ່ໃຊ້ໃນບົດສະຫຼຸບເປັນເດັກກ່ອນໄວຮຽນ ເພດຊາຍ–ຍິງອາຍຸລະຫວ່າງ 3–4 ປີ. ໂຮງຮຽນ ທັບທອງ ແຂວງຈຳປາສັກ ຈຳນວນ 15 ຄົນ ໄດ້ແບບເຈາະຈົງ (Purposive Sampling) ໂດຍເລືອກນັກຮຽນມາ 1 ຫຼື ຈາກ 3 ຫຼື ທົດລອງທົດລອງ 8 ອາທິດລະ 24 ຄັ້ງ 50 ນາທີ ເຄື່ອງມືທີ່ໃຊ້ໃນບົດສະຫຼຸບຄື ແຜນການປະກອບອາຫານປະເພດໄທ ແລະ ແບບປະເມີນການປະຕິບັດການພັດທະນາດ້ານກ້າມຊີ້ນນ້ອຍ ສຳລັບແບບປະເມີນມີຄ່າດັດສະນີຄວາມສອດຄ້ອງລະຫວ່າງພັດທະນາການກັບ (IOC)ຢູ່ລະຫ່ວາງ 0.67 – 1.00 ແລະ ມີຄ່າຄວາມເຊື່ອໝັ້ນເທົ່າກັບ .91 ການວິໄຈຄັ້ງນີ້ໃຊ້ການວິເຄາະຫາຄວາມແປປວນແບບວັດຊໍ້າ (One way Repeated ANOVA) ແລະ Partial 2 ແລະ ວິທີການປຽບທຽບລາຍຄູ່ໃຊ້ LSD ແບບວັດຊໍ້າ.

ຜົນໄດ້ຮັບການວິໄຈພົບວ່າ ພັດທະນາການດ້ານກ້າມຊີ້ນນ້ອຍເດັກກ່ອນໄວຮຽນກ່ອນການທົດລອງ ແລະ ຕະຫຼອດໄລຍະການທົດລອງສັບດາທີ 1 – 8 ມີຄວາມແຕກຕ່າງກນຢ່າງມີຄວາມສໍາຄັນທາງສະຖິຕິທີ່ລະດັບ.01 ( F = 2242.935 ) ແຕ່ມີການປ່ຽນແປງເກີດຂຶ້ນລະຫວ່າງອາທິດໂດຍການຈັດກິດຈະກໍາປະກອບອາຫານປະເພດຂະນົມໄທ ສິ່ງຜົນຕໍ່ພັດທະນາການດ້ານກ້າມຊີ້ນນ້ອຍ ໂດຍລວມຮ້ອຍລະ 99.4.

ນຸດຈະນີ ອູ່ທອງ ແລະ ອັດສະນີຍາ ສັດຈະກຸນ (2565) ສຶກສຶກ ຄົ້ນຄວ້າກ່ຽວກັບການສົ່ງເສີມການພັດທະນາກ້າມຊີ້ນ ແຂນນ້ອຍຂອງເດັກນ້ອຍໃນໄວເດັກ ການນໍາໃຊ້ຊຸດຂອງກິດຈະກໍາ ripping ແລະ patching ສົ່ງເສີມການພັດທະນາທັກສະເຄື່ອງຈັກທີ່ດີໃນໄວເດັກ ໂດຍການນໍາໃຊ້ຊຸດກິດຈະກໍາການຈີກ ແລະ ການສ້ອມແປງ Nuchchanee Uthong1 ແລະ Attaneeya Sajjapattanakun2 Nutjanee Outone ການສຶກສາຄົ້ນຄ້ວາຄັ້ງນີ້ມີຈຸດປະສົງ ເພື່ອປຽບທຽບການພັດທະນາທັກສະມໍເຕີທີ່ດີກ່ອນແລະ ຫຼັງຈາກເຫດການ ໂດຍນໍາໃຊ້ຊຸດກິດຈະກໍາການຈີກ ແລະ ແພຂອງນັກຮຽນອະນຸບານ 2 ທີ່ໂຮງຮຽນສາທິດປະຊາຊົນ ວິຊາທີ່ສຶກສາແມ່ນເດັກນ້ອຍຊາຍ ແລະ ເພດຍິງທີ່ມີອາຍຸລະຫວ່າງ 4-5 ປີ ແລະຮຽນຢູ່ຊັ້ນອະນຸບານ 2 ໃນສົກຮຽນ 2021. ໂຮງຮຽນສາທິດ (ວັງຢາງ) ມີນັກຮຽນທັງໝົດ 35 ຄົນ ເຄື່ອງມືຄົ້ນຄວ້າຄື: 1) ແຜນປະສົບການພັດທະນາ 8 ແຜນການພັດທະນາຈັກດີ 2) ການທົດສອບເພື່ອວັດແທກການພັດທະນາທັກສະການປັບໄຫມມໍເຕີສໍາລັບ 8 ກິດຈະກໍາ ສະຖິຕິສໍາລັບການວິເຄາະຂໍ້ມູນ ຊອກຫາຄວາມຄືບຫນ້າເປີເຊັນ ຜົນຂອງການສຶກສາພົບວ່າ ການພັດທະນາທັກສະທາງດ້ານມໍເຕີທີ່ດີຂອງເດັກນ້ອຍໃນໄວເດັກ ການນໍາໃຊ້ຊຸດກິດຈະກໍາ rip ໂດຍລວມແລ້ວ, ມີອັດຕາສ່ວນຄວາມຄືບໜ້າຂອງນັກຮຽນທັງໝົດເພີ່ມຂຶ້ນ. ແລະເມື່ອປຽບທຽບຊັ້ນຮຽນທັງຫມົດ, ມັນພົບເຫັນວ່າ ອັດຕາສ່ວນຄວາມຄືບໜ້າຂອງຫ້ອງຮຽນທັງໝົດແມ່ນ 27.2.

ນາງ ຊູລີພອນ ນາທົ່ວນິນ( ບົດຫຍໍ້ ) ສຶກສາຄົ້ນຄວ້າກ່ຽວກັບການພັດທະນາທັກສະທາງດ້ານມໍເຕີທີ່ດີຂອງເດັກນ້ອຍໃນໄວເດັກ ໂດຍນໍາໃຊ້ກິດຈະກໍາການແກະສະຫຼັກແບບສ້າງສັນ ການຄົ້ນຄວ້ານີ້ມີຈຸດປະສົງແມ່ນເພື່ອສົມທຽບການພັດທະນາທັກສະດ້ານມໍເຕີທີ່ດີຂອງເດັກນ້ອຍອະນຸບານ. ກ່ອນ ແລະ ຫຼັງການເຄື່ອນໄຫວປະດິດສ້າງ ຕົວຢ່າງທີ່ນໍາໃຊ້ໃນການຄົ້ນຄ້ວາແມ່ນເດັກອາຍຸລະຫວ່າງ 3-4 ປີ ເປັນນັກສຶກສາທີ່ຮຽນຢູ່ລະດັບອະນຸບານ 2 ໂຮງຮຽນບ້ານເດືອກວາລິນຈໍາປາ. ເມືອງວາລິນ ຈໍາປາສັກ ແຂວງອຸບົນຣາຊະທານີ ພາຍໃຕ້ຫ້ອງການຄະນະກໍາມະການສຶກສາເອກະຊົນ, 15 ຄົນໄດ້ຮັບໂດຍການສຸ່ມແບບງ່າຍດາຍ. ເວລາຮຽນແມ່ນພາກຮຽນລະດູຮ້ອນ, ສົກຮຽນ 2018, ໄລຍະເວລາ 4 ອາທິດ, ວັນຈັນ-ວັນສຸກ, 40 ນາທີ/ມື້ ເລີ່ມແຕ່ເວລາ 10.00-10.40 ໂມງ ໃນໄລຍະການເຄື່ອນໄຫວສ້າງສັນ. ເຄື່ອງມືທີ່ໃຊ້ໃນການຄົ້ນຄວ້າແມ່ນການປະເມີນການພັດທະນາຂອງທັກສະທາງດ້ານມໍເຕີທີ່ດີຂອງເດັກນ້ອຍໃນໄວເດັກ. ແລະ 20 ແຜນການເຄື່ອນໄຫວການຮຽນຮູ້, ສະຖິຕິທີ່ນໍາໃຊ້ແມ່ນຄ່າສະເລ່ຍ, ຄວາມບ່ຽງເບນມາດຕະຖານ t (T-test Dependent Sample) ແລະ ສັງລວມຂໍ້ສັງເກດໃນລະຫວ່າງກິດຈະກໍາໂດຍການບັນຍາຍ. ຜົນໄດ້ຮັບສະແດງໃຫ້ເຫັນວ່າ ການພັດທະນາທັກສະທາງດ້ານມໍເຕີທີ່ດີຂອງເດັກນ້ອຍໃນໄວເດັກ ໂດຍນໍາໃຊ້ກິດຈະກໍາການແກະສະຫຼັກແບບສ້າງສັນທັງໃນດ້ານລວມ ແລະ ສ່ວນບຸກຄົນ. ຄະແນນສະເລ່ຍຫຼັງຈາກກິດຈະກໍາແມ່ນສູງກວ່າກ່ອນກິດຈະກໍາສ້າງສັນ.

ວິພາພອນ ໂຕ້ແຍ້ມ ແລະ ລຸຈິລາ ລຸ້ງສຸສຸດ ( 2557,3 ) ສຶກສາຄົ້ນຄວ້າກ່ຽວກັບການພັດທະນາກ້າມເນື້ອຂະໜາດນ້ອຍ ການນໍາໃຊ້ກິດຈະກໍາສິລະປະສ້າງສັນຈາກອຸປະກອນການຖິ້ມຂອງນັກຮຽນອະນຸບານ ມີຈຸດປະສົງຂອງການຄົ້ນຄວ້ານີ້ແມ່ນ 1) ເພື່ອພັດທະນາວຽກງານສິລະປະປະດິດຈາກສິ່ງເສດເຫຼືອ ເພື່ອພັດທະນາທັກສະການຈັກດີຂອງນັກຮຽນອະນຸບານ ມ.1/1 ໂຮງຮຽນສີ່ສານມວນຊົນ ກອງທັບອຸປະຖາ 2) ເພື່ອປຽບທຽບຄວາມສາມາດໃນການນໍາໃຊ້ທັກສະເຄື່ອງຈັກດີຂອງນັກຮຽນອະນຸບານທີ່ 1/1 ໂຮງຮຽນ ກອງທັບ ລາດຊະວົງ ອຸປະຖາ ສຸກສາຫາ ກ່ອນ ແລະ ຫຼັງ ເຮັດວຽກ ການສຶກສາຄັ້ງນີ້ມີຈຸດປະສົງເພື່ອດໍາເນີນກິດຈະກໍາສິລະປະສ້າງສັນຈາກສິ່ງເສດເຫຼືອ, ກຸ່ມເປົ້າໝາຍທີ່ໃຊ້ໃນການຄົ້ນຄວ້າຄັ້ງນີ້ແມ່ນນັກຮຽນຊາຍ ແລະ ຍິງ ອາຍຸ 3-4 ປີ ທີ່ກາລັງສຶກສາຢູ່ຊັ້ນອະນຸບານ 12. ສົກຮຽນ 1/1 ສົກຮຽນ 2012 ຂອງໂຮງຮຽນ ກອງທັບລາດຊະວົງອຸປະຖາ ແສນສິງຄຣ, ເມືອງ ດິກທີລາດ,

ບາງກອກ, ພາຍໃຕ້ ຫ້ອງການຄະນະກຳມາທິການການສຶກສາພາກເອກະຊົນ, ມີນັກຮຽນທັງໝົດ 3 ຄົນ ໂດຍນາໃຊ້ວິທີການຄັດເລືອກແບບມີຈຸດມຸ່ງໝາຍສຳລັບເດັກທີ່ມີບັນຫາດ້ານການພັດທະນາເຄື່ອງຈັກດີ. ເນື່ອງຈາກບໍ່ສາມາດກະຕຸ້ນເສື້ອ zip skirt-pants ແລະສາມາດໃສ່ເກີບຂອງຕົນເອງໄດ້, ເຄື່ອງມືທີ່ໃຊ້ໃນການຄົ້ນຄວ້ານີ້ແມ່ນແຜນການກິດຈະກຳສິລະປະສ້າງສັນຈາກວັດສະດຸຂີ້ເຫຍື້ອ. ແລະຮູບແບບການສັງເກດສຳລັບຄວາມສາມາດໃນການນຳໃຊ້ມໍເຕີທີ່ດີ. 1) ກິດຈະກຳສິລະປະສ້າງສັນຈາກສິ່ງເສດເຫຼືອ ສາມາດຊ່ວຍພັດທະນາທັກສະດ້ານມໍເຕີທີ່ດີຂອງນັກຮຽນຊັ້ນອະນຸບານ 1/1; 1/1 ຜູ້ທີ່ໄດ້ຮັບກິດຈະກຳສິລະປະປະດິດຈາກສິ່ງເສດເຫຼືອສາມາດພັດທະນານັກຮຽນໃຫ້ພັດທະນາທັກສະການຈັກດີມີຄະແນນສູງຫຼັງຈາກການທົດລອງຫຼາຍກວ່າທີ່ຜ່ານມາ.

# ບົດທີ 3

## ວິທີດຳເນີນການວິໄຈ

ການວິໄຈຄັ້ງນີ້ເປັນການວິໄຈແບບເປັນການຈັດກິດຈະກຳການຮຽນການສອນ ເລື່ອງ: ການສົ່ງເສີມທັກສະນຳໃຊ້ກ້າມຊີ້ນນ້ອຍດ້ວຍການພັບເຈ້ຍເປັນຮູບຕ່າງໆໂດຍນຳໃຊ້ແບບເຝິກທັກສະສຳລັບເດັກອະນຸບານ3 ໂຮງຮຽນອະນຸບານສາທິດ ວິທະຍາໄລຄູສາລະວັນ ສົກຮຽນ 2021-2022 ໂດຍມີຂັ້ນຕອນໃນການດຳເນີນດັ່ງນີ້:

3.1 ວິທີຄັດເລືອກປະຊາກອນ ແລະ ກຸ່ມຕົວຢ່າງ

3.2 ກຳນົດເຄື່ອງມືທີ່ໃຊ້ໃນການວິໄຈ.

3.3 ສ້າງ ແລະ ຫາຄຸນນະພາບຂອງເຄື່ອງມື.

3.4 ການເກັບລວບລວມຂໍ້ມູນ.

3.5 ສະຖິຕິທີ່ໃຊ້ໃນການວິເຄາະຂໍ້ມູນ.

### 3.1 ວິທີຄັດເລືອກປະຊາກອນ ແລະ ກຸ່ມຕົວຢ່າງ

**1. ການກຳນົດປະຊາກອນ**

1) ປະຊາກອນຄື: ເດັກນັກຮຽນອະນຸບານໂຮງຮຽນອະນຸບານສາທິດ ເຊິ່ງມີນັກຮຽນທັງໝົດຈຳນວນ 74 ຄົນ ຍິງ 32 ຄົນ.

2) ກຸ່ມຕົວຢ່າງ: ການເຮັດວິໄຈຄັ້ງນີ້ແມ່ນເດັກນັກຮຽນອະນຸບານ3 ໂຮງຮຽນອະນຸບານສາທິດ ຈຳນວນ 15 ຄົນ ,ຍິງ 3 ຄົນ ການເລືອກກຸ່ມຕົວຢ່າງແມ່ນເລືອກແບບເຈາະຈົງ (PurposiveSampling) ດ້ວຍການກຳນົດເອົາເດັກນັກຮຽນທີ່ທີຄວາມສາມາດໃນການໃຊ້ກ້າມຊີ້ນນ້ອຍບໍ່ຄ່ອງແຄ້ວ ແລະ ໄດ້ຄະແນນຈາກປະເມີນນ້ອຍເພື່ອມາເປັນກຸ່ມຕົວຢ່າງໃນການວິໄຈ.

### 3.2 ເກນໃນການແປຄວາມໝາຍ

ເກນໃນການແປຄວາມໝາຍການສົ່ງເສີມທັກສະນຳໃຊ້ກ້າມຊີ້ນນ້ອຍ ໂດຍຜ່ານກິດຈະກຳສ້າງສັນ ດ້ວຍການພັບເຈ້ຍເປັນຮູບຕ່າງໆສຳລັບເດັກອະນຸບານ3 ແບ່ງອອກເປັນ 4 ລະດັບ:

ຄະແນນ 9 – 10 ສະແດງວ່າເດັກສາມາດນຳໃຊ້ກ້າມຊີ້ນນ້ອຍໄດ້ດີທີ່ສຸດ

ຄະແນນ 7 – 8 ສະແດງວ່າເດັກສາມາດນຳໃຊ້ກ້າມຊີ້ນນ້ອຍໄດ້ດີ

ຄະແນນ 5 – 6 ສະແດງວ່າເດັກສາມາດນຳໃຊ້ກ້າມຊີ້ນນ້ອຍໄດ້ປານກາງ

ຄະແນນ 3 – 4ສະແດງວ່າເດັກສາມາດນຳໃຊ້ກ້າມຊີ້ນນ້ອຍໄດ້ໜ້ອຍທີ່ສຸດ

### 3.3 ເຄື່ອງມືແກ້ບັນຫາ/ວິທີການ ຫຼື ແນວທາງການແກ້ບັນຫາ

ເຄື່ອງມືທີ່ໃຊ້ໃນການຄົ້ນຄ້ວາຄັ້ງນີ້ແມ່ນນຳໃຊ້ເຄື່ອງມືຄື

1. ແຜນການສອນກ່ຽວກັບກິດຈະກຳສ້າງສັນ ການພັບຮູບພາບ ຈຳນວນ 4 ບົດສອນ
2. ແບບເຝິກທັກສະການສອນການພັບຮູບພາບ ຈຳນວນ 4 ຊຸດ( ການພັບປາ,ການພັບເຮືອ,ການພັບເສື້ອ, ການພັບນົກ )
3. ແບບປະເມີນພຶດຕິກຳການຮຽນຮູ້ ກ່ອນສອນ ແລະ ຫຼັງສອນ. 1 ຊຸດ.

**1. ການສ້າງ ແລະ ຫາຄຸນນະພາບຂອງເຄື່ອງມື**

ການສ້າງເຄື່ອງມືທີ່ໃຊ້ໃນການເກັບລວບລວມຂໍ້ມູນຈະໄດ້ດຳເນີນການສຶກສາຕາມລຳດັບດັ່ງນີ້:

**2. ການສ້າງຊຸດກິດຈະກຳການຮຽນຮູ້**

- ສຶກສາເອກະສານ ແລະ ງານວິໄຈທີ່ກ່ຽວຂ້ອງ

- ສຶກສາຫຼັກສູດ, ແບບຮຽນ ແລະ ຄູ່ມືຄູທີ່ກະຊວງສຶກສາອອກແບບຕາມຫຼັກສູດອະນຸບານສຶກສາປີ2000 ກ່ຽວກັບກຸ່ມການຮຽນຮູ້ຂອງຊັ້ນອະນຸບານຂອງກະຊວງສຶກສາທິການແລະກິລາແຫ່ງສປປລາວ.

- ສຶກສາຫຼັກສູດ, ແບບຮຽນແລະຄູ່ມືຄູທີ່ກະຊວງສຶກສາອອກແບບຕາມຫຼັກສູດອະນຸບານສຶກສາປີ2012 ກ່ຽວກັບກຸ່ມການຮຽນຮູ້ຂອງຊັ້ນອະນຸບານຂອງກະຊວງສຶກສາທິການ ແລະ ກິລາແຫ່ງສປປລາວ.

- ສຶກສາຫຼັກສູດ ແລະ ວິທີເສີມສ້າງພັດທະນາກ້າມຊີ້ນນ້ອຍໃນຫຼັກສູດສ້າງຄູອະນຸບານລະດັບອະນຸປະລິນຍາຕີ ແລະ ລະດັບປະລິນຍາຕີ.

- ດໍາເນີນການສ້າງຊຸດກິດຈະກໍາປະກອບດ້ວຍ: ການພັບປາ,ການພັບເຮືອ,ການພັບເສື້ອ,ການພັບນົກຈໍານວນ 4 ຊຸດ ແລະ ນໍາສະເໜີທີ່ປຶກສາ.

- ປັບປຸງແກ້ໄຂຕາມຂໍ້ສະເໜີແນະ

- ນໍາຊຸດກິດຈະກໍາສໍາລັບເດັກໄປທົດລອງໃຊ້ກັບນັກຮຽນທີ່ບໍ່ແມ່ນກຸ່ມຕົວຢ່າງຄື: ເດັກນັກຮຽນອະນຸບານ3 ສົກຮຽນ 2021-2022 ໂຮງຮຽນອະນຸບານສາທິດ ວິທະຍາໄລຄູສາລະວັນ ຈໍານວນ 30 ຄົນເພື່ອເບິ່ງເວລາທີ່ໃຊ້, ຄວາມເໝາະສົມຂອງຊຸດກິດຈະກໍາ, ຄວາມສົນໃຈຂອງຜູ້ຮຽນ ແລະ ຄວາມສອດຄ່ອງກັບເນື້ອຫາ.

- ນໍາຊຸດກິດຈະກໍາໄປໃຊ້ໃນການວິໄຈທີ່ຜ່ານການປັບປຸງແກ້ໄຂແລ້ວໄປທົດລອງກັບກຸ່ມຕົວຢ່າງຄື: ນັກຮຽນອະນຸບານ3 ສົກປີ 2022-2023 ໂຮງຮຽນອະນຸບານສາທິດ ວິທະຍາໄລຄູສາລະວັນ ຈໍານວນ 5 ຄົນ.

## 3.4 ວິທີການເກັບກໍາ ແລະ ລວບລວມຂໍ້ມູນ

### 1. ວິທີການເກັບກໍາຂໍ້ມູນ

ຜູ້ວິໄຈເກັບກໍາລວມລວມຂໍ້ມູນດ້ວຍຕົນເອງໂດຍໃຊ້ແບບປະເມີນຜົນການຮຽນກ່ອນ ແລະ ຫຼັງເຊິ່ງປະຕິບັດຕາມຂັ້ນຕອນດັ່ງນີ້:

1) ແບບສັງເກດປະເມີນພຶດຕິກໍາຂອງເດັກກ່ອນຮຽນ
2) ແບບສັງເກດປະເມີນພຶດຕິກໍາຂອງເດັກຫຼັງຮຽນ

### 2. ວິທີລວບລວມຂໍ້ມູນ

- ທົດສອບກ່ອນຮຽນ(Pre-test) ດ້ວຍແບບທົດສອບວັດຜົນການຮຽນເລື່ອງ: ການສົ່ງເສີມທັກສະນໍາໃຊ້ກ້າມຊີ້ນນ້ອຍ ໂດຍຜ່ານກິດຈະກໍາສ້າງສັນ ດ້ວຍການພັບເຈ້ຍເປັນຮູບ ຈໍານວນ 4 ຊຸດ

- ດໍາເນີນການຈັດການຮຽນຮູ້ຕາມຊຸດກິດຈະກໍາທີ່ໄດ້ສ້າງໄວ້ຈໍານວນ 4 ຊຸດ ກ່ອນການປະຕິບັດກິດຈະກໍາການຮຽນຮູ້ຄູອະທິບາຍ ແລະ ສາທິດຂັ້ນຕອນປະຕິບັດພ້ອມທັງຍົກຕົວຢ່າງໃຫ້ນັກຮຽນ ຫຼັງຈາກນັ້ນຈິ່ງໄດ້ໃຫ້ເດັກປະຕິບັດເປັນບຸກຄົນ ແລະ ເປັນກຸ່ມຍ່ອຍເມືອປະຕິບັດແລ້ວກໍຈະມີການທົດສອບຫຼັງຮຽນທຸກຄັ້ງເຊິ່ງປະຕິບັດຕາມກິດຈະກໍາທີ່ສ້າງໄວ້ໃນ 4 ຊຸດກິດຈະກໍາ.

- ເມື່ອດໍາເນີນການສອນຄົບແລ້ວເຮັດການທົດສອບວັດຜົນສໍາເລັດທາງການຮຽນຫຼັງການຮຽນ (Post-test) ກັບນັກຮຽນກຸ່ມຕົວຢ່າງໂດຍໃຊ້ແບບທົດສອບຊຸດເດີມກັບກ່ອນຮຽນ.

## 3. 5 ວິທີວິເຄາະຂໍ້ມູນ ແລະ ສະຖິຕິທີ່ໃຊ້

### 3.5.1 ການສະແດງຂໍ້ມູນ

ການວິໄຈຄັ້ງນີ້ເປັນການວິໄຈແບບ **One Group Pre-test Post-test Design** ໂດຍມີລັກສະນະການວິໄຈດັ່ງຕາຕະລາງທີ 1

ຕາຕະລາງທີ 1: ແບບແຜນການວິໄຈແບບ **One Group Pre-test Post-test Design**

| ກຸ່ມ | Pre-test | Treatment | Post-test |
|---|---|---|---|
| ທົດລອງ | $T_1$ | X | $T_2$ |

T1 ໝາຍເຖິງການທົດສອບກ່ອນສອນ (Pre-test)

X ໝາຍເຖິງ ການວັດຜົນຈາກການປະເມີນ

T2 ໝາຍເຖິງ ການທົດສອບຫລັງສອນ (Post-test)

**3.5.2 ຂັ້ນຕອນການດຳເນີນການ**

2.1 ນຳເອົາແບບເຝິກການພັບປາ ກັບແບບສັງເກດປະເມີນພຶດຕິກຳຜົນການຮຽນຂອງເດັກກ່ອນການຮຽນ.

2.2 ມີການບັນທຶກຜົນຕາມລະດັບເກນທີ່ກຳນົດເຊິ່ງມີອາຈານທີ່ປຶກສາເປັນຜູ້ໃຫ້ຄຳແນະນຳເພື່ອນຳມາໃຊ້ໃນການເກັບກຳຂໍ້ມູນ.

2.3 ນຳເອົາແບບເຝິກການພັບປາ ກັບແບບສັງເກດປະເມີນພຶດຕິກຳຜົນການຮຽນຂອງເດັກລະຫວ່າງການຮຽນ 2 ຄັ້ງ ໂດຍມີການບັນທຶກໃນແຕ່ລະຄັ້ງ.

2.4 ນຳເອົາແບບເຝິກການພັບປາ ຄັ້ງທຳອິດນຳໄປ ສັງເກດປະເມີນພຶດຕິກຳຜົນການຮຽນຂອງເດັກຫຼັງການຮຽນ, ມີການບັນທຶກຜົນຕາມເກນ ແລ້ວນຳເອົາຜົນກ່ອນການຮຽນ ແລະ ຫຼັງການຮຽນມາປຽບທຽບ.

**3.5.3 ສະຖິຕິທີ່ໃຊ້ໃນການວິເຄາະຂໍ້ມູນ**

ໃນການວິເຄາະຂໍ້ມູນຜູ້ສຶກສາຈະໄດ້ດຳເນີນຕາມຂັ້ນຕອນດັ່ງນີ້:

1. ວິເຄາະປຽບທຽບຜົນຄະແນນຈາກການທົດສອບລະຫວ່າງກ່ອນຮຽນກັບຫຼັງຮຽນ

1. **ສະຖິຕິທີ່ໃຊ້ໃນການຫາຄຸນນະພາບຂອງເຄື່ອງມື**

1.1 ຫາຄວາມທ່ຽງກົງ ຂອງແບບທົດສອບໂດຍໃຊ້ສູດດັດນີຄ່າຄວາມສອດຄ້ອງ IOC

1.2 ຫາຄ່າຄວາມເຊື່ອມັ່ນຂອງແບບທົດສອບໂດຍໃຊ້ສູດສຳປະສິດແອນຟາຂອງຄອນບາກ ດ້ວຍໂປແກມສຳເລັດຮູບທາງສະຖິຕິ

2. **ສະຖິຕິທີ່ໃຊ້ໃນການບັນລະຍາຍຂໍ້ມູນ** ໂດຍໃຊ້ ໂປແກມສຳເລັດຮູບທາງສະຖິຕິມີດັ່ງນີ້:

2.1 ຄ່າສ່ວນຮ້ອຍ (Percentage)

ສູດ $P = \frac{f}{N} \times 100$

ເມື່ອ $P$ ແທນ ສ່ວນຮ້ອຍ(ຮ້ອຍລະ)

$f$ ແທນ ຄວາມຖີ່ທີ່ຕ້ອງການແປງໃຫ້ເປັນຮ້ອຍລະ

$N$ ແທນ ຈຳນວນຄວາມຖີ່ທັງໝົດ

2.2 ຄ່າສະເລ່ຍ (Mean)

ສູດ $\overline{X} = \frac{\sum X}{N}$

ເມື່ອ $\overline{X}$ : ແທນ ຄ່າສະເລ່ຍ

$\sum X$ : ແທນ ຜົນລວມຄະແນນທັງໝົດໃນກຸ່ມເປົ້າໝາຍ

$N$ : ແທນ ຈຳນວນນັກຮຽນ

# ບົດທີ 4

# ການວິເຄາະຂໍ້ມູນ ແລະ ຜົນການວິເຄາະຂໍ້ມູນ

ການສຶກສາຄົ້ນຄ້ວາວິໄຈໃນ ເລື່ອງ: ການສົ່ງເສີມທັກສະນຳໃຊ້ກ້າມຊີ້ນນ້ອຍດ້ວຍການພັບເຈ້ຍເປັນຮູບຕ່າງໆ ໂດຍນຳໃຊ້ແບບເຝິກທັກສະ ສຳລັບເດັກອະນຸບານ3 ໂຮງຮຽນອະນຸບານສາທິດ ວິທະຍາໄລຄູສາລະວັນ ສົກຮຽນ 2021-2022 ຜູ້ສຶກສາຄົ້ນຄ້ວາໄດ້ດຳເນີນການວິເຄາະຂໍ້ມູນຕາມຂັ້ນຕອນດັ່ງນີ້:

## 4.1 ການແປຜົນ

ການສຶກສາຄັ້ງນີ້ມີຈຸດປະສົງ ເພື່ອສົ່ງເສີມທັກສະນຳໃຊ້ກ້າມຊີ້ນນ້ອຍດ້ວຍການພັບເຈ້ຍເປັນຮູບຕ່າງໆ ໂດຍນຳໃຊ້ຊຸດແບບເຝິກທັກສະ ສຳລັບເດັກອະນຸບານ3 ໂຮງຮຽນອະນຸບານສາທິດກ່ອນ ແລະ ຫຼັງໃຊ້ຊຸດແບບເຝິກ ມີຄວາມແຕກຕ່າງກັນທາງຜົນການຮຽນຫຼັງຮຽນດີກວ່າກ່ອນຮຽນ.

## 4.2 ສັນຍາລັກ ແລະ ອັກສອນຫຍໍ້ທີ່ໃຊ້ສື່ຄວາມໝາຍໃນການວິໄຈ

$\overline{X}$ **ແທນ ຄ່າສະເລ່ຍ ( Mean ).**

N ແທນ ຈຳນວນນັກຮຽນທັງໝົດ.

$\sum X$ ແທນ ຜົນລວມຄະແນນທັງໝົດໃນກຸ່ມ.

$P$ ແທນ ສ່ວນຮ້ອຍ ( ຮ້ອຍລະ ).

$f$ ແທນ ຄວາມຖີ່ທີ່ຕ້ອງການແປງໃຫ້ເປັນຮ້ອຍລະ.

$N$ ແທນ ຈຳນວນຄວາມຖີ່ທັງໝົດ.

## 4.3 ຜົນການວິເຄາະຂໍ້ມູນ

ການວິເຄາະຂໍ້ມູນຄັ້ງນີ້ຜູ້ຄົ້ນຄ້ວາໄດ້ດຳເນີນວິເຄາະຂໍ້ມູນຕາມລຳດັບຂັ້ນຕອນດັ່ງນີ້:

ເຄື່ອງມືໃນການສັງເກດປະເມີນພຶດຕິກຳການຮຽນຂອງເດັກລະຫວ່າງຮຽນໃນລະຫວ່າງຈັດກິດຈະກຳການຮຽນຮູ້ໃນແຕ່ລະຄັ້ງ

**ຕາຕະລາງທີ1 ຜົນການວິເຄາະຄະແນນລະຫວ່າງຮຽນແຕ່ລະຄັ້ງ**

| ນັກຮຽນຜູ້ທີ | ຄະແນນລະຫວ່າງຮຽນ | | | | |
|---|---|---|---|---|---|
| | ຄັ້ງທີ່1 10 | ຄັ້ງທີ່2 10 | ຄັ້ງທີ່3 10 | ຄັ້ງທີ່4 10 | ລວມຄະແນນ 40 |
| ຜູ້ທີ 1 | 6 | 8 | 9 | 9 | 32 |
| ຜູ້ທີ 2 | 7 | 8 | 8 | 9 | 32 |
| ຜູ້ທີ 3 | 7 | 9 | 8 | 9 | 33 |
| ຜູ້ທີ 4 | 8 | 8 | 9 | 9 | 34 |
| ຜູ້ທີ 5 | 8 | 9 | 8 | 9 | 34 |
| ລວມຄະແນນ | 36 | 42 | 42 | 45 | 165 |
| $\overline{X}$ | 7,2 | 8,4 | 8,4 | 9 | 33 |
| **ເປີເຊັນ** | 72 | 84 | 84 | 90 | 33 |

**ຈາກຕາຕະລາງ1:** ພົບວ່າຄະແນນຈາກການຮຽນຂອງຜູ້ຮຽນມີການເພີ້ມຂື້ນໃນແຕ່ລະຄັ້ງໂດຍເຫັນໄດ້ຈາກຄະແນນລວມທັງໝົດເທົ່າກັບ 165 ແລະ ຄະແນນສະເລ່ຍເທົ່າກັບ 33 , ເຊິ່ງຄະແນນລວມ ແລະ ຄະແນນສະເລ່ຍໃນແຕ່ລະຄັ້ງມີດັ່ງນີ້: ຄັ້ງທີ1 ມີຄະແນນລວມຢູ່ທີ່ 36 ແລະ ຄະແນນສະເລ່ຍເທົ່າກັບ 7.2 ຄິດເປັນເປີເຊັນເທົ່າກັບ 72 % ,ຄັ້ງທີ2 ມີຄະແນນລວມຢູ່ທີ່ 42 ແລະ ຄະແນນສະເລ່ຍເທົ່າກັບ 8.4 ຄິດເປັນເປີເຊັນເທົ່າກັບ 84 % ,ຄັ້ງທີ3 ມີຄະແນນລວມຢູ່ທີ່ 42 ແລະ ຄະແນນສະເລ່ຍເທົ່າກັບ 8.4 ຄິດເປັນເປີເຊັນເທົ່າກັບ 84 % ,ຄັ້ງທີ4 ມີຄະແນນລວມຢູ່ທີ່ 45 ແລະ ຄະແນນສະເລ່ຍເທົ່າກັບ 9.00 ຄິດເປັນເປີເຊັນເທົ່າກັບ 90 % .

**ຕາຕະລາງ 2: ຜົນການປຽບທຽບຄະແນນປະເມີນທັກສະນຳໃຊ້ກ້າມຊີ້ນນ້ອຍກ່ອນຮຽນ ແລະ ຫຼັງຮຽນໂດຍໃຊ້ຊຸດແບບເຝິກທັກສະການພັບ**

| ຈຳນວນຄົນ | ກ່ອນຮຽນ ( ຄະແນນເຕັມ10 ) | ຫຼັງການຮຽນ ( ຄະແນນເຕັມ10 ) | ຄວາມກ້າວໜ້າ |
|---|---|---|---|
| **1** | **7** | **9** | 2 |
| **2** | **5** | **9** | 4 |
| **3** | **6** | **9** | 3 |
| **4** | **7** | **9** | 2 |
| **5** | **8** | **10** | 2 |
| ລວມ | 33 | 46 | 13 |
| ສະເລ່ຍ | 6,6 | 9,2 | 2,6 |
| ເປີເຊັນ | 66 | 92 | 26 |

**ຈາກຕາຕະລາງ 2 :** ພົບວ່າ ຄະແນນສະເລ່ຍຫຼັງການໃຊ້ຊຸດແບບເຝິກທັກສະສູງກວ່າຄະແນນສະເລ່ຍກ່ອນໃຊ້ຊຸດແບບເຝິກທັກສະເທົ່າກັບ 6.60 ໂດຍທຽບໃສ່ເກນແມ່ນຢູ່ໃນລະດັບປານກາງ ຄິດເປັນເປີເຊັນເທົ່າກັບ 66% ແລະ ຄະແນນສະເລ່ຍຫຼັງໃຊ້ຊຸດແບບເຝິກທັກສະ ເທົ່າກັບ 9.20 ໂດຍທຽບໃສ່ເກນແມ່ນຢູ່ໃນລະດັບດີ ຄິດເປັນເປີເຊັນເທົ່າກັບ 92% .ເຊິ່ງສະແດງໃຫ້ເຫັນວ່າພາຍຫຼັງຈັດກິດກຳໂດຍນຳໃຊ້ຊຸດແບບເຝິກທັກສະການພັບເຈ້ຍເປັນຮູບເດັກມີພັດທະນາການດ້ານກ້າມຊີ້ນນ້ອຍດີຂື້ນ ສາມາດພັດທະນ ແລະມີການເຄື່ອນໄຫວກ້າມຊີ້ນນ້ອຍໄດ້ຄ່ອງແຄ້ວເຊິ່ງເຫັນໄດ້ຈາກຄະແນນທີ່ເພີ່ມຂື້ນຫຼັງໃຊ້ແບບເຝິກທັກສະການພັບເທົ່າກັບ 2.6 ຄິດເປັນເປີເຊັນເທົ່າກັບ 26 %.

# ບົດທີ 5

## ສະຫຼຸບ, ອະພິປາຍຜົນ ແລະ ຂໍ້ສະເໜີແນະ

ການສຶກສາຄົ້ນຄວ້ານີ້ເປັນ ການສົ່ງເສີມທັກສະນໍາໃຊ້ກ້າມຊີ້ນນ້ອຍດ້ວຍການພັບເຈ້ຍເປັນຮູບຕ່າງໆ ໂດຍນໍາໃຊ້ແບບເຝິກທັກສະ ສໍາລັບເດັກອະນຸບານ3 ໂຮງຮຽນອະນຸບານສາທິດ ວິທະຍາໄລຄູສາລະວັນ ສົກຮຽນ 20212-2022 ເຊິ່ງສາມາດສະຫຼຸບຂັ້ນຕອນ ແລະ ຜົນການສຶກສາດັ່ງນີ້:

### 5.1 ສະຫຼຸບຜົນການວິໄຈ

ໃນການວິໄຈຄັ້ງນີ້ມີຈຸດປະສົງ 1) ເພື່ອສ້າງຊຸດແບບເຝິກທັກສະການພັບເຈ້ຍເປັນຮູບຕ່າງໆ ສໍາລັບເດັກ ອະນຸບານ 3 ໂຮງຮຽນອະນຸບານສາທິດ ວິທະຍາໄລຄູສາລະວັນ ສົກ 2021 - 2022. 2) ເພື່ອປຽບທຽບຄວາມ ສາມາດກ່ອນ ແລະ ຫຼັງການໃຊ້ຊຸດແບບເຝິກທັກສະການພັບເຈ້ຍເປັນຮູບຕ່າງໆໃນການໃຊ້ກ້າມຊີ້ນນ້ອຍ ສໍາລັບ ເດັກຂັ້ນອະນຸບານ3 ໂຮງຮຽນອະນຸບານສາທິດ ວິທະຍາໄລຄູສາລະວັນ ສົກ 2021 - 2022.ກຸ່ມຕົວຢ່າງ: ການເຮັດ ວິໄຈຄັ້ງນີ້ແມ່ນເດັກນັກຮຽນອະນຸບານ3 ໂຮງຮຽນອະນຸບານສາທິດ ຈໍານວນ 15 ຄົນ,ຍິງ 3 ຄົນ ການເລືອກກຸ່ມ ຕົວຢ່າງແມ່ນເລືອກແບບເຈາະຈົງ ( PurposiveSampling ) ດ້ວຍການກໍານົດເອົາເດັກນັກຮຽນທີ່ທີຄວາມສາມາດ ໃນການໃຊ້ກ້າມຊີ້ນນ້ອຍບໍ່ຄ່ອງແຄ້ວ ແລະ ໄດ້ຄະແນນຈາກປະເມີນນ້ອຍເພື່ອມາເປັນກຸ່ມຕົວຢ່າງໃນການວິໄຈ

**ຜົນການວິໄຈພົບວ່າ**

1) ການສ້າງຊຸດແບບເຝິກທັກສະການພັບເຈ້ຍເປັນຮູບຕ່າງໆ ສໍາລັບເດັກ ອະນຸບານ 3 ໂຮງຮຽນອະນຸບານສາທິດ ວິທະຍາໄລຄູສາລະວັນ ສົກ 2021 - 2022. ຜູ້ວິໄຈສາມາດສ້າງແຜນການສອນ,ບົດສອນກ່ຽວກັບກິດຈະກໍາ ສ້າງສັນ ການພັບປາ,ການພັບເຮືອ,ການພັບເສື້ອ,ການພັບນົກ ຈໍານວນ 4 ບົດສອນ,ແບບເຝິກທັກສະການສອນການ ພັບຮູບພາບ ຈໍານວນ 4 ຊຸດ( ການພັບປາ,ການພັບເຮືອ,ການພັບເສື້ອ,ການພັບນົກ ) ແລະ ແບບປະເມີນພຶດຕິກໍາ ການຮຽນຮູ້ ກ່ອນ ແລະ ຫຼັງ ຈໍານວນ 1 ຊຸດ.

2) ຜົນປຽບທຽບຄວາມສາມາດກ່ອນ ແລະ ຫຼັງການໃຊ້ຊຸດແບບເຝິກທັກສະການພັບເຈ້ຍເປັນຮູບຕ່າງໆໃນ ການໃຊ້ກ້າມຊີ້ນນ້ອຍ ສໍາລັບເດັກຂັ້ນອະນຸບານ3 ໂຮງຮຽນອະນຸບານສາທິດ ວິທະຍາໄລຄູສາລະວັນ ສົກຮຽນ 2021 – 2022 ພົບວ່າ ຄະແນນສະເລ່ຍຫຼັງການໃຊ້ຊຸດແບບເຝິກທັກສະສູງກວ່າຄະແນນສະເລ່ຍກ່ອນໃຊ້ຊຸດແບບ ເຝິກທັກສະເທົ່າກັບ 6.60 ໂດຍທຽບໃສ່ເກນແມ່ນຢູ່ໃນລະດັບປານກາງ ຄິດເປັນເປີເຊັນເທົ່າກັບ 66% ແລະ ຄະແນນສະເລ່ຍຫຼັງໃຊ້ຊຸດແບບເຝິກທັກສະ ເທົ່າກັບ 9.20 ໂດຍທຽບໃສ່ເກນແມ່ນຢູ່ໃນລະດັບດີ ຄິດເປັນເປີເຊັນ ເທົ່າກັບ 92% .ເຊິ່ງສະແດງໃຫ້ເຫັນວ່າພາຍຫຼັງຈັດກິດກໍາໂດຍນໍາໃຊ້ຊຸດແບບເຝິກທັກສະການພັບເຈ້ຍເປັນຮູບເດັກ ມີພັດທະນາການດ້ານກ້າມຊີ້ນນ້ອຍດີຂຶ້ນ ສາມາດພັດທະນ ແລະມີການເຄື່ອນໄຫວກ້າມຊີ້ນນ້ອຍໄດ້ຄ່ອງແຄ້ວເຊິ່ງ ເຫັນໄດ້ຈາກຄະແນນສະເລ່ຍທີ່ເພີ່ມຂຶ້ນຫຼັງໃຊ້ຊຸດແບບເຝິກທັກສະການພັບມີຄະແນນສະເລ່ຍເທົ່າກັບ 2.6 ຄິດ ເປັນເປີເຊັນເທົ່າກັບ 26 %

### 5.2 ອະພິປາຍຜົນ

1) ການສ້າງຊຸດແບບເຝິກທັກສະການພັບເຈ້ຍເປັນຮູບຕ່າງໆ ສໍາລັບເດັກ ອະນຸບານ 3 ໂຮງຮຽນອະນຸບານ ສາທິດ ວິທະຍາໄລຄູສາລະວັນ ສົກ 2021 - 2022. ຜູ້ວິໄຈສາມາດສ້າງແຜນການສອນ,ບົດສອນກ່ຽວກັບກິດຈະ

ກຳສ້າງສັນ ການພັບປາ,ການພັບເຮືອ,ການພັບເສື້ອ,ການພັບນົກ ຈຳນວນ 4 ບົດສອນ,ແບບເຝິກທັກສະການສອນ ການພັບຮູບພາບ ຈຳນວນ 4 ຊຸດ ( ການພັບປາ,ການພັບເຮືອ,ການພັບເສື້ອ,ການພັບນົກ ) ແລະ ແບບປະເມີນ ພຶດຕິກຳການຮຽນຮູ້ ກ່ອນ ແລະ ຫຼັງ ຈຳນວນ 1 ຊຸດ..

2) ຜົນປຽບທຽບຄວາມສາມາດກ່ອນ ແລະ ຫຼັງການໃຊ້ຊຸດແບບເຝິກທັກສະການພັບເຈ້ຍເປັນຮູບຕ່າງໆໃນການໃຊ້ກ້າມຊີ້ນນ້ອຍ ສຳລັບເດັກຂັ້ນອະນຸບານ3 ໂຮງຮຽນອະນຸບານສາທິດ ວິທະຍາໄລຄູສາລະວັນ ສົກຮຽນ 2021 – 2022 ພົບວ່າ ຄະແນນສະເລ່ຍຫຼັງການໃຊ້ຊຸດແບບເຝິກທັກສະສູງກວ່າຄະແນນສະເລ່ຍກ່ອນໃຊ້ຊຸດແບບເຝິກທັກສະເທົ່າກັບ 6.60 ໂດຍທຽບໃສ່ເກນແມ່ນຢູ່ໃນລະດັບປານກາງ ຄິດເປັນເປີເຊັນເທົ່າກັບ 66% ແລະ ຄະແນນສະເລ່ຍຫຼັງໃຊ້ຊຸດແບບເຝິກທັກສະ ເທົ່າກັບ 9.20 ໂດຍທຽບໃສ່ເກນແມ່ນຢູ່ໃນລະດັບດີ ຄິດເປັນເປີເຊັນເທົ່າກັບ 92% .ເຊິ່ງສະແດງໃຫ້ເຫັນວ່າພາຍຫຼັງຈັດກິດກຳໂດຍນຳໃຊ້ຊຸດແບບເຝິກທັກສະການພັບເຈ້ຍເປັນຮູບເດັກມີພັດທະນາການດ້ານກ້າມຊີ້ນນ້ອຍດີຂຶ້ນ ສາມາດພັດທະນ ແລະ ມີການເຄື່ອນໄຫວກ້າມຊີ້ນນ້ອຍໄດ້ຄ່ອງແຄ້ວ ເຊິ່ງເຫັນໄດ້ຈາກຄະແນນສະເລ່ຍທີ່ເພີ່ມຂຶ້ນຫຼັງໃຊ້ຊຸດແບບເຝິກທັກສະການພັບມີຄະແນນສະເລ່ຍເທົ່າກັບ 2.6 ຄິດເປັນເປີເຊັນເທົ່າກັບ 26 % ຜົນເປັນເຊັ່ນນີ້ກໍ່ເນື່ອງຈາກແບບເຝິກມີຄວາມສຳຄັນຕໍ່ການພັດທະນາກ້າມຊີ້ນນ້ອຍ ໂດຍສະເພາະກ້າມຊີ້ນມື ແລະ ນິ້ວມື ເຊິ່ງສອດຄ້ອງກັບທິດດີຂອງທ່ານ Bruner ທີ່ກ່າວວ່າເດັກຮຽນຮູ້ດ້ວຍການເຮັດ(Enactive Representation ) ເປັນຂັ້ນຕອນທີ່ເດັກຮຽນຮູ້ເກີດຈາກປະສາດສຳຜັດ (ທິດສະໜາ ແຂມມະນີ 2553:76) ເຮັດໃຫ້ເດັກໄດ້ຝຶກຝົນການໃຊ້ມື ແລະ ນິ້ວມື ມີຄວາມຄ່ອງແຄ້ວເພີ່ມຫຼາຍຂຶ້ນດັ່ງນັ້ນ ຈິ່ງສົ່ງຜົນເຮັດໃຫ້ເດັກມີຄະແນນສະເລ່ຍໃນດ້ານຄວາມຄ່ອງແຄ້ວໃນການໃຊ້ກ້າມຊີ້ນນ້ອຍເພີ່ມສູງຂຶ້ນ.

## 5.3 ຂໍ້ສະເໜີແນະ

**ຕໍ່ກັບຜົນຂອງການວິໄຈ:**

- ຄວນນຳໄປເຜີຍແຜ່ໃຫ້ຄູ-ອາຈານສອນໃນສາຍອະນຸບານ ແລະ ໂຮງຮຽນອະນຸບານໄດ້ຮັບຮູ້ເຂົ້າໃຈເພື່ອນຳໄປໃຊ້ໃນການຈັດກິດຈະກຳການຮຽນ ການສອນໃຫ້ດີຂຶ້ນ.
- ຄວນນຳໃຊ້ຜົນຂອງການວິໄຈໄປໝູນໃຊ້ເຂົ້າໃນການຈັດຕັ້ງກິດຈະກຳການຮຽນຮູ້ສຳລັບເດັກໃອະນາຄົດ.

**ຕໍ່ກັບບົດຮຽນໃນການວິໄຈ:**

- ຄູສອນໃນລາຍວິຊາ ວິທີສິດສອນສິລະປະສ້າງສັນໃນສາຍອະນຸບານ ແລະ ຄູສອນໃນໂຮງຮຽນອະນຸບານຄວນເຮັດການວິໄຈໃນເລື່ອງນີ້ກັບເດັກອະນຸບານ, ນັກສຶກສາ ຫຼື ຄູສອນພາຍໃນໂຮງຮຽນ.

# ເອກະສານອ້າງອີງ

# ເອກະສານອ້າງອີງ


ສະຖາບັນຄົ້ນຄ້ວາວິທະຍາສາດການສຶກສາ ( 2012: 1 ) ການສຶກສາຊັ້ນອະນຸບານສຶກສາ.

ກະຊວງສຶກສາທິການ ( 2540 ). ຄູ່ມືຫຼັກສູດກ່ອນອະນຸບານ ພຸດທະສັກກະຣາດ 2540 ( ອາຍຸ3-6ປີ ). ກຸງເທບ: ຄູຣຸດພາ ລາດພ້ຣາວ.

ອຈ. ອ່ອນສາ ວິລະວັນ(2019) ປື້ມແບບຮຽນການຈັດປະສົບການຮຽນຮູ້ກິດຈະກຳສິລະປະສ້າງສັນ ລະບົບ12+4 ສາຍອະນຸບານ

Brunner ທິດສະດີກ່ຽວກັບພັດທະນາການ https://translate.google.com/

ກຸລະຍາ ຕົ້ນພະລາຊີວະ.( 2543 ). ການສອນແບບຈິດປັນຍາ: ແນວການໃຊ້ໃນການສ້າງແຜນການສອນລະດັບ ອະນຸບານສຶກສາ. ກຸງເທບ: ເອດິນສັນ ເພສໂປຣດັກ.

ນັດສຸດາ ສາຄອນຈະເລີນ ( 2548: 88 ) ໄດ້ສຶກສາຜົນການພັດທະນາທັກສະຂະບວນການວິທະຍາສາດພື້ນຖານ ຂອງເດັກອະນຸບານໂດຍການໃຊ້ຮູບແບບກິດຈະກຳສິລະປະສ້າງສັນເພື່ອການຮຽນຮູ້.

ສົມສີ ເມກໄພບູນວັດທະນາ( 2551) ຄວາມສາມາດໃນການໃຊ້ກ້າມຊີ້ນນ້ອຍຂອງເດັກອະນຸບານທີ່ໄດ້ຮັບກິດຈະກຳ

ສິລະປປະສ້າງສັນຮ້ອຍດອກໄມ້. ປະລິນຍານິພົນ ກສ.ມ ( ການສຶກສາອະນຸບານ ).

ເກສີນີ ນິໄສຈະເລີນ. ( 2527 ) ການສອນສິລະປະສຳລັບເດັກ. ເອກະສານການອົບຮົມດູແລເດັກ ຮຸ່ນ 2. ຂອນແກ່ນ ຄະນະສຶກສາສາດ ມະຫາວິທະຍາໄລຂອນແກ່ນ.

ໄຊນະລົງ ຈະເລີນພານິດກຸນ. ( 2533 ) ພັດທະນາເດັກດ້ວຍສິລະປະ. ກຸງເທບ, ອັກສອນສຳພັນ.

ນາງ ພອນລັດດາ ທຸມມະນີ ນັກສຶກສາຄູອະນຸບານ (2021) ໄດ້ສຶກສາຄົ້ນຄວ້າເລື່ອງ ການພັດທະນາກ້າມຊີ້ນມື ແລະ ນິ້ວມື ຜ່ານກິດຈະກຳສ້າງສັນໂດຍເນັ້ນການຈິກຕາມຮອຍຈໍ້າ ສຳລັບເດັກອະນຸບານ1 ໂຮງຮຽນອະນຸບານສາທິດ ວິທະຍາໄລຄູສາລະວັນ

ນິດນິສາ ບຸນພິມມະວົງ. (2552). ການສົ່ງເສີມພັດທະນາທາງດ້ານກ້າມຊີ້ນນ້ອຍປັບປຸງໂດຍໃຊ້ກິດຈະກຳປະກອບອາຫານໄທ .https://research.kpru.ac.th/research2/pages/filere/1650168904.pdf

ນຸດຈະນີ ອູ່ທອງ ແລະ ອັດສະນີຍາ ສັດຈະກຸນ (2565) ສຶກສຶກ ຄົ້ນຄວ້າກ່ຽວກັບການສົ່ງເສີມການພັດທະນາກ້າມຊີ້ນ ແຂນນ້ອຍຂອງເດັກນ້ອຍໃນໄວເດັກ ການນຳໃຊ້ຊຸດຂອງກິດຈະກຳ ripping ແລະ patching ສົ່ງເສີມການພັດທະນາທັກສະເຄື່ອງຈັກທີ່ດີໃນໄວເດັກ ໂດຍການນຳໃຊ້ຊຸດກິດຈະກຳການຈີກ ແລະ ການສ້ອມແປງ Nuchchanee Uthong1 ແລະ Attaneeya Sajjapattanakun2 Nutjanee Outone

https://research.kpru.ac.th/research2/pages/filere/1650168904.pdf

ນາງ ຊູລີພອນ ນາຫົວນິນ( ບົດຫຍໍ້ ) ສຶກສາຄົ້ນຄວ້າກ່ຽວກັບການພັດທະນາທັກສະທາງດ້ານມໍເຕີທີ່ດີຂອງເດັກນ້ອຍໃນໄວເດັກ ໂດຍນຳໃຊ້ກິດຈະກຳການແກະສະຫຼັກແບບສ້າງສັນ

https://so01.tci-thaijo.org/index.php/jsi/article/view/216871

ວິພາພອນ ໂຕ້ແຍ້ມ ແລະ ລຸຈິລາ ລຸ້ງສູສຸດ( 2557,3 ) ສຶກສາຄົ້ນຄວ້າກ່ຽວກັບການພັດທະນາກ້າມເນື້ອຂະໜາດນ້ອຍ ການນຳໃຊ້ກິດຈະກຳສິລະປະສ້າງສັນຈາກອຸປະກອນການຖິ້ມຂອງນັກຮຽນອະນຸບານ

http://203.157.71.115/knowledge/mapping/paper/view?id=274

# ພາກພະນວກ

# ພາກພະນວກ ກ
# ເຄື່ອງມືການວິໄຈ ແລະ ແຜນປະຕິທິນການວິໄຈ

**ຕາຕະລາງ 1**: ແຜນປະຕິທິນການວິໄຈ

| **ລາຍການ** | **ໄລຍະເວລາ** | | | | | | | | | | | |
|---|---|---|---|---|---|---|---|---|---|---|---|---|
| | **ປີ** | **2021-2022** | | | | | | | | | | |
| | **ເດືອນ** | **1** | | | **2** | | | | **3** | | | |
| | **ອາທິດ** | 2 | 3 | 4 | 1 | 2 | 3 | 4 | 1 | 2 | 3 | 4 |
| 1 ເລືອກ ແລະ ກໍານົດຫົວຂໍ້ການວິໄຈ | | | | | | | | | | | | |
| 2 ສຶກສາເອກະສານ ແລະ ງານວິໄຈທີ່ກ່ຽວຂ້ອງ | | | | | | | | | | | | |
| 3 ຂຽນເຄົ້າໂຄງການວິໄຈ | | | | | | | | | | | | |
| 4 ສ້າງເຄື່ອງມື ແລະ ຫາຄຸນະພາບຂອງເຄື່ອງມື | | | | | | | | | | | | |
| 5 ດໍາເນີນການວິໄຈ | | | | | | | | | | | | |
| 6 ເກັບກໍາລວບລວມຂໍ້ມູນ | | | | | | | | | | | | |
| 7 ວິເຄາະຂໍ້ມູນ ແລະ ສະຫຼຸບຜົນການວິໄຈ | | | | | | | | | | | | |

## ແບບສັງເກດພຶດຕິກຳການຮຽນຂອງເດັກ

| ລຳດັບຄົນ | ສັງເກດພຶດຕິກຳການຮຽນ | | | | ລວມ ຄະແນນ | ເກນ |
|---|---|---|---|---|---|---|
| | ຄັ້ງທີ1 | ຄັ້ງທີ2 | ຄັ້ງທີ3 | ຄັ້ງທີ4 | | |
| ຜູ້ທີ1 | | | | | | |
| ຜູ້ທີ2 | | | | | | |
| ຜູ້ທີ3 | | | | | | |
| ຜູ້ທີ4 | | | | | | |
| ຜູ້ທີ5 | | | | | | |
| ລວມ | | | | | | |
| ສະເລ່ຍ | | | | | | |
| ເປີເຊັນ | | | | | | |

# ບົດສອນທີ1

ໜ່ວຍ: ສິ່ງແວດລ້ອມອ້ອມຕົວເຮົາ ອາທິດທີ 1 ມື້ທີ 2

ກິດຈະກຳ: ສ້າງສັນ ຊັ້ນອະນຸບານ 3

ຫົວຂໍ້: ພັບເຈ້ຍເປັນຮູບປາ ເວລາ 25-30 ນາທີ

**I. ຈຸດປະສົງ**

- ເພື່ອໃຫ້ເດັກສາມາດພັບເຈ້ຍໃຫ້ຄ້າຍຄືກັບຮູບປາ
- ຝຶກຄວາມອົດທົນໃນການພັບເຈ້ຍໃຫ້ເປັນຮູບປາໃຫ້ສຳເລັດ

**II. ເນື້ອໃນຕົ້ນຕໍ**

- ການພັບເຈ້ຍເປັນຮູບປາ

**III. ສື່ການຮຽນ-ການສອນ**

- ເຈ້ຍຮູບສີ່ແຈຈະຕຸລັດ
- ແບບຮູບປາທີ່ພັບແລ້ວ
- ບົດເພງ: ຝົນຕົກ

**IV. ກິດຈະກຳການຮຽນ-ການສອນ**

**1. ຂັ້ນນຳເຂົ້າສູ່ບົດຮຽນ**

- ຄູຈັດເດັກນັ່ງເປັນວົງມົນ
- ຄູພາເດັກສ້າງສັນບັນຍາກາດຮ້ອງເພງ: ຝົນຕົກປະກອບທ່າທາງ
- ຄູທວນຄືນບົດຮຽນເກົ່າ: ຄູຖາມເດັກວ່າພວກຫຼານຈື່ບໍ່ວ່າກິດຈະກຳຜ່ານມານີ້ສາວຄູພາພວກຫຼານຮຽນກິດຈະກຳຫຍັງ?
- ຄູໃຫ້ເດັກຕອບ
- ຄູຍ້ອງຍໍຊົມເຊີຍເດັກ

**2. ຂັ້ນນຳເຂົ້າສູ່ບົດຮຽນ**

- ຄູສະເໜີກິດຈະກຳທີ່ຈະພາເດັກຮຽນ ກິດຈະກຳສ້າງສັນ ໜ່ວຍ ສິ່ງແວດລ້ອມອ້ອມຕົວເຮົາ ຫົວຂໍ້ ພັບເຈ້ຍເປັນຮູບປາ
- ຄູອະທິບາຍ ແລະ ສາທິດການພັບເຈ້ຍເປັນຮູບປາໃຫ້ເດັກເບິ່ງ 1-2 ເທື່ອ
- ຄູໃຫ້ເດັກອາສາສະໝັກອອກມາພັບເຈ້ຍເປັນຮູບປາໃຫ້ໝູ່ເບິ່ງ 1-3 ຄົນ
- ຄູຍ້ອງຍໍຊົມເຊີຍເດັກແຕ່ລະຄົນ
- ຄູຢາຍອຸປະກອນໃຫ້ເດັກແຕ່ລະຄົນ
- ຄູໃຫ້ເດັກທຸກຄົນປະຕິບັດຕົວຈິງໝົດທຸກຄົນ
- ຄູຕິດຕາມແນະນຳຊ່ວຍເຫຼືອເດັກຜູ້ທີ່ປະຕິບັດບໍ່ໄດ້
- ຄູຍ້ອງຍໍຊົມເຊີຍເດັກທຸກຄົນ

**3. ຂັ້ນສະຫຼຸບ**

- ຄູໃຫ້ເດັກເອົາຜົນງານຂອງຕົນເອງມາກວດ
- ຄູຖາມເດັກຄືນກ່ຽວກັບບົດຮຽນທີ່ຮຽນຜ່ານມາ: ພວກຫຼານພັບເປັນຮູບຫຍັງ ແລະ ພັບໄດ້ໝົດທຸກຄົນບໍ່?
- ຄູໃຫ້ເດັກຕອບ

- ຄູຍ້ອງຍໍຊົມເຊີຍເດັກໝົດທຸກຄົນ

**+ ສຶກສາອົບຮົມເດັກ**

- ເວລາພັບຕ້ອງມີຄວາມອົດທົນ, ພັບໃຫ້ຈົບງາມ ແລະ ເກັບຜົນງານໄວ້ໃຫ້ຖືກບ່ອນຕາມທີ່ຄູກຳນົດ
- ຄູມອບວຽກບ້ານ: ເມື່ອເຮືອນໃຫ້ພວກຫຼານຫັດແອບພັບເຮືອແລ້ວເອົາມາສົ່ງຄູໃນມື້ອື່ນ.

**V. ການວັດ ແລະ ປະເມີນ**

**ສັງເກດ ແລະ ທົດສອບຄວາມເຂົ້າໃຈ**

- ສັງເກດຄວາມຄ້າຍຄືຂອງການພັບເຈ້ຍເປັນຮູບປາ ກັບຮູບຕົວຈິງ
- ສັງເກດຄວາມອົດທົນໃນການພັບເຈ້ຍເປັນຮູບປາໃຫ້ສຳເລັດ

# ບົດສອນທີ2

ໜ່ວຍ: ສິ່ງແວດລ້ອມອ້ອມຕົວເຮົາ ອາທິດທີ 1 ມື້ທີ 3

ກິດຈະກຳ: ສ້າງສັນ ຊັ້ນອະນຸບານ 3

ຫົວຂໍ້: ພັບເຈ້ຍເປັນຮູບເຮືອ ເວລາ 25-30 ນາທີ

**I. ຈຸດປະສົງ**

- ເພື່ອໃຫ້ເດັກສາມາດພັບເຈ້ຍໃຫ້ຄ້າຍຄືກັບຮູບເຮືອ
- ເຝິກຄວາມອົດທົນໃນການພັບເຈ້ຍໃຫ້ເປັນຮູບເຮືອໃຫ້ສຳເລັດ

**II. ເນື້ອໃນຕົ້ນຕໍ**

- ການພັບເຈ້ຍເປັນຮູບເຮືອ

**III. ສື່ການຮຽນ-ການສອນ**

- ເຈ້ຍຮູບສີ່ແຈຈະຕຸລັດ
- ແບບຮູບເຮືອທີ່ພັບແລ້ວ
- ບົດເພງ: ໂຮງຮຽນຂອງເຮົາ

**IV. ກິດຈະກຳການຮຽນ-ການສອນ**

**1. ຂັ້ນນຳເຂົ້າສູ່ບົດຮຽນ**

- ຄູຈັດເດັກນັ່ງເປັນຮູບໂຕ U
- ຄູພາເດັກສ້າງສັນບັນຍາກາດຮ້ອງເພງ: ໂຮງຮຽນຂອງເຮົາ
- ຄູທວນຄືນບົດຮຽນເກົ່າ: ຄູຖາມເດັກວ່າພວກຫຼານຈື່ບໍ່ວ່າກິດຈະກຳຜ່ານມານີ້ສາວຄູພາພວກຫຼານຮຽນກິດຈະກຳຫຍັງ?
- ຄູໃຫ້ເດັກຕອບ
- ຄູຍ້ອງຍໍຊົມເຊີຍເດັກ

**2. ຂັ້ນນຳເຂົ້າສູ່ບົດຮຽນ**

- ຄູສະເໜີກິດຈະກຳທີ່ຈະພາເດັກຮຽນ ກິດຈະກຳສ້າງສັນ ໜ່ວຍ ສິ່ງແວດລ້ອມອ້ອມຕົວເຮົາ ຫົວຂໍ້ ພັບເຈ້ຍເປັນຮູບເຮືອ
- ຄູອະທິບາຍ ແລະ ສາທິດການພັບເຈ້ຍເປັນຮູບເຮືອໃຫ້ເດັກເບິ່ງ 1-2 ເທື່ອ
- ຄູໃຫ້ເດັກອາສາສະໝັກອອກມາພັບເຈ້ຍເປັນຮູບເຮືອໃຫ້ໝູ່ເບິ່ງ 1-3 ຄົນ
- ຄູຍ້ອງຍໍຊົມເຊີຍເດັກແຕ່ລະຄົນ
- ຄູຢາຍອຸປະກອນໃຫ້ເດັກແຕ່ລະຄົນ
- ຄູໃຫ້ເດັກທຸກຄົນປະຕິບັດຕົວຈິງໝົດທຸກຄົນ
- ຄູຕິດຕາມແນະນຳຊ່ວຍເຫຼືອເດັກຜູ້ທີ່ປະຕິບັດບໍ່ໄດ້
- ຄູຍ້ອງຍໍຊົມເຊີຍເດັກທຸກຄົນ

**3. ຂັ້ນສະຫຼຸບ**

- ຄູໃຫ້ເດັກເອົາຜົນງານຂອງຕົນເອງມາກວດ
- ຄູຖາມເດັກຄືນກ່ຽວກັບບົດຮຽນທີ່ຮຽນຜ່ານມາ: ພວກຫຼານພັບເປັນຮູບຫຍັງ ແລະ ພັບໄດ້ໝົດທຸກຄົນບໍ່?
- ຄູໃຫ້ເດັກຕອບ

- ຄູຍ້ອງຍໍຊົມເຊີຍເດັກໝົດທຸກຄົນ

**+ ສຶກສາອົບຮົມເດັກ**

- ເວລາພັບຕ້ອງມີຄວາມອົດທົນ, ພັບໃຫ້ຈົບງາມ ແລະ ເກັບຜົນງານໄວ້ໃຫ້ຖືກບ່ອນຕາມທີ່ຄູກຳນົດ.
- ຄູມອບວຽກບ້ານ: ເມື່ອເຮືອນໃຫ້ພວກຫຼານຫັດແອບພັບເຮືອແລ້ວເອົາມາສົ່ງຄູໃນມື້ອື່ນ.

## V. ການວັດ ແລະ ປະເມີນ

**ສັງເກດ ແລະ ທົດສອບຄວາມເຂົ້າໃຈ**

- ສັງເກດຄວາມຄ້າຍຄືຂອງການພັບເຈ້ຍເປັນຮູບເຮືອ ກັບຮູບຕົວຈິງ
- ສັງເກດຄວາມອົດທົນໃນການພັບເຈ້ຍເປັນຮູບເຮືອໃຫ້ສຳເລັດ

# ບົດສອນທີ3

ໜ່ວຍ: ສິ່ງແວດລ້ອມອ້ອມຕົວເຮົາ ອາທິດທີ 2 ມື້ທີ 1

ກິດຈະກຳ: ສ້າງສັນ ຊັ້ນອະນຸບານ 3

ຫົວຂໍ້: ພັບເຈ້ຍເປັນຮູບນົກ ເວລາ 25-30 ນາທີ

## I. ຈຸດປະສົງ

- ເພື່ອໃຫ້ເດັກສາມາດພັບເຈ້ຍໃຫ້ຄ້າຍຄືກັບຮູບນົກ
- ເຝິກຄວາມອົດທົນໃນການພັບເຈ້ຍໃຫ້ເປັນຮູບນົກໃຫ້ສຳເລັດ

## II. ເນື້ອໃນຕົ້ນຕໍ

- ການພັບເຈ້ຍເປັນຮູບນົກ

## III. ສື່ການຮຽນ-ການສອນ

- ເຈ້ຍຮູບສີ່ແຈຈະຕຸລັດ
- ແບບຮູບນົກທີ່ພັບແລ້ວ
- ບົດຄຳຄ່ອງ: ນົກຈິບເຟືອງ

## IV. ກິດຈະກຳການຮຽນ-ການສອນ

### 1. ຂັ້ນນຳເຂົ້າສູ່ບົດຮຽນ

- ຄູຈັດເດັກນັ່ງເປັນວົງມົນ
- ຄູພາເດັກສ້າງສັນບັນຍາກາດເລົ່າຄຳຄ່ອງ: ນົກຈິບເຟືອງ
- ຄູທວນຄືນບົດຮຽນເກົ່າ: ຄູຖາມເດັກວ່າພວກຫຼານຈື່ບໍ່ວ່າກິດຈະກຳຜ່ານມານີ້ສາວຄູພາພວກຫຼານຮຽນກິດຈະກຳຫຍັງ?
- ຄູໃຫ້ເດັກຕອບ
- ຄູຍ້ອງຍໍຊົມເຊີຍເດັກ

### 2. ຂັ້ນນຳເຂົ້າສູ່ບົດຮຽນ

- ຄູສະເໜີກິດຈະກຳທີ່ຈະພາເດັກຮຽນ ກິດຈະກຳສ້າງສັນ ໜ່ວຍ ສິ່ງແວດລ້ອມອ້ອມຕົວເຮົາ ຫົວຂໍ້ ພັບເຈ້ຍເປັນຮູບນົກ
- ຄູອະທິບາຍ ແລະ  ສາທິດການພັບເຈ້ຍເປັນຮູບນົກໃຫ້ເດັກເບິ່ງ 1-2 ເທື່ອ
- ຄູໃຫ້ເດັກອາສາສະໝັກອອກມາພັບເຈ້ຍເປັນຮູບນົກໃຫ້ໝູ່ເບິ່ງ 1-3 ຄົນ
- ຄູຍ້ອງຍໍຊົມເຊີຍເດັກແຕ່ລະຄົນ
- ຄູຢາຍອຸປະກອນໃຫ້ເດັກແຕ່ລະຄົນ
- ຄູໃຫ້ເດັກທຸກຄົນປະຕິບັດຕົວຈິງໝົດທຸກຄົນ
- ຄູຕິດຕາມແນະນຳຊ່ວຍເຫຼືອເດັກຜູ້ທີ່ປະຕິບັດບໍ່ໄດ້
- ຄູຍ້ອງຍໍຊົມເຊີຍເດັກທຸກຄົນ

### 3. ຂັ້ນສະຫຼຸບ

- ຄູໃຫ້ເດັກເອົາຜົນງານຂອງຕົນເອງມາກວດ
- ຄູຖາມເດັກຄືນກ່ຽວກັບບົດຮຽນທີ່ຮຽນຜ່ານມາ: ພວກຫຼານພັບເປັນຮູບຫຍັງ ແລະ ພັບໄດ້ໝົດທຸກຄົນບໍ່?
- ຄູໃຫ້ເດັກຕອບ

- ຄູຍ້ອງຍໍຊົມເຊີຍເດັກໝົດທຸກຄົນ

**+ ສຶກສາອົບຮົມເດັກ**

- ເວລາພັບຕ້ອງມີຄວາມອົດທົນ, ພັບໃຫ້ຈົບງາມ ແລະ ເກັບຜົນງານໄວ້ໃຫ້ຖືກບ່ອນຕາມທີ່ຄູກຳນົດ
- ຄູມອບວຽກບ້ານ:ເມື່ອເຮືອນໃຫ້ພວກຫຼານຫັດແອບພັບນົກແລ້ວເອົາມາສົ່ງຄູໃນມື້ອື່ນ.

## V. ການວັດ ແລະ ປະເມີນ

**ສັງເກດ ແລະ ທົດສອບຄວາມເຂົ້າໃຈ**

- ສັງເກດຄວາມຄ້າຍຄືຂອງການພັບເຈ້ຍເປັນຮູບນົກ ກັບ ຮູບຕົວຈິງ
- ສັງເກດຄວາມອົດທົນໃນການພັບເຈ້ຍເປັນຮູບນົກໃຫ້ສຳເລັດ

## ບົດສອນທີ4

ໜ່ວຍ: ສິ່ງແວດລ້ອມອ້ອມຕົວເຮົາ ອາທິດທີ 2 ມື້ທີ 2

ກິດຈະກຳ: ສ້າງສັນ ຊັ້ນອະນຸບານ 3

ຫົວຂໍ້: ພັບເຈ້ຍເປັນຮູບເສື້ອ ເວລາ 25-30 ນາທີ

**I. ຈຸດປະສົງ**

- ເພື່ອໃຫ້ເດັກສາມາດພັບເຈ້ຍໃຫ້ຄ້າຍຄືກັບຮູບເສື້ອ
- ຝຶກຄວາມອົດທົນໃນການພັບເຈ້ຍໃຫ້ເປັນຮູບເສື້ອໃຫ້ສຳເລັດ

**II. ເນື້ອໃນຕົ້ນຕໍ**

- ການພັບເຈ້ຍເປັນຮູບເສື້ອ

**III. ສື່ການຮຽນ-ການສອນ**

- ເຈ້ຍຮູບສີ່ແຈຈະຕຸລັດ
- ແບບຮູບເສື້ອທີ່ພັບແລ້ວ
- ບົດເພງ: ລົດອີ່ແຕ່ນ

**IV. ກິດຈະກຳການຮຽນ-ການສອນ**

**1. ຂັ້ນນຳເຂົ້າສູ່ບົດຮຽນ**

- ຄູຈັດເດັກນັ່ງເປັນວົງມົນ
- ຄູພາເດັກສ້າງສັນບັນຍາກາດຮ້ອງເພງ: ລົດອີ່ແຕ່ນປະກອບທ່າທາງ
- ຄູທວນຄືນບົດຮຽນເກົ່າ: ຄູຖາມເດັກວ່າພວກຫຼານຈື່ບໍ່ວ່າກິດຈະກຳຜ່ານມານີ້ສາວຄູພາພວກຫຼານຮຽນກິດຈະກຳຫຍັງ?
- ຄູໃຫ້ເດັກຕອບ
- ຄູຍ້ອງຍໍຊົມເຊີຍເດັກ

**2. ຂັ້ນນຳເຂົ້າສູ່ບົດຮຽນ**

- ຄູສະເໜີກິດຈະກຳທີ່ຈະພາເດັກຮຽນ ກິດຈະກຳສ້າງສັນ ໜ່ວຍ ສິ່ງແວດລ້ອມອ້ອມຕົວເຮົາ ຫົວຂໍ້ ພັບເຈ້ຍເປັນຮູບເສື້ອ
- ຄູອະທິບາຍ ແລະ  ສາທິດການພັບເຈ້ຍເປັນຮູບເສື້ອໃຫ້ເດັກເບິ່ງ 1-2 ເທື່ອ
- ຄູໃຫ້ເດັກອາສາສະໝັກອອກມາພັບເຈ້ຍເປັນຮູບເສື້ອໃຫ້ໝູ່ເບິ່ງ 1-3 ຄົນ
- ຄູຍ້ອງຍໍຊົມເຊີຍເດັກແຕ່ລະຄົນ
- ຄູຢາຍອຸປະກອນໃຫ້ເດັກແຕ່ລະຄົນ
- ຄູໃຫ້ເດັກທຸກຄົນປະຕິບັດຕົວຈິງໝົດທຸກຄົນ
- ຄູຕິດຕາມແນະນຳຊ່ວຍເຫຼືອເດັກຜູ້ທີ່ປະຕິບັດບໍ່ໄດ້
- ຄູຍ້ອງຍໍຊົມເຊີຍເດັກທຸກຄົນ

**3. ຂັ້ນສະຫຼູບ**

- ຄູໃຫ້ເດັກເອົາຜົນງານຂອງຕົນເອງມາກວດ
- ຄູຖາມເດັກຄືນກ່ຽວກັບບົດຮຽນທີ່ຮຽນຜ່ານມາ: ພວກຫຼານພັບເປັນຮູບຫຍັງ ແລະ ພັບໄດ້ໝົດທຸກຄົນບໍ່?
- ຄູໃຫ້ເດັກຕອບ

- ຄູຍ້ອງຍໍຊົມເຊີຍເດັກໝົດທຸກຄົນ

**+ ສຶກສາອົບຮົມເດັກ**

- ເວລາພັບຕ້ອງມີຄວາມອົດທົນ, ພັບໃຫ້ຈົບງານ ແລະ ເກັບຜົນງານໄວ້ໃຫ້ຖືກບ່ອນຕາມທີ່ຄູກຳນົດ
- ຄູມອບວຽກບ້ານ:ເມື່ອເຮືອນໃຫ້ພວກຫຼານຫັດແອບພັບເສື້ອແລ້ວເອົາມາສົ່ງຄູໃນມື້ອື່ນ.

**V. ການວັດ ແລະ ປະເມີນ**

**ສັງເກດ ແລະ ທົດສອບຄວາມເຂົ້າໃຈ**

- ສັງເກດຄວາມຄ້າຍຄືຂອງການພັບເຈ້ຍເປັນຮູບເສື້ອ ກັບຮູບຕົວຈິງ
- ສັງເກດຄວາມອົດທົນໃນການພັບເຈ້ຍເປັນຮູບເສື້ອໃຫ້ສຳເລັດ

## ບົດທົດສອບກ່ອນການຮຽນ

1. ໃຫ້ເດັກພັບຮູບປາໃຫ້ຖືກຕ້ອງຕາມບາດກ້າວຂອງການພັບ?

## ຂັ້ນຕອນຂອງການພັບຮູບປາ

**1. ຂັ້ນຕອນຂອງການພັບຮູບປາ**



ຂັ້ນຕອນທີ ( 1 )ພັບເຈ້ຍໃຫ້ເຄິ່ງຕາມລວງຕັ້ງ



ຂັ້ນຕອນທີ ( 2 )ພັບເຈ້ຍໃຫ້ເປັນຮູບສາມແຈແລ້ວພືເຈ້ຍອອກ



ຂັ້ນຕອນທີ  ( 3 )ພັບເຈ້ຍໃຫ້ເຄິ່ງຕາມລວງນອນ



ຂັ້ນຕອນທີ  ( 4 ) ພັບເຈ້ຍເບື້ອງຂວາເຂົ້າຫາຈຸດເຄິ່ງກາງ



ຂັ້ນຕອນທີ  ( 5 )ພັບເຈ້ຍເບື້ອງຂວາ ແລະ ເບື້ອງຊ້າຍເຂົ້າຫາຈຸດເຄິ່ງກາງ



ຂັ້ນຕອນທີ ( 6 ) ພັບເຈ້ຍເບື້ອງຂວາ, ເບື້ອງຊ້າຍເຂົ້າຫາຈຸດເຄິ່ງກາງ ແລະ ປີ້ນລົງເປັນຮູບປາທີ່ສຳເລັດ

## ບົດທົດສອບກ່ອນການຮຽນ

1. ໃຫ້ເດັກພັບຮູບນົກໃຫ້ຖືກຕ້ອງຕາມບາດກ້າວຂອງການພັບ?

## ຂັ້ນຕອນຂອງການພັບຮູບນົກ

**1. ຂັ້ນຕອນຂອງການພັບນົກ**



**ຂັ້ນຕອນທີ (1) ພັບເຈ້ຍເປັນຮູບຈະຕຸລັດ**



**ຂັ້ນຕອນທີ (2) ພັບແຈເຈ້ຍທີ່ເປັນຮູບສາມແຈແລ້ວ**
**ເປີດອອກໃຫ້ເຫັນຄອງ ຫຼື ຮອຍພັບ**



ຂັ້ນຕອນທີ (3) ພັບແຈເຈ້ຍແຕ່ລະແຈເຂົ້າຫາກັນ
ແລ້ວຜືອອກເປັນຮູບດາວ



ຂັ້ນຕອນທີ (4) ພັບແຈເຈ້ຍແຕ່ລະແຈເຂົ້າຫາກັນ
ເປັນຮູບດອກ



**ຂັ້ນຕອນທີ (5) ພັບສິ້ນເຈ້ຍອີກສິ້ນລົງມາເບື້ອງລຸ່ມ**



**ຂັ້ນຕອນທີ (6) ພັບສິ້ນເຈ້ຍເຂົ້າຫາກັນທັງສອງເບື້ອງເປັນຮູບຮ່າງນົກ**



**ຂັ້ນຕອນທີ ( 7 ) ເຮັດຄືຂັ້ນຕອນທີ 6**



**ຂັ້ນຕອນທີ ( 8 ) ພັບເຈ້ຍເບື້ອງຂວາ, ເບື້ອງຊ້າຍເຂົ້າຫາ**
**ຈຸດເຄິ່ງກາງ ແລະ ປີ້ນລົງເປັນຮູບນົກທີ່ສຳເລັດ**

## ບົດທົດສອບກ່ອນການຮຽນ

1. ໃຫ້ເດັກພັບຮູບເຮືອໃຫ້ຖືກຕ້ອງຕາມບາດກ້າວຂອງການພັບ?

## ຂັ້ນຕອນຂອງການພັບຮູບເຮືອ

**1. ຂັ້ນຕອນຂອງການພັບຮູບເຮືອ**



**ຂັ້ນຕອນທີ (1) ພັບເຈ້ຍເປັນຮູບຈະຕຸລັດ**



**ຂັ້ນຕອນທີ (2) ພັບເຈ້ຍສົ້ນໜຶ່ງເຂົ້າຈຸດເຄິ່ງກາງ**



ຂັ້ນຕອນທີ (3) ພັບເຈ້ຍສິ້ນໜຶ່ງເຂົ້າຈຸດເຄິ່ງກາງ ແລະ  ພັບອີກຂ້າງໜຶ່ງເຂົ້າຫາກັນ



ຂັ້ນຕອນທີ (4) ພັບສິ້ນເບື້ອງລຸ່ມເຈ້ຍຂຶ້ນໄປເບື້ອງເທິງ



ຂັ້ນຕອນທີ (5) ພັບສົ້ນເຈ້ຍທີ່ເຫຼືອຂຶ້ນໄປເບື້ອງເທິງ



ຂັ້ນຕອນທີ (6) ພີເຈ້ຍແລ້ວດຶງສົ້ນເຈ້ຍອອກເປັນຮູບດອກຈັນ



ຂັ້ນຕອນທີ (7) ພັບເຈ້ຍສົ້ນໜຶ່ງຂຶ້ນໄປເບື້ອງເທິງ



ຂັ້ນຕອນທີ (8) ພັບເຈ້ຍອີກສົ້ນໜຶ່ງຂຶ້ນໄປເບື້ອງເທິງຄືຮູບທີ7



ຂັ້ນຕອນທີ (9) ພັບເຈ້ຍອີກສິ້ນຂຶ້ນຄືນຮູບທີ 7



ຂັ້ນຕອນທີ (10) ດຶງເຈ້ຍທັງສອງສິ້ນແລ້ວຈະໄດ້ຮູບເຮືອທີ່ສົມບູນ

## ບົດທົດສອບກ່ອນການຮຽນ

1. ໃຫ້ເດັກພັບຮູບເສື້ອໃຫ້ຖືກຕ້ອງຕາມບາດກ້າວຂອງການພັບ?

## ຂັ້ນຕອນຂອງການພັບຮູບເສື້ອ

**1. ຂັ້ນຕອນຂອງການພັບຮູບເສື້ອ**



**ຂັ້ນຕອນທີ (1) ພັບເຈ້ຍເປັນຮູບຈະຕຸລັດ**



**ຂັ້ນຕອນທີ (2) ພັບເຈ້ຍສົ້ນໜຶ່ງເຂົ້າຫາຈຸດເຄິ່ງກາງ**



ຂັ້ນຕອນທີ (3) ພັບເຈ້ຍສົ້ນໜຶ່ງເຂົ້າຫາຈຸດເຄິ່ງກາງເຂົ້າຄືຮູບທີ 2



ຂັ້ນຕອນທີ (4) ປີ້ນເຈ້ຍແລ້ວພັບສົ້ນເຈ້ຍລົງໜ່ອຍໜຶ່ງ



**ຂັ້ນຕອນທີ (5) ປີ້ນເຈ້ຍກັບແລ້ວພັບ2ສິ້ນເຈ້ຍລົງຈຸດກາງ**



**ຂັ້ນຕອນທີ (6) ພັບສິ້ນເຈ້ຍສິ້ນໜຶ່ງອອກໄປຂ້າງຊ້າຍ**



ຂັ້ນຕອນທີ (7) ພັບສົ້ນເຈ້ຍທັງ2ເບື້ອງອອກໄປຂ້າງຊ້າຍ-ຂວາ



ຂັ້ນຕອນທີ (8) ພັບສົ້ນເຈ້ຍເບື້ອງລຸ່ມຂຶ້ນໄປທາງເທິງ
ຈະເປັນຮູບເສື້ອທີ່ສົມບູນ

ຮູບພາບເຄື່ອນໄຫວເຮັດກິດຈະກຳຕ່າງໆ

# ຮູບພາບເຄື່ອນໄຫວກິດຈະກຳພັບເຮືອ









# ຮູບພາບເຄື່ອນໄຫວກິດຈະກຳພັບປາ












SQUID
GAME

# ຮູບພາບເຄື່ອນໄຫວກິດຈະກຳພັບນົກ









# ຮູບພາບເຄື່ອນໄຫວກິດຈະກຳພັບເສື້ອ









# ພາກພະນວກ ຂ

## ປະຫວັດຜູ້ວິໄຈ

# ປະຫວັດຫຍໍ້



| | |
|---|---|
| ຊື່ ແລະ ນາມສະກຸນ | ນາງ ມະນີວັນ ທຳມະວົງສາ |
| ວັນເດືອນປີເກີດ | 03 ມີນາ 1988 |
| ສະຖານທີ່ເກີດ | ບ້ານ ໂພນງາມ ເມືອງ ປາກເຊ ແຂວງ ຈຳປາສັກ |
| ອາຊີບ | ພະນັກງານ |
| ສອນສາຍ | ອະນຸບານ |
| ລະຫັດພະນັກງານ | 103881601002 |

## ປະຫວັດການສຶກສາ

- ປີ1995-2000 ຮຽນຢູ່ໂຮງຮຽນປະຖົມສົມບູນໂພນງາມ ບ້ານໂພນງາມ ເມືອງປາກເຊ ແຂວງຈຳປາສັກ
- ປີ2000-2003 ຮຽນຢູ່ໂຮງຮຽນມັດທະຍົມຕົ້ນໂພນສີໄຄ ບ້ານໂພນສີໄຄ ເມືອງປາກເຊ ແຂວງຈຳປາສັກ
- ປີ2003-2006 ຮຽນຢູ່ໂຮງຮຽນ ມສ ຂົວຕະພານ ບ້ານຂົວຕະພານ ເມືອງປາກເຊ ແຂວງຈຳປາສັກ
- ປີ2006-2007 ສຶກສາຢູ່ທີ່ສ້າງຄູສາລະວັນ ສາຍອະນຸບານ ວຸດທິ ຊັ້ນ ກາງ
- ປີ2012-2015 ສຶກສາຢູ່ທີ່ວິທະຍາໄລຄູກວາງຈີ້ ສາຍອະນຸບານ ວຸດທິ ຊັ້ນ ສູງ
- ປີ2018-2021 ສຶກສາຢູ່ທີ່ວິທະຍາໄລຄູຖ້າຍຫງຽນ ສາຍອະນຸບານ ວຸດທິ ຊັ້ນປະລິນຍາຕີ